**<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>**

**Copyright © 2006 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມ
ຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບ
ລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ,
ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-4
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 5-7
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 5-7
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 8-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8-10
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ຮຽກຮ້ອງໃຫ້ສິດສອນຕາມຫລັກແລະດໍາຣົງຊີວິດໃຫ້ຖືກຕ້ອງ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** 1 ຕີໂມທຽວ 1:1-19

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** 1 ຕີໂມທຽວ ບົດທີ 1

**ຈຸດສໍາຄັນຂອງບົດຮຽນນີ້:** ຄຣິສຕຽນທີ່ສິດສອນຕາມຫລັກ ແລະດໍາເນີນຊີວິດຖືກຕ້ອງຕາມພຣະທັມຂອງພຣະເຈົ້ານັ້ນ ຕ້ອງອີງໃສ່ການຄິດເຖິງພຣະຄຸນແລະຄວາມຮັກຂອງພຣະອົງ

**ຄໍາຖາມເພື່ອສໍາຣວດ:** ແມ່ນຫຍັງທີ່ສໍາຄັນຫລາຍສໍາລັບທ່ານ--ຄວາມເມດຕາຄຸນຂອງພຣະເຈົ້າ ຫລືວ່າການຖືກຖຽງກັນເຣື່ອງສາສນາບໍ່ ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍໃຫ້ໃຜຜູ້ນຶ່ງ ໄດ້ເຂົ້າໃຈໃນຄວາມເມດຕາຄຸນຂອງພຣະເຈົ້ານີ້ຕ້ອງອາສັຍຫລັກຄໍາສອນທີ່ຖືກຕ້ອງແລະດໍາຣົງຊີວິດຖືກຕາມຫລັກຄໍາສອນນັ້ນ.

## ຄໍານໍາ

ວັນນຶ່ງເວລາຂ້າພະເຈົ້າ ຮັບໃຊ້ພຣະເຈົ້າຢູ່ຣັດ ຄາລີຟໍເນັຍ, ຂ້າພະເຈົ້າໄດ້ນັ່ງເບິ່ງນັກເທດຄົນນຶ່ງທີ່ເທສນາອອກໂທຣະທັດ ເບິ່ງເປັນຊົງແປກປລາດ. ນັກເທດນັ່ງຢູ່ເທິງເວທີ ສູບຢາຊີກ້າ ກອກໃຫຍ່ ປະກາດສຽງດັງວ່າ ຖ້າທ່ານຢາກຈະເຫັນ ຂໍ້ເລິກລັບຂອງຄໍາທໍານວາຍ ຂ້າພະເຈົ້າຈະບອກໃຫ້ທ່ານຊາບທັນທີ ຫາກເງິນມີ ເຖິງ............. ຂໍໃຫ້ທ່ານໂທເຂົ້າມາ ຊ່ວຍເຫລືອກັນ, ຜູ້ຟັງຢູ່ໃນນີ້ ກໍຕ້ອງເພີ້ມການຖວາຍຂຶ້ນ ເພື່ອຂ້າພະເຈົ້າຈະໄດ້ເປີດເຜີຍຂໍ້ເລິກລັບທັນທີ.

ນັກເທດທີ່ຄາບກອກຢາ ຢູ່ໃນໂທຣະທັດນີ້ ອາດຈະຄ້າຍກັນກັບນັກເທດທີ່ຢູ່ໃນສມັຍ ອາຈານໂປໂລຊຶ່ງມີການແຂ່ງຂັນກັນຫລາຍໃນເມືອງເອເຟໂຊ. ພວກເຂົາເບິ່ງເຫັນພຣະເຈົ້າຫນ້ອຍດຽວ ແຕ່ສ່ວນໃຫຍ່ແລ້ວແມ່ນຢາກຈະປະກາດເພື່ອເງິນ, ເງິນລູກດຽວ. ພວກເຂົາເປັນຜູ້ທໍານວາຍ ເພື່ອຫວັງຜົນກໍາໄລ.

ໂປໂລຢູ່ໃນເຫດການນີ້, ລາວໄດ້ຮຽກຮ້ອງໃຫ້ຕີໂມທຽວ ນໍາພາຄຣິສຕະຈັກໃຫ້ຖືກຕາມຫລັກຄໍາສອນຢ່າງແທ້ຈິງ. (ຕີໂມທຽວແລະຕີໂຕ ເປັນຜູ້ຮ່ວມວຽກງານກັນ) ບໍ່ແມ່ນແຕ່ເຣື່ອງການສອນເທົ່ານັ້ນ, ໂປໂລຍັງໄດ້ເນັ້ນເຖິງການປົກຄອງ ແລະຄວາມຮັບຜິດຊອບຕ່າງໆດ້ວຍ.

ໃນສມັຍແຕ່ກ່ອນ, ຜູ້ນໍາທັງຫລາຍກໍເຄີຍພົບກັບຄຣູສອນປອມ. ໂປໂລໄດ້ທ້າທາຍໃນການໃຊ້ຊີວິດແບບຢ່າງຂອງຄຣິສຕຽນ, ຈົ່ງຫລີກລ້ຽງນິຍາຍແລະຄໍາສອນທີ່ບໍ່ມີຫລັກ ແລະກົດບັນຍັດທີ່ພວກເຂົາແຕ່ງຕັ້ງຂຶ້ນເພື່ອພວກເຂົາເອງ.

### ຕັກເຕືອນຄຣູສອນເທັດ (1:1-4)

ການຂຽນຈົດຫມາຍ ສ່ວນຫລາຍພວກເຮົາມັກຈະລົງທ້າຍດ້ວຍຊື່ແລະລາຍເຊັນ. ແຕ່ວ່າແບບຂອງໂປໂລແມ່ນຂຽນຊື່ຂອງຕົນເອງ ແລະຜູ້ທີ່ຈະຮັບຂຶ້ນກ່ອນ ແລ້ວກໍຈຶ່ງແມ່ນຄໍາຂອບພຣະຄຸນຕ່າງໆ. ລາວຂຽນຈົດຫມາຍໄປຫາຕີໂມທຽວເປັນການສ່ວນຕົວ ເພື່ອຈະໄດ້ກ່າວເຖິງຊາວເອເຟໂຊທີ່ຢູ່ໃນຄຣິສຕະຈັກ. ສຸດທ້າຍໂປໂລຂຽນວ່າ "ຂໍພຣະຄຸນຈົ່ງດໍາຣົງຢູ່ກັບທ່ານເຖີດ" (ບົດ 6:21) ພວກເຮົາຮູ້ແລ້ວວ່າ ຄົນທີ່ເປັນຄຣູສອນບາງຄົນໃນເມືອງເອເຟໂຊ ໄດ້ຫັນເຫ ໄປຈາກຫລັກຄວາມຈິງຂອງພຣະຄັມພີ. ຢ່າງໃດກໍຕາມ ໂປໂລຍັງໄດ້ສອດແຊກຄວາມເວົ້າຕ່າງໆ ຄ້າຍກັບຄໍາພະຍານ

ມາໃຫ້ຕີໂມທຽວໄດ້ພິຈາຣະນາ. ( ກຈ. 9:15; 22:14-15; 26:14-18 )

ຈິດໝາຍຂອງໂປໂລແມ່ນຈິດໝາຍທີ່ກ່ຽວກັບພຣະຄຸນ (1 ຕທ 1:2; 14) "ພຣະຄຸນ" ເປັນຄຳນຶ່ງຊຶ່ງໂປໂລ ເຮັດເປັນຫົວຂໍ້ເທສນາ ເພາະວ່າ ພຣະເຢຊູຊົງໄຖ່ລາວ, ແລະຍັງເປັນຄຳເວົ້າ ທີ່ຍົກຍ້ອງພຣະເຈົ້າສຳລັບຄົນບາບທີ່ບໍ່ສົມຄວນຈະໄດ້ຮັບ ເໝືອນກັນກັບທ່ານແລະຂ້າພະເຈົ້າ.

ເມື່ອມີການປະກາດວ່າ ຈະສຳແດງສິ່ງອັສຈັນ ຫລື ເປີດເຜີຍສິ່ງທີ່ລຶກລັບ ຜູ້ຄົນທັງຫລາຍກໍສົນໃຈຢາກຈະເຫັນ, ຢາກຈະຮູ້. ຝູງຊົນກໍມາຫໍ່ຫຸ້ມຫລາຍ ແຕ່ການມາຫໍ່ຫຸ້ມນັ້ນ ແມ່ນເພື່ອຈຸດປະສົງຢ່າງອື່ນ ບໍ່ດົນນານທໍ່ໃດຜູ້ຄົນເຫລົ່ານັ້ນກໍຈະລະເລີຍແລະເຫືອດຫາຍໄປ.

ຢູ່ທີ່ເມືອງເອເຟໂຊ ມີຄວາມຫຍຸ້ງຍາກຫລາຍ ເພາະມີຄຣູສອນປອມເກີດຂຶ້ນຫລາຍ ພວກເຂົາພະຍາຍາມຍົວະເຍົ້າຝູງຊົນໃຫ້ເຂົ້າໃຈຜິດໃນຫລັກຄຳສອນໃນພຣະຄັມພີ ພວກເຂົາສອນຜິດແປກອອກໄປຈາກຫລັກ. (1:3)ພວກເຂົາພາກັນສິດສອນ ຕາມຫລັກບັນຍັດຂອງພວກຢິວ ແລະຍັງຈຳກັດຂອບເຂດພຣະຄຸນຂອງພຣະເຈົ້າ.ຍັງບໍ່ພໍທໍ່ນັ້ນພວກເຂົາຍັງມັກຖົກຖຽງເຣື່ອງພຣະທັມ (ເບິ່ງໃນບົດທີ 6:3-4; 20-21)

ການແຍກພຣະຄຸນຂອງພຣະເຈົ້າອອກ ແລ້ວຫັນມາເຊື່ອໂຊກລາບ ຕາມແບບນິຍາຍ ຕາມແບບເຣື່ອງທີ່ແຕ່ງຂຶ້ນໂດຍມະນຸດນັ້ນ ໂປໂລບອກວ່າ ບໍ່ມີປໂຍດ ແລະກໍຍັງເຮັດໃຫ້ຕົວເອງຫລົງໄຫລອອກໄປຈາກຄວາມເຊື່ອ. (4:7)

<u>**ຈົ່ງສແວງຫາຄຳສອນທີ່ຈະເພີ້ມຄວາມເຊື່ອ (1:5-11)**</u>

ພວກເຮົາຮູ້ວ່າເຮັດຢ່າງໃດ ພວກເຮົາຈຶ່ງຈະສາມາດລົດນ້ຳໜັກໄດ້. ຄວາມຈິງແລ້ວ ສູດງ່າຍໜ້ອຍດຽວຄືວ່າ ເຮົາຕ້ອງເຜົາໃໝ້ໄຂມັນໃນຮ່າງກາຍ ທີ່ເຮົາສະສົມອາຫານເຂົ້າໄປດ້ວຍການອອກກຳລັງກາຍ ຫລືບໍ່ກໍຕ້ອງຫລຸດຜ່ອນການສະສົມໄຂມັນລົງ. ພວກເຮົາຈະເພີ້ມຫລືກາຈະລົດນັ້ນ ແມ່ນຂຶ້ນຢູ່ກັບເຮົາເອງ.

ພວກເຮົາຍັງຮູ້ອີກວ່າ ການກິນຜັກ ແລະໝາກໄມ້ ແລະກິນຊີ້ນທີ່ບໍ່ມີໄຂມັນ ແລ້ວກໍຫັດກາຍບໍຣິຫານແດ່ກໍພໍແລ້ວ ເຫັນວ່າສຸຂພາບກໍສົມບູນແລ້ວ. ຍັງມີອີກຫລາຍວິທີທີ່ຈະເຮັດໃຫ້ເຮົາຫລຸດຜ່ອນນ້ຳໜັກໄດ້ຕົວຢ່າງ:(ວິທີທີ່ຈະເຮັດໃຫ້ພວກເຮົາຫລົງໄຫລ)**Chocolate Diet, Ice Cream Diet**, ບາງຄັ້ງຄາວຍັງມີຮອດ ***7-Day-All- you -Can-Eat- Diet,*** ຖ້າວ່າ ກິນສິ່ງເຫລົ່ານີ້ແລ້ວນ້ຳໜັກຫາກຍັງບໍ່ລົງ ຕ້ອງໄດ້ກິນ **PopcornDiet.** ທຸກວັນນີ້ໃຜໆກໍພະຍາຍາມຢາກຫລຸດນ້ຳໜັກ ແຕ່ມັນກໍເປັນໄປໄດ້ຍາກ ເພາະຜູ້ປຸງແຕ່ງອາຫານກໍພະຍາ ຍາມທີ່ຈະເຮັດໃຫ້ອາຫານມີກິ່ນຫອມມີ ຣົດຊາດຊວນໃຫ້ຢາກກິນ.

ເຊັ່ນດຽວກັນ, ສັດຕຣູຂອງອາຈານໂປໂລບໍ່ໄດ້ສົນໃຈໃນພຣະກິດຕິຄຸນ ແລະການຮັບໃຊ້ດ້ວຍການຖວາຍຕົວ.ພວກເຂົາຍັງກ່າວໂຈມຕີອາຈານໂປໂລ ແລະຍັງບິດເບືອນຫລັກຄຳສອນຂອງພຣະເຈົ້າຊຶ່ງນຳພາໂດຍພຣະເຢຊູຄຣິດ (6:3)

ຕີໂມທຽວໄດ້ປິດປາກພວກທີ່ສິດສອນເທັດດ້ວຍການກ່າວວ່າໃຫ້ມີຄວາມຮັກ ຊຶ່ງເກີດມາຈາກໃຈທີ່ບໍຣິສຸດແລະຈົ່ງມີຈິດສຳນຶກອັນແທ້ຈິງໃນຕົນເອງ. (1:5) ໝາຍຄວາມວ່າໃຫ້ຮູ້ສຶກຜິດແລະຮູ້ສຶກຊອບທັມ.

ພວກສອນຜິດພະຍາຍາມສຳແດງຕົນເອງວ່າຕົນເປັນຜູ້ທີ່ຮູ້ຈັກກົດບັນຍັດດີ ແລະກໍປາຖນາຢາກສອນຄົນອື່ນ. ແຕ່ທີ່ຈິງແລ້ວ ພວກເຂົາຢາກເປັນຫົວໜ້າຊຶ່ງໂດຍທີ່ພວກເຂົາບໍ່ຮູ້ຈັກຫຍັງ. ອາຈານໂປໂລໄດ້ສອດແຊກເຂົ້າ

ໄວ້ໃນຂໍ້ 9 ວ່າ ພຣະບັນຍັດມີໄວ້ສຳລັບຄົນອະທຳ ບໍ່ແມ່ນສຳລັບຄົນຊອບທຳ. ພວກເຂົາອາດກ່າວວ່າ ໂປໂລເປັນຄົນທີ່ບໍ່ນັບຖືພຣະບັນຍັດ ແຕ່ກົງກັນຂ້າມໂປໂລຊ້ຳພັດຢັ້ງຢືນວ່າກົດບັນຍັດຂອງພຣະເຈົ້ານັ້ນດີ ແລະເຮົາຄວນຣະມັດຣະວັງ. ຖ້າເຮົາຢູ່ໃນພຣະຄຸນຂອງພຣະເຈົ້າຢ່າງແທ້ຈິງແລ້ວ ເຮົາກໍບໍ່ໄດ້ຢູ່ໃຕ້ກົດບັນຍັດອີກ.

ກົດບັນຍັດມີໄວ້ສຳລັບຄົນດື້ດ້ານ, ຄົນດື້ດ້ານຄືຄົນແນວໃດ? ຄື: ຄົນບໍ່ນັບຖືພຣະເຈົ້າ, ຄົນບາບ, ຄົນໝິ່ນປມາດ, ຄົນລ່ວງປະເວນີ, ຜູ້ຮ້າຍລັກຊັບ, ຄົນຂີ້ຕົວະ, ຄົນທີ່ຂ້າພໍ່ ຂ້າແມ່...... (1:9-10) ຄົນທີ່ດື້ດ້ານແມ່ນຜິດຕໍ່ພຣະບັນຍັດທັງໝົດເຊັ່ນ:

| | |
|---|---|
| "ຄົນທີ່ຂ້າພໍ່ ຂ້າແມ່" | "ຈົ່ງໃຫ້ກຽດບິດາມານດາຂອງເຈົ້າ" ອພຍ 20:12; ພບຍ 5:16 |
| "ຢ່າຂ້າຄົນ" | "ຢ່າຂ້າຄົນ" ອພຍ 20:13; ພບຍ 5:17 |
| "ຄົນລ່ວງປະເວນີ" | "ຢ່າລ່ວງປະເວນີ ຜົວເມັຍເຂົາ" ອພຍ 20:14; ພບຍ 5:18 |
| "ຜູ້ຮ້າຍລັກຊັບ" | "ຢ່າລັກຊັບ" ອພຍ 20:15; ພບຍ 5:19 |
| "ຄົນຂີ້ຕົວະ" | "ຢ່າເປັນພະຍານເທັດ" ອພຍ 20:16 ; ພບຍ 5:20 |

ອາຈານໂປໂລບໍ່ມັກການສອນແບບແປກໆ, (1:3) ບໍ່ມັກການສອນທີ່ຂັດກັບຫລັກຄຳສອນ (1:10) ບໍ່ມັກຜູ້ທີ່ບໍ່ເຫັນດ້ວຍກັບພຣະວັຈນະຂອງພຣະເຢຊູຄຣິດ, (6:3); 2 ຕທ 1:13; 4:3; ຕຕ 1:9, 13; 2:2, 8) ແລະລາວໄດ້ປຽບທຽບຄົນທີ່ເປັນດັ່ງນັ້ນວ່າ ເປັນຄົນອວດອົ່ງທະນົງຕົວ, ແລະບໍ່ຮູ້ຫຍັງເລີຍ (6:4) ຄຳເວົ້າຂອງເຂົາຈະແຜ່ຂຍາຍອອກໄວ (2 ຕທ 2:17)

## ຈົ່ງຕິດຕາມຄວາມເຊື່ອຂອງເຮົາ (1:12-19)

ໃນຂໍ້ທີ 11 ໂປໂລໄດ້ຂອບພຣະຄຸນພຣະເຈົ້າ ທີ່ພຣະອົງຊົງມອບໄວ້ກັບລາວ. ລາວເຄີຍເປັນຕົວເອກໃນການຕໍ່ຕ້ານ ແຕ່ພຣະອົງກໍຍັງຊົງອົດກັ້ນໄວ້ ແລະດ້ວຍພຣະຄຸນອັນນັ້ນລະລາວຈຶ່ງມີຄວາມເຊື່ອແລະຮັບເອົາຊີວິດອັນຕລອດໄປເປັນນິດ. (1 ຕທ 1:14,16)

ເມື່ອກ່າວເຖິງພຣະຄຸນທີ່ນຳພາໃຫ້ໂປໂລມີຄວາມເຊື່ອ, ແລະຄວາມເຊື່ອນຳພາໃຫ້ລາວມີຄວາມຮັກ. ຄວາມເຊື່ອແລະຄວາມຮັກ ແມ່ນຜົນຂອງການພົວພັນ ການມີຄວາມສັມພັນ ກັບພຣະເຈົ້າພຣະຜູ້ຊ່ວຍໃຫ້ພົ້ນ. ພວກຜູ້ຕໍ່ຕ້ານທີ່ເມືອງເອເຟໂຊ ໄດ້ຫັນໜ້າອອກຈາກຄວາມເຊື່ອແລະຄວາມຮັກ (1 ຕທ 1:5-6) ແລະແລ້ວກໍໄດ້ປະຕິເສດພຣະເມດຕາຄຸນຂອງພຣະເຈົ້າ.

ໃນຈົດໝາຍຂອງໂປໂລນີ້ ລາວໄດ້ໃຊ້ຄຳວ່າ "ຄຳນີ້ເປັນຄຳຈິງ" (1:1:15) ແລະລາວຍັງໃຊ້ອີກເຖິງ 4 ຄັ້ງ(3:1; 4:9; 2 ຕທ 2:11; ຕຕ 3:8) ຄຳເວົ້ານີ້ເປັນຄຳເວົ້າທີ່ເໝາະສົມທີ່ສຸດສຳລັບຄຣິສຕະຈັກຂອງພຣະເຢຊູຄຣິດ ທີ່ຫວັງຈະຊ່ວຍຜູ້ທີ່ມີຄວາມຜິດບາບທັງຫລາຍ.

ໂປໂລບໍ່ເຄີຍປ່ອຍປະລະເລີຍຕໍ່ຄວາມບາບ, ລາວເຄີຍຮູ້ວ່າຄວາມບາບເປັນຢ່າງໃດແລະລາວຍັງເວົ້າວ່າລາວເປັນໂຕເອກ (1 ຕທ 1:15) ລາວເຂົ້າໃຈໃນຄວາມບາບໜາສາໂຫດແລະຄວາມເມດຕາຄຸນຂອງພຣະເຈົ້າຢ່າງເລິກເຊິ່ງ .(1:16)

ໂປໂລໄດ້ຮຽກຮ້ອງໃຫ້ຊາວເມືອງເອເຟໂຊ ເບິ່ງເອົາຄວາມເຊື່ອຂອງລາວເປັນຕົວຢ່າງ ຄືດຳຣົງຊີວິດທີ່ມີຄວາມເຊື່ອ ຢ່າໄດ້ກາຍເປັນຄົນທີ່ຫລົງໄປເໝືອນຢ່າງບາງຄົນທີ່ເຂົາກະທຳໄປແລ້ວ ພວກເຂົາຈະອັບປາງລົງແຕ່ລະວັນໆໄປ.

**<u>ຄຳຖາມ</u>**

1. ໃນທຸກວັນນີ້ ຍັງມີຢູ່ບໍ່ຜູ້ທີ່ສອນຜິດຄ້າຍກັບຄຣູສອນປອມທີ່ເມືອງເອເຟໂຊ? ພວກເຂົາເຮັດແບບໃດ?

2. ເປັນຫຍັງຄຣິສຕຽນພວກເຮົາຈຶ່ງມັກຕິດຕາມຄຣູສອນໃໝ່ ທັ້ງໆທີ່ເຂົາບໍ່ເຊື່ອໃນພຣະເຈົ້າ, ແລະບໍ່ແມ່ນຄົນໂບດຊໍ້າ ?

3. ເປັນຫຍັງໂບດທຸກວັນນີ້ ຈຶ່ງບໍ່ເກີດດອກອອກຜົນຕາມທີ່ຄວນ?

4. ເປັນຫຍັງໂປໂລຈຶ່ງເອີ້ນຕົນເອງວ່າເປັນໂຕເອກໃນການເຮັດບາບ?

5. ແມ່ນຫຍັງແມ່ນພື້ນຖານຂອງຄວາມຄິດຂອງໂປໂລ ທີ່ລາວວ່າ "ຫລັກຄຳສອນ"

6. ຄຳວ່າ "ຄຳນີ້ເປັນຄຳຈິງ" ໂປໂລໝາຍເຖິງອັນໃດ?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 2
# ຈົ່ງອະທິຖານເພື່ອສິດເສຣີພາບ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** 1 ຕີໂມທຽວ 2:1-7

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** 1 ຕີໂມທຽວ 2:1-7

**ຈຸດສໍາຄັນຂອງບົດຮຽນນີ້:** ອະທິຖານເພື່ອຜູ້ນໍາ ແມ່ນເຮັດໃຫ້ຕົວເຮົາເອງມີຄວາມສງົບສຸກ ແລະເຮັດໃຫ້ການດໍາເນີນຊີວິດມີສັນຕິສຸກ.

**ຄໍາຖາມເພື່ອສໍາຣວດ:** ເປັນຫຍັງຈຶ່ງອະທິຖານອ້ອນວອນເພື່ອຜູ້ນໍາ ຫລືຜູ້ທີ່ມີຕໍາແຫນ່ງສູງ?

**ຈຸດປະສົງຂອງບົດຮຽນ:** ສອນໃຫ້ເຮົາຮູ້ເຖິງຄວາມສັມພັນໃນການອ້ອນວອນໃຫ້ຜູ້ນໍາ ເພື່ອການດໍາເນີນຊີວິດ ແລະຈະໄດ້ປະກາດພຣະກິດຕິຄຸນຢ່າງເສຣີ.

## ຄໍານໍາ

ໃນປະເທດສະຫະຣັດອະເມຣິກາ ມີປະຊາຊົນນັບຖືສາສນາຕ່າງໆຫລາຍຢ່າງແຕກຕ່າງກັນໄປ, ບາງພວກກໍບໍ່ໄດ້ຖືສາສນາໃດໆເລີຍ ຖືວ່າຕົນເອງເປັນພຣະເຈົ້າ. ບາງພວກກໍຖືສາສນາພໍເປັນສາກບັງຫນ້າ. ບາງພວກກໍຖືສາສນາພໍໄດ້ເປັນການຊ່ວຍເຫລືອ.

ໃນປະເທດລາວເຮົາກໍມີສາສນາທີ່ນັບຖືໄປຫລາຍແບບເຊັ່ນກັນ ເຊັ່ນ: ພຸດ ຄືນັບຖືວັດວາອາຮາມ; ພາມ ແມ່ນນັບຖືຄົນທີ່ມີຄາຖາອາຄົມ ສາມາດໃຫ້ໂຊກໃຫ້ລາບໄດ້; ແລະຖືຜີຕ່າງໆ ແມ່ນການກາບໄຫວ້ວິນຍານທີ່ສິງຢູ່ໃນສະຖານທີ່ຕ່າງໆ.

ຢ່າງໃດກໍຕາມອາຈານໂປໂລ ຂໍຮ້ອງໃຫ້ພວກເຮົາອ້ອນວອນອະທິຖານເພື່ອພວກເຂົາເຈົ້າ ບໍ່ວ່າຈະເປັນຜູ້ປົກຄອງຫລືຜູ້ມີອໍານາດທັງຫລາຍກໍຕາມ. ເພື່ອພວກເຮົາຈະມີສິດເສຣີພາບໃນການປ່າວປະກາດ.

## ອ້ອນວອນອະທິຖານເພື່ອທຸກຄົນ (2:1-2)

ຜູ້ຊ່ຽວຊານຫລາຍທ່ານໄດ້ໃຫ້ທັສນະ ໃນບົດທີ 2 ແລະ 3 ວ່າ ແມ່ນບົດພິເສດສໍາລັບການຈັດຣະບຽບຂອງຄຣິສຕະຈັກໂດຍສະເພາະ. ເມື່ອເບິ່ງຄັກໆແລ້ວຈະເຫັນໄດ້ວ່າໂປໂລກໍາລັງປະເຊີນຫນ້າກັບພວກທີ່ຕໍ່ຕ້ານລາວ. ພວກເຂົາກ່າວວ່າພຣະເຈົ້າຂອງໂປໂລມີຂອບເຂດຈໍາກັດໃນການໃຫ້ຄວາມລອດພົ້ນ. ລາວບໍ່ຢາກໃຫ້ມີການເຂົ້າໃຈຜິດ ລາວຈຶ່ງກ່າວໃນຂໍ້ 2 ວ່າ ເພື່ອເຮົາຈະໄດ້ໃຊ້ຊີວິດຢູ່ຢ່າງງຽບໆ ແລະສງົບສຸກ.

ອາຈານໂປໂລໄດ້ກ່າວ ໃນພາກທີ່ຜ່ານມາຢ່າງຈະແຈ້ງແລ້ວວ່າ ຄວາມລອດພົ້ນແມ່ນຫມາກຜົນທີ່ມາຈາກພຣະເຈົ້າ ຄືພຣະເມດຕາຄຸນ ເຫມືອນທີ່ໂປໂລໄດ້ຮັບຈາກພຣະເຈົ້າດ້ວຍຕົວຂອງລາວເອງ. (1ຕທ 1:12-17) ໂປໂລເຄີຍໄດ້ສນັບສນູນ ໃນການສິດສອນຂອງຄຣິສຕຽນແລ້ວ. "ພຣະເຢຊູຄຣິດໄດ້ສະເດັດມາໃນໂລກ ເພື່ອຈະໄດ້ຊົງຊ່ວຍຄົນບາບໃຫ້ພົ້ນ" (1 ຕທ 1:15) ໃນບົດທີ 2 ໂປໂລກໍຍັງສືບຕໍ່ເນັ້ນຫນັກປະກາດເຖິງເຣື່ອງຄວາມລອດພົ້ນຢູ່. ແລະກໍແມ່ນພຣະຄຣິດພຽງຜູ້ດຽວເທົ່ານັ້ນຊຶ່ງຄົນກາງແລະເປັນຜູ້ໄຖ່ໄດ້. (2:4-6)

ການອ້ອນວອນອະທິຖານຂອງ ໂປໂລແມ່ນໃຫ້ແນໃສ່ຄວາມລອດພົ້ນເປັນສ່ວນໃຫຍ່ ແລະຄວາມລອດພົ້ນນີ້ກໍແມ່ນເພື່ອຄົນທັງປວງ. (2:1) ສຳຄັນທີ່ສຸດຄືລາວໃຊ້ຄຳວ່າຄົນທັງປວງ ເພາະໃນວັກນີ່ງສັ້ນໆ ລາວໄດ້ໃຊ້ຄຳວ່າ "ຄົນທັງປວງ" ເຖິງ ສີ່ ຄັ້ງ (2:1,2,4,6) ເພາະວ່າພຣະເຈົ້າຕ້ອງການໃຫ້ທຸກຄົນໄດ້ຮັບຄວາມລອດພົ້ນຮວມທັງກະສັດທັງຫລາຍແລະຄົນທັງຫລາຍ.

ສຳລັບຄຣູສອນປອມແລ້ວ ພວກເຂົາຈະພະຍາຍາມຫາຄວາມໃສ່ຮ້າຍປ້າຍສີໂບດ, ລົດຄຸນຄ່າຂອງໂບດ, ແລະນຳຄວາມບໍ່ດີມາສູ່ໂບດ. ຄຣິສຕຽນພວກເຮົາຊໍ້າພັດກົງກັນຂ້າມກັບພວກເຂົາເຫລົ່ານີ້ ຄືຕ້ອງດຳຣົງຊີວິດໃຫ້ສົມກັບພຣະນາມຂອງພຣະເຈົ້າ. ເຫມືອນດັ່ງໂປໂລໄດ້ສອນໄວ້ໃນ 1 ທສ 4:11-12, ກຳຊັບໄວ້ໃນ 1 ຕທ 5:13 ແລະ 2 ທສ 3:11 ; ຖ້າວ່າເຮົາຫາກດຳເນີນຊີວິດທີ່ດີທີ່ສຸດແລ້ວ ເຮົາຈະສາມາດດຶງເອົາກຽດແລະຊື່ສຽງຂອງໂບດກັບຄືນມາໄດ້.

ໂປໂລປາຖນາໃຫ້ໂບດໄດ້ຮັບຊັຍຊະນະໃນການເຊື່ອຖື, ລາວຢາກໃຫ້ຄົນທາງນອກເຫັນຄວາມສຳຄັນຂອງໂບດ ລາວບໍ່ຢາກໃຫ້ຄົນຂ້າງນອກເອົາຊື່ສຽງຂອງພຣະເຈົ້າໄປຫລິ້ນ ຫລືນຳໄປວິຈານ. ໃນ ໂຣມ 13:1-5ລາວກ່າວວ່າທຸກຄົນຈົ່ງຍອມຢູ່ໃຕ້ການບັງຄັບຂອງຜູ້ທີ່ມີອຳນາດ ເພາະອຳນາດຕ່າງໆກໍແມ່ນມາຈາກພຣະເຈົ້າ. ຜູ້ທີ່ເຊື່ອຟັງກົດຫມາຍບ້ານເມືອງທັງຫລາຍເຮັດໃຫ້ໂບດຈເຣີນຂຶ້ນ. ໂປໂລບໍ່ຢາກໃຫ້ມີການຂັດຂວາງໃດໆຈາກການປົກຄອງ, ແຕ່ເມື່ອພະຍາຍາມແລ້ວຄວາມຫວັງກໍຍັງບໍ່ປາກົດອອກມາ ລາວຈຶ່ງພະຍາຍາມທີ່ຈະຂຍາຍເຂົ້າໄປສູ່ວົງການເມືອງ. ຄະນະບັບຕິສຂອງພວກເຮົາຈຶ່ງເປັນຄະນະທີ່ຖືການອ້ອນວອນອະທິຖານເປັນສ່ວນໃຫຍ່. ພວກເຮົາປ່າວປະກາດວ່າເສັ້ນທາງດຽວເທົ່ານັ້ນທີ່ຈະເຂົ້າໃນແຜ່ນດິນສວັນໄດ້ (ຢຮ 14:6) ດັ່ງນັ້ນພວກເຮົາຈຶ່ງບໍ່ເຫັນພ້ອມໃນການນະມັສການວັດຖຸສິ່ງຂອງໃນໂລກນີ້.

ທ່ານ Isaac Backus (1724-1806) ເປັນຜູ້ນຶ່ງທີ່ກ່າວກ່ຽວກັບສິດທິໃນການນັບຖືສາສນາຕ່າງໆ ໃນສະຫະຣັດອະເມຣິກາໄດ້ກ່າວວ່າ ສາສນາທີ່ແທ້ຈິງນັ້ນແມ່ນການນັບຖືພຣະເຈົ້າດ້ວຍຄວາມສມັກໃຈ.

ຣັຖທັມມູນຂອງອະເມຣິກາຄັ້ງທຳອິດໄດ້ເຜີຍແຜ່ອອກມາ ໃນປີ 1787, ຄະນະບັບຕິສຕົກຕລຶງເພາະວ່າຣັຖທັມມູນປາກົດອອກມານັ້ນບໍ່ມີຂໍ້ໃດເລີຍທີ່ກ່າວເຖິງສິດທິການນັບຖືສາສນາ. ບັບຕິສຈຶ່ງຫນູນໃຫ້ John Leland (1754-1841) ໃຫ້ມີການແກ້ໄຂດັດແປງຣັຖທັມມູນໃຫມ່. James Madison ປະທານາທິບໍດີຄົນທີ 4 ຂອງສະຫະຣັດອະເມຣິກາ ໂດຍມີຄະນະບັບຕິດຢູ່ເບື້ອງຫລັງໄດ້ແຕ່ງຕັ້ງກົດຣັຖທັມມູນຂຶ້ນໂດຍໃສ່ໃນຂໍ້ທຳອິດວ່າ "ສະພາຄອງກຣິດຈະບໍ່ມີກົດຫມາຍຫລືຂໍ້ຫ້າມໃດໆທັງຫມົດໃນການປະຕິບັດສາສນາ"

## <u>ຈຸດປະສົງຂອງການອ້ອນວອນອະທິຖານ (2:3-7)</u>

ພວກເຮົາກັບເຂົ້າມາຫາເຣື່ອງຄວາມຣອດພົ້ນ ໂປໂລກ່າວວ່າຍັງມີຫລາຍເຫດຜົນທີ່ຄຣິສຕຽນເມືອງເອເຟໂຊຈຳເປັນຕ້ອງໄດ້ອະທິຖານເພື່ອທຸກໆຄົນ: (1) ພຣະເຈົ້າຊົງພໍພຣະທັຍໃນການອະທິຖານເພື່ອທຸກຄົນເພາະພຣະອົງຊົງມີພຣະປະສົງຢາກໃຫ້ທຸກຄົນໄດ້ຮັບຄວາມລອດພົ້ນ. (2) ຄວາມລອດເປັນຂອງທຸກໆຄົນຊຶ່ງຄົນ ກາງແມ່ນພຣະເຢຊູ (2:6) ແລະ(3) ຮວມທັງຄົນຕ່າງຊາດດ້ວຍ ຊຶ່ງໂປໂລຖືກເອີ້ນເຂົ້າມາກະທຳການນີ້(2:7)

ພຣະເຈົ້າບໍ່ແມ່ນຈະພໍພຣະທັຍໃນຄົນບາງຄົນຫລືພວກທີ່ມີຕຳແຫນ່ງສູງ ທີ່ໄດ້ຮັບຄວາມລອດເທົ່ານັ້ນ. ພຣະອົງປາຖນາໃຫ້ທຸກຄົນໄດ້ຮັບພຣະກິດຕິຄຸນຂອງພຣະອົງ(2:4). (ໃຫ້ສົມທຽບໃສ່ກັບ ຟີລິບປອຍ 1:28 ແລະ 1 ເທສະໂລນີກ 5:9) ພວກທີ່ສອນປອມໄດ້ຕັດຍອດທີ່ສຳຄັນໆອອກ ແລ້ວກໍເອົາມາສົນທະນາກັນວ່າອັນໃດຄືອັນໃດ. ເພື່ອຈະແກ້ບັນ

ຫານີ້ ໂປໂລບອກວ່າ **ພຣະເຈົ້າຊົງມີແຜນການເພື່ອທຸກໆຄົນ**, ລາວໄດ້ຍົກຂ່າວປະເສີດຂອງພຣະເຈົ້າຂຶ້ນມາ. ແລະຍັງໄດ້ຍົກຕົວຢ່າງເຣື່ອງຂອງລາວເອງຂຶ້ນມາເພື່ອເປັນຕົວຢ່າງໃນຄວາມພົ້ນ.

ໂປໂລຍັງໄດ້ເນັ້ນໜັກອີກວ່າມີພຣະເຈົ້າອົງດຽວ ແລະມີຄົນກາງແຕ່ພຽງຜູ້ດຽວຣະຫວ່າງພຣະເຈົ້າກັບມະນຸດ. ປວັດສາດຂອງຄົນອິສຣາເອນແຕ່ເກົ່າກ່ອນ ເຖິງແມ່ນວ່າຈະມີຫລາຍພຣະມີຫລາຍເຈົ້າແລະມີຫລາຍຂະນົບທັມນຽມປານໃດກໍຕາມ ເພາະການບໍ່ໄດ້ຢູ່ຖິ່ນເດີມຕລອດໄປ ຍ້າຍໄປບ່ອນນັ້ນບ່ອນນີ້ຢູ່ເລື້ອຍໆ ແຕ່ພວກເຂົາກໍຍັງກ່າວວ່າມີພຣະເຈົ້າພຽງອົງດຽວ. ຄົນອິສຣາເອນກໍຍັງບໍ່ເຄີຍໄດ້ກ່າວວ່າເປັນພຣະເຈົ້າທີ່ບໍ່ເປີດ ກວ້າງໃຫ້ທຸກຄົນ. ທີ່ວ່າມີພຣະເຈົ້າອົງດຽວນັ້ນໝາຍຄວາມວ່າ ພຣະເຢຊູຄຣິດພຽງ**ຜູ້ດຽວສາມາດເປັນ**ພຣະເຈົ້າໄຖ່ຄວາມບາບຂອງມະນຸດທັງຫລາຍໄດ້, ຊຶ່ງເຫັນໄດ້ໃນການສິ້ນພຣະຊົນຂອງພຣະອົງເທິງໄມ້ກາງແຂນ. ສະນັ້ນຈຶ່ງເປັນເວລາອັນສົມຄວນແລ້ວທີ່ຈະຮັບພຣະຄຸນຈາກພຣະອົງເຈົ້າ (1ຕທ 2:6)

ບາງພວກບາງຄະນະກໍກ່າວວ່າພຣະເຢຊູຕາຍເພື່ອບາງຄົນ, ບໍ່ເປັນຄວາມຈິງ ພຣະເຢຊູເພື່ອທຸກຄົນທີ່ເຊື່ອໃນພຣະອົງ. ພຣະເຈົ້າຊົງມີແຜນການຊ່ວຍຄົນບາບທັງຫລາຍແຕ່ສມັຍເອວາແລະອາດາມພະລາດລົ້ມຄັ້ງແຣກ. ໃນສມັຍພຣະຄັມພີໃຫມ່ກໍເຊັ່ນດຽວກັນພຣະອົງຍັງຄົງຮັກສາຄໍາເວົ້າເດີມ ຄືວ່າພຣະອົງເພື່ອຄົນທັງປວງ ໃຫ້ເບິ່ງຂໍ້ພຣະຄັມພີດັ່ງຕໍ່ໄປນີ້ (ອຊຢ 53:6; 1 ຕທ 2:1-6; 4:10; 1 ຢຮ 2:2) ຂໍ້ພຣະຄັມພີ ໄດ້ບັນທຶກໄວ້ຢ່າງຈະແຈ້ງວ່າພຣະເຢຊູຄຣິດເປັນພຣະຜູ້ຊ່ວຍໃຫ້ພົ້ນສໍາລັບມະນຸສໂລກທັງຫລາຍ. (ຢຮ 1:29; 3:16) ບາງຂໍ້ພຣະຄໍາພວກເຮົາຈະເຫັນວ່າພຣະເຢຊູໄດ້ສິ້ນພຣະຊົນເພື່ອຄົນຂອງພຣະອົງ ຄໍານີ້ກໍຍັງລວມໄປເຖິງທຸກໆຄົນ ເພາະທຸກຄົນເປັນສິພຣະຫັດຂອງພຣະອົງ (ມທ 1:21; ຢຮ 10:11; ກຈ 20:28; ອຟ 5:25)

ແຕ່ກ່ອນຄະນະບັບຕິສກໍຍອມຮັບວ່າພຣະເຢຊູບໍ່ໄດ້ຕາຍເພື່ອທຸກຄົນ, ແຕ່ເມື່ອມາສຶກສາຢ່າງຖີ່ຖ້ວນເຖິງການສິດສອນຂອງຄຣູສອນປອມໃນເມືອງເອເຟໂຊ ແລ້ວເຫັນວ່າໂປໂລໄດ້ແກ້ໄຂບັນຫານີ້ໄດ້ດີ. ລາວໄດ້ຢຸດວັກການຂຽນຈົດໝາຍລົງດ້ວຍການເປັນຕົວຢ່າງທີ່ດີແລະສອນແຕ່ຄວາມຈິງ.

ໂປໂລຮ້ອງຕົວເອງວ່າເປັນຜູ້ປະກາດແກ່ຄົນຕ່າງຊາດ, ພວກທີ່ຂັດຂວາງພຣະທັມຂອງພຣະເຈົ້າ ດັ່ງນັ້ນເມືອງເອເຟໂຊຈຶ່ງຕ້ອງການຈອະທິຖານຫລາຍທີ່ສຸດ.

<u>**ຄໍາຖາມ**</u>

1. ເປັນຫຍັງຄຣິສຕຽນທັງຫລາຍຈຶ່ງບໍ່ສໍາເຣັດໃນການອ້ອນວອນອະທິຖານເພື່ອຄົນທັງຫລາຍທີ່ຕ້ອງການຄວາມຣອດພົ້ນຈາກພຣະເຢຊູຄຣິດ?

2. ເປັນຫຍັງໂປໂລຈຶ່ງໃຊ້ຄໍາວ່າ "ຄົນທັງປວງ" ເຖິງ 4 ເທື່ອ?

3. ເປັນຫຍັງພວກເຮົາຈຶ່ງຢາກໃຫ້ພວກກະສັດພວກຜູ້ມີອໍານາດປົກຄອງຮັບຮູ້ໃນການເຊື່ອຖືສາສນາຂອງພວກເຮົາ?

4. ເປັນຫຍັງຄະນະບັບຕິສຈຶ່ງເຕີບໃຫຍ່ຂຶ້ນຖ້າມກາງການຂົ່ມເຫັງ ແລະກໍໄດ້ກາຍມາເປັນຄະນະທີ່ໃຫຍ່ທີ່ສຸດໃນຄຣິສຕຽນທັງຫລາຍ?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 3
# ໜ້າທີ່ຂອງຜູ້ຍິງແລະຜູ້ຊາຍໃນຄຣິສຕະຈັກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຕີໂມທຽວ 2:8-15

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຕີໂມທຽວ 2:8-15

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຍິງແລະຜູ້ຊາຍທີ່ເປັນຄຣິສຕຽນຄວນດຳເນີນຊີວິດທີ່ເປັນໜ້າໂຄຣົບນັບຖື ໃຫ້ສົມກັບເປັນຄົນທີ່ນັບຖືພຣະເຈົ້າ

**ຄຳຖາມເພື່ອສຳຣວດ:** ຜູ້ຍິງຄວນຈະດຳເນີນຊີວິດຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະສະແດງວ່າຄຳສອນຂອງໂປໂລຍັງຄົງມີຄວາມໝາຍຕໍ່ຄຣິສຕະຈັກ ແລະຍັງເປັນສິ່ງນຳພາການປະພຶດປະຕິບັດສຳລັບຊາຍແລະຍິງດ້ວຍ.

## ຄຳນຳ

ນາງມີການຕັດສິນໃຈທີ່ຍິ່ງໃຫຍ່ທີ່ສຸດ. ໃນການເດີນທາງຫລາຍກວ່າ 8,000 ໄມລ໌ ຄື ຈາກເມືອງ ອາມາຣິລໂລ, ຣັຖເທັກຊັສ ເຖິງ ປະເທດ ອູກັນດາ ທະວີປອັຟຣິກາ ເພື່ອຈະໄປແບ່ງປັນພຣະກິດຕິຄຸນຂອງພຣະເຢຊູ. ນາງເປັນເມັຽຂອງອາຈານ. ອາຈານແລະລາວມີຄວາມເສັຽໃຈຫລາຍ ເພາະໃນການເດີນທາງຄັ້ງນີ້ ບໍ່ຊາບວ່າດ້ວຍເຫດອັນໃດອາຈານກໍເຈັບລົງຢ່າງກະທັນຫັນ. ອາຈານບໍ່ສາມາດທີ່ຈະເທສນາໄດ້. ແຕ່ວ່າໃນການເດີນທາງຄັ້ງນີ້ ຈຸດປະສົງສ່ວນໃຫຍ່ ແມ່ນການປະກາດເຣື່ອງຂອງພຣະເຢຊູຊຶ່ງນຳໂດຍອາຈານ. ຜົວແລະເມັຍພາກັນນັ່ງງຽບ ບໍ່ຮູ້ຈະເຮັດຢ່າງໃດ.

ເມັຽຂອງອາຈານຕ້ອງເປັນຜູ້ຕັດສິນໃຈ. ປະຊາຊົນຊາວອູກັນດາກໍບອກວ່າ ເຖິງແມ່ນອາຈານຈະເຈັບໜັກກໍຕາມການຟື້ນຟູຈະຢຸດບໍ່ໄດ້ເປັນເດັດຂາດ. ຫວນເຖິງຄຣິສຕະຈັກຂອງຕົວເອງແລ້ວນາງບໍ່ເຄີຍຄິດເລີຍວ່າຈະເປັນນັກເທດ. ລາວຈະເຮັດໃຫ້ຊາວອູກັນດາທັງຫລາຍທີ່ຫິວກະຫາຍພຣະຄຳຂອງພຣະເຈົ້າຜິດຫວັງບໍ່? ຢູ່ປະເທດອະເມຣິກາ ຄະນະຊາວເທັ້ນບັບຕິສຈຳກັດບໍ່ໃຫ້ຜູ້ຍິງຂຶ້ນເທສນາທີ່ຮ້ານທັມມາດ. ລາວຈະນຳເອົາກົດຣະບຽບນັ້ນຂ້າມທະວີບມາດ້ວຍບໍ່? ລາວຈະປ່ອຍໃຫ້ສິ່ງເລັກນ້ອຍເຫລົ່ານັ້ນມາສະກັດກັ້ນການປ່າວປະກາດຂອງພຣະເຈົ້າບໍ່? ຖ້າຢ່າງນັ້ນ ນາງຄວນຈະຂຶ້ນເທສນາແທນຜົວຂອງນາງບໍ່? ຖ້ານາງຂຶ້ນເທສນາເວລາກັບບ້ານ ຄຣິສຕະຈັກຂອງລາວຢູ່ທາງອະເມຣິກາຈະວ່າຢ່າງໃດ? ພຣະຄັມພີສອນວ່າຢ່າງໃດກ່ຽວກັບຜູ້ຍິງທີ່ເທສນາຫລືສິດສອນ?

ຄຳຖາມທັງໝົດນີ້ ແລ່ນວົນວຽນໄປມາໃນຫົວຂອງເມັຽອາຈານ ເພາະວ່າລາວຈະຕ້ອງໄດ້ຕັດສິນໃຈຢ່າງໃຫຍ່ຫລວງ--ການຕັດສິນໃຈເຮັດໃຫ້ລາວເຂົ້າໃຈຣະຫວ່າງເວລາມີນ້ອຍ, ຄວາມຈິງຂອງພຣະຄັມພີ ແລະຂອບເຂດ, ຂະນົບທັມນຽມປະເພນີ. ລາວຈະຂຶ້ນເທສນາ ຫລືຈະນັ່ງງຽບຢູ່?

### ອ້ອນວອນ ອະທິຖານເພື່ອສັນຕິສຸກ (2:8)

ໃນຕອນທີ່ຜ່ານມາ 1 ຕີໂມທຽວ 2:1-7 ໂປໂລໄດ້ຮຽກຮ້ອງໃຫ້ອະທິຖານ ເພື່ອທຸກຄົນໃຫ້ໄດ້ຮັບຄວາມລອດພົ້ນ. ໃນວັກນີ້ໂປໂລຈຶ່ງໄດ້ເລີ້ມຄຳວ່າ "ເຫດສັນນັ້ນ" (1 ຕທ 2:8) ກໍໝາຍຄວາມວ່າລາວຢາກໃຫ້ຜູ້ຊາຍທັງຫລາຍເນັ້ນໜັກໃນການອະທິຖານຢູ່ໃນທຸກໆສະຖານທີ່ ແທນທີ່ຈະເອົາຄວາມໂມໂຫໂທໂສແລະຖົກຖຽງຢ່າງບໍ່ເປັນປໂຍດ.

ເປັນຫຍັງຈຶ່ງວ່າຢ່າງນີ້, ຄຳສອນຈາກຄຣູສອນປອມ ເປັນຄຳສອນທີ່ແປກປລາດ ຊຶ່ງກະທຳໃຫ້ມີການຂັດແຍ່ງກັບຄວາມກ້າວໜ້າທາງດ້ານຈິດວິນຍານ. (6:4)

ການອະທິຖານແມ່ນການຍົກຄວາມສຳຄັນ ແລະຍົກພຣະກຽດໃຫ້ກັບພຣະເຈົ້າ, ແຕ່ຖ້າການອະທິຖານປະກອບດ້ວຍຄວາມຄຽດຮ້າຍ ແມ່ນການອະທິຖານທີ່ບໍ່ໄດ້ຮັບຜົນຕອບແທນອັນໃດເລີຍ ແລະກໍຍັງເປັນການເສັຽເວລາລ້າໆ. ຄຳແນະນຳເຣື່ອງການອະທິຖານພຣະທັມຄັມພີເດີມກໍໄດ້ກ່າວຕັກເຕືອນໄວ້ຕລອດເວລາເຊັ່ນ: ອພຍ 30:19-21; ພສສ 24:4; ອຊຢ 1:15; 59:3.

## ເຄື່ອງປະດັບທີ່ສິ່ງແສງຣະຍິບຣະຍັບ (2:9-10)

ຄຳປະກາດຣະບຽບຂອງໂບດສຳລັບຜູ້ທີ່ຈະໄປແຄັມຂອງຊາວໜຸ່ມ. ຫ້າມໃສ່ເສື້ອຊ້ອນທີ່ມີສາຍນ້ອຍເກີນໄປ, ຫ້າມນຸ່ງສັ້ນເກີນໄປ, ຫ້າມນຸ່ງຊຸດອາບນ້ຳ.....ບາງສະຖານທີ່ກໍມີຂໍ້ຫ້າມເຊັ່ນ ຫ້າມສູບຢາ, ຫ້າມນຳອາຫານເຂົ້າມາ, ຫ້າມເສບຂອງມຶນເມົາ......ດັ່ງນີ້ເປັນຕົ້ນ. ເຫມືອນກັບຄຣິສຕະຈັກໃນສັຕວັດແຣກ ຫລືຄຣິສຕະຈັກໃນສັຕວັດທີ ຊາວເອັດກໍຕ້ອງມີຣະບຽບການນຸ່ງຖືໃຫ້ເຫມາະສົມ. ຖ້າທ່ານຫາກມີໂອກາດໄດ້ເຂົ້າໄປຢ້ຽມຢາມມະຫາວິທະຍາລັຍທຸກມື້ນີ້ທ່ານຈະໄດ້ເຫັນແຟຊັ່ນແບບຕ່າງໆ ເຊັ່ນ: ຜູ້ຊາຍໃສ່ຕຸ້ມຫູ, ຜູ້ຍິງກໍໃສ່ຕຸ້ມຫູ, ຕຸ້ມປາກ, ຕຸ້ມລີ້ນ, ນຸ່ງສົ້ງກົ້ນເຕື່ອຍ, ໃສ່ສົ້ງເສື້ອເຂີນຈົນວ່າ........

ໂປໂລບໍ່ໄດ້ຂຽນຈົດຫມາຍເພື່ອເປັນກົດຣະບຽບຂອງແຄັມ ແຕ່ລາວຂຽນເພື່ອຜູ້ຍິງຄຣິສຕຽນທຸກຄົນໃນການນຸ່ງຖື. ຜູ້ຍິງຄຣິສຕຽນບາງຄົນທີ່ເມືອງເອເຟໂຊພະຍາຍາມແຕ່ງຕົວເກີນຮີດຄອງປະເພນີ ໂດຍບໍ່ໄດ້ຄຳນຶງວ່າຕົນເອງເປັນຄຣິສຕຽນ. ຜູ້ທີ່ສລາດປາດເປື່ອງຄົນນຶ່ງກ່າວວ່າ: " ສເນ່ເປັນຂອງຫລອກລວງ ແລະຄວາມງາມກໍບໍ່ມີປໂຍດຫຍັງ ແຕ່ສັດຕຣີທີ່ຢຳເກງພຣະເຈົ້າສົມຄວນໄດ້ຮັບການສັຣເສີນ " (ສພສ. 31:30)

ເມື່ອໂປໂລກ່າວເຖິງການເປັຽຜົມ ຄຳ ເງິນ ມຸກ ແລະເຄື່ອງເອ້ທີ່ມີຣາຄາຕ່າງໆ ເ ຮັດໃຫ້ພວກເຮົາຮູ້ວ່າເວລານັ້ນມີນ້ອຍໃນການທີ່ມາເນັ້ນຫນັກໃນການເອ້ອວດ. ຄຣູສອນປອມອາດຈະບອກວ່າ ຕ້ອງແຕ່ງຕ້ອງແປງໃຫ້ງາມກວ່າຫມູ່ ໃຫ້ເຫັນເດັ່ນຊັດໄປເລີຍ. ຂໍ້ 9 ແລະ 10 ພວກຜູ້ຍິງໃຫ້ແຕ່ງຕົວສຸພາບຮຽບຮ້ອຍບໍ່ແມ່ນດ້ວຍເກົ້າຜົມເກີນແບບ (ພົບຄວາມສຸກ) ຫລືປະດັບກາຍດ້ວຍເຄື່ອງຄຳແລະໄຂ່ມຸກ ຫລືເສື້ອຜ້າຣາຄາແພງ. ທີ່ໂປໂລກ່າວມານີ້ ແມ່ນຢ່າເຮັດໂລດໂພນເກີນໄປ. ຈະແຕ່ງຫລືຈະແປງກໍໃຫ້ພວກເຮົາຄຳນຶງວ່າເຮົາເປັນຄົນທີ່ຮັກພຣະເຈົ້າ.

ທີ່ໂປໂລຕັກເຕືອນຢ່າງນີ້ກໍເພາະວ່າອາດມີແມ່ຫມ້າຍບາງຄົນທີ່ຮັ່ງມີ ແລ້ວກໍແຕ່ງຕົວເພື່ອເຮັດໃຫ້ຄົນອື່ນສົນໃຈ ຫລືວ່າເພື່ອດຶງດູດສິ່ງໃດສິ່ງນຶ່ງ. ລາວຕັກເຕືອນເຫມືອນຄົນຢູ່ໃນຄອບຄົວດຽວກັນ ວ່າການເອ້ອວດເຍົ້າຍວນແມ່ນທີ່ມາຂອງຄວາມບໍ່ຊື່ສັດ ເຮັດໃຫ້ຕົວເອງການເປັນເຫຍື່ອຂອງສິ່ງບໍ່ດີ, ໃຫ້ປະດັບຕົວດ້ວຍການກະທຳດີ. (2:10)

ໃນຈົດຫມາຍສະບັບນີ້ໂປໂລກ່າວວ່າ ການກະທຳດີເປັນສິ່ງທີ່ຍຶດຫນ່ຽວຕົວເຮົາເອງ ໃຫ້ມີຄວາມສັມພັນທີ່ດີໃນພຣະເຈົ້າ ດັ່ງໃນພຣະທັມໂຣມ 2:6-7; 13:3; 2ກທ 9:8; ອຟ 2:10; ຟປ 1:6; ກຊ 1:10; 2 ທຊ 2:17. ສຳລັບພວກປະກາດປອມແລ້ວແມ່ນຈະນຳເຮົາເຂົ້າສູ່ຄວາມບໍ່ດີ ແລະເຂົ້າສູ່ການຫລອກລວງຂອງມານ.

## ຄຳສອນຈາກພວກຜູ້ຍິງ (2:11-15)

ຫລາຍຂໍ້ ຫລາຍຕອນໄດ້ກ່າວເຖິງຄວາມດີຂອງຜູ້ຍິງຄື:

- ຜູ້ຍິງອາວຸໂສຄວນສິດສອນ ຜູ້ຍິງໜຸ່ມ ( ຕຕ 2:3-5 )

- ຕີໂມທຽວໄດ້ຮຽນມາຈາກແມ່ແລະແມ່ຕູ້ (2 ຕທ 1:5; 3:15)
- Priscilla & Aquila ໄດ້ສອນ ອາໂປໂລ (ກຈ 18:26)
- ໂປໂລຮູ້ວ່າ ຟີລິບມີລູກສາວສີ່ຄົນເປັນຜູ້ປະກາດ (ກຈ 21:8-9)

ໂປໂລໄດ້ຍົກຍ້ອງພວກຜູ້ຍິງທີ່ດຳເນີນຊີວິດທີ່ເປັນຕົວຢ່າງ ຖ້າຢ່າງນັ້ນເປັນຫຍັງລາວຈຶ່ງກ່າວວ່າໃຫ້ຜູ້ຍິງຮຽນຮູ້ຢ່າງງຽບໆ. ແລະດ້ວຍໃຈອ່ອນນ້ອມ. ສຳລັບພຣະທັມຕອນນີ້ພວກເຮົາຢາກຈະສົມທຽບໃສ່ກັບ1 ກທ 14:34-35. ບົດນີ້ແມ່ນຈະແຈ້ງວ່າ ຜູ້ຍິງບາງຄົນໃນເມືອງໂກຣິນໂທປະພຶດຕົວເອງເໜືອຜູ້ຊາຍ.ແລະບາງຄົນກໍເປັນຄົນເວົ້າຫລາຍແດ່ (1 ຕທ 5:13).

ຂ້າພະເຈົ້າຢາກເວົ້າວ່າຜູ້ຍິງຫລືຜູ້ຊາຍກໍຕາມ ໃຫ້ຢູ່ຢ່າງສງົບສຸກກັບທຸກຄົນແລະຕັ້ງໃຈທຳງານດ້ວຍມືຂອງຕົວເອງ. ຄວາມຈິງແລ້ວ ໂປໂລກໍຍັງໄດ້ຫນູນໃຈໃຫ້ພວກຜູ້ຍິງຢູ່ພາຍໃຕ້ການນຳພາຂອງສາມີຂອງຕົນ. ໃນຂໍ້ 12 ໂປໂລກ່າວວ່າ "ເຮົາບໍ່ອະນຸຍາດໃຫ້ຜູ້ຍິງສັ່ງສອນຫລືໃຊ້ອຳນາດເໜືອຜູ້ຊາຍ ແຕ່ໃຫ້ເຂົາມິດງຽບຢູ່" ເວລານີ້ມານກຳລັງໂຈມຕີຄຣິສຕະຈັກເມືອງເອເຟໂຊ ໃນນັ້ນກໍມີຜູ້ຍິງເປັນຕົວເສີມຂຍາຍບັນຫາເຫມືອນດັ່ງກັບ ນາງເອວາທີ່ໄດ້ພະລາດລົ້ມໃນຄວາມບາບແລ້ວກໍແຜ່ຂຍາຍມາຈົນເຖິງພວກເຮົາທຸກຄົນ.

ຂໍ້ພຣະຄັມພີສຸດທ້າຍ ເປັນຂໍ້ທີ່ຍາກ ເພາະເບິ່ງຄືວ່າ ຜູ້ຍິງມີຄວາມຜິດຫລາຍແທ້ໆ. ດ້ວຍຄວາມຮັກພຣະອົງກໍຊົງໃຫ້ພົ້ນໄດ້ເໝືອນກັນ ໂດຍຜູ້ຍິງເປັນຜູ້ໃຫ້ກຳເນີດມະນຸດທຸກໆຄົນ. (2:15) ເຖິງປານນັ້ນ ໂປໂລກໍຍັງຖືຫລັກຄວາມເຊື່ອວ່າ ຕ້ອງວາງໄວ້ໃນອົງພຣະເຢຊູຄຣິດ. (ອຟ 2:8) ເມື່ອທຳຄວາມເຂົ້າໃຈຢ່າງດີແລ້ວ ພວກເຮົາກໍຮູ້ວ່າ ອາຈານໂປໂລບໍ່ໄດ້ຫັກຫ້າມການປ່າວປະກາດແຕ່ຢ່າງໃດ, ລາວຍັງກຳຊັບໃຫ້ຕີໂມທຽວ ປະຕິບັດຢ່າງດີກັບພວກຜູ້ຍິງທີ່ແລ່ນໜີຈາກໂບດໄປ.

**<u>ຄຳຖາມ:</u>**

1. ບາງຄັ້ງໃນຄຣິສຕະຈັກຈຶ່ງມີການຫ້າມຜູ້ຍິງໃນການສິດສອນ? ເປັນຫຍັງຈຶ່ງອະນຸຍາດໃຫ້ສອນໄດ້ໃນເວລາອອກນອກປະເທດ?

2. ໂປໂລໃຫ້ການຕັກເຕືອນກ່ຽວກັບຜູ້ຍິງທີ່ເປັນຄຣູສອນໃນເມືອງເອເຟໂຊຢ່າງໃດ?

3. ໂປໂລມີການຕໍ່ຕ້ານຢ່າງໃດຕໍ່ຄຣູສອນປອມ ແລະ ການສອນບໍ່ມີໝາກຜົນທາງດ້ານຈິດວິນຍານຢ່າງໃດ?

4. ເຮົາຈະສອນນັກຮຽນຂອງເຮົາຢ່າງໃດ ເພື່ອໃຫ້ເຂົານຸ່ງເຄື່ອງອັນເໝາະສົມມາໂບດ?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 4
## ຜູ້ນຳຄຣິສຕະຈັກທີ່ເໝາະສົມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຕີໂມທຽວ 3:1-13

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຕີໂມທຽວ 3:1-13; ຕີໂຕ 1:5-9

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ນຳໃນ ຄຣິສຕະຈັກຈຳເປັນຕ້ອງ ມີຄຸນນະພາບສູງດ້ານຈິດວິນຍານ, ແລະມີຄວາມເປັນຫ່ວງເປັນໃຍຄວາມເຊື່ອ ແລະ ຕາງໜ້າຄຣິສຕະຈັກຂອງພຣະເຈົ້າ

**ຄຳຖາມເພື່ອສຳຣວດ:** ຄຣິສຕະຈັກຕ້ອງການຜູ້ນຳຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະຮວບຮວມຄຳແນະນຳ ກ່ຽວກັບຜູ້ນຳຄຣິສຕະຈັກ ແລະ ຊັ່ງຊາຕີລາຄາໂດຍອີງໃສ່ຄຳແນະນຳນັ້ນ.

### ຄຳນຳ

ໂປໂລກ່າວຢ່າງ ພິຈາຣະນາແລະໄຕ່ຕອງຢ່າງຄັກແນ່ເຖິງການເປັນຜູ້ນຳຄຣິສຕະຈັກ. ຈຳປັນທີ່ສຸດທີ່ຈະຕ້ອງຄ້າຍຄືອົງພຣະເຢຊູ ເປັນຜູ້ສນັບສນູນແລະເສີມຂຍາຍພຣະກິດຕິຄຸນໃຫ້ໄດ້ຮັບຄວາມນັບຖືຊຶ່ງພວກຄຣູສອນປອມໄດ້ບິດເບືອນ ສອນຜິດແປກໄປຈາກຫລັກຄວາມຈິງ.

ຫລາຍສິ່ງຫລາຍຢ່າງທີ່ຍັງເຮັດໃຫ້ສັບສົນຢູ່ໃນເຣື່ອງຜູ້ນຳໃນຄຣິສຕະຈັກ. ໂປໂລກໍໄດ້ສເນີຄຳອະທິບາຍຫລາຍຢ່າງແຕ່ກໍຍັງມີຄວາມສັບສົນຢູ່, ຢ່າງໃດກໍຕາມຈົ່ງຣະມັດຣະວັງ ແລະພິຈາຣະນາໃຫ້ຖີ່ຖ້ວນອີງໃສ່ພຣະຄັມພີຕອນນີ້ 1 ຕີໂມທຽວ 3:1-13 ທ່ານຈະໄດ້ຮັບຄວາມກະຈ່າງແຈ້ງຂຶ້ນ.

### ການເບິ່ງທົ່ວໄປສຳລັບຄຸນສົມບັດຂອງຜູ້ນຳ (3:1-7)

ຄຸນສົມບັດຂອງຜູ້ນຳຄຣິສຕະຈັກໄດ້ບັນທຶກໄວ້ຢ່າງຊັດເຈນໃນຕອນນີ້. ຜູ້ໃດທີ່ປາຖນາໜ້າທີ່ນີ້ກໍເປັນສິ່ງທີ່ປະເສີດຢູ່ແລ້ວ.(1 ຕທ 1:1) ແຕ່ຕ້ອງເຂົ້າໃຈວ່າບັນຫາທີ່ໜ້າລຳຄານເບື່ອໜ່າຍທີ່ຄຣູສອນປອມເມືອງເອເຟໂຊໄດ້ສອນບິດເບືອນໄວ້ແລ້ວນັ້ນ, ອາຈານໂປໂລຈຶ່ງຖືວ່າເປັນຄວາມສຳຄັນຫລາຍ.

ຜູ້ນຳຄຣິສຕະຈັກ ເປັນຜູ້ຮັບຜິດຊອບໃນການນຳ, ວາງແຜນການແລະສິດສອນພຣະຄຳຂອງພຣະເຈົ້າ. ຕ້ອງເປັນຄົນເຫັນເຫດການໄກ ກວ້າງຂວາງແລະເລິກເຊິ່ງ ເພາະລາວຕ້ອງໄດ້ນຳພາຄຣິສຕະຈັກວາງແຜນການ ໃຫ້ສອດຄ່ອງກັບສະພາບການແລະຣະດູການ. ຜູ້ນຳຄຣິສຕະຈັກບາງຄັ້ງກໍເອີ້ນວ່າເຖົ້າແກ່ (ກຈ 20:17,28; ແລະ ຕີໂຕ 1:5, 7) ຢ່າງໃດກໍແລ້ວແຕ່ ຜູ້ນຳຄຣິສຕະຈັກຖ້າຈະເວົ້າແລ້ວກໍແມ່ນມີໜ້າທີ່ຄ້າຍໆກັບເຖົ້າແກ່ນັ້ນເອງ.

ເມື່ອໂປໂລ ໄດ້ກ່າວເຖິງຄຸນສົມບັດແລະໜ້າທີ່ຂອງຜູ້ນຳນີ້ ກໍແມ່ນເຮັດໃຫ້ຜູ້ທີ່ປາຖນາວຽກງານນີ້ຄິດເຖິງການປະພຶດປະຕິບັດຂອງຕົນເອງ. ບໍ່ແມ່ນການປະພຶດແບບອຶກທຶກຄຶກໂຄມ, ແບບຫາເຣື່ອງ, ສິດສອນພຣະຄຳຂອງພຣະເຈົ້າບິດເບືອນ, ມັກເຣື່ອງມັກຄວາມ, ອງຫລືວ່າມັກຄວາມ.

**ມີໃຈສັດທາເຫລື້ອມໃສໃນການຮັບແຂກ (3:2)** ຜູ້ນຳຈະຕ້ອງຕ້ອນຮັບທຸກໆຄົນ ບໍ່ວ່າຈະເປັນແຂກພາຍໃນຫລືພາຍ

ນອກກໍຕາມ ເຂົາຕ້ອງຕ້ອນຮັບຢ່າງສມ່ຳສເມີ ໂດຍທີ່ຫລີກລຽງບໍ່ໄດ້ຢ່າງເດັດຂາດ. (ໂຣມ 12:13; ເຮັບເຣີ 13:2; 1 ເປໂຕ 4:9)

**ເໝາະສົມທີ່ຈະເປັນຄຣູ (3:2)** ຜູ້ທີ່ເປັນຄຣູຕ້ອງສາມາດສອນຕາມຫລັກພຣະທັມແລະຂັດຂວາງຜູ້ທີ່ສອນບໍ່ຖືກຕາມຫລັກ. ໂປໂລເນັ້ນຢູ່ໃນ 1 ຕທ 5: 17 ວ່າ ຜູ້ທີ່ເປັນຄຣູສອນຈະໄດ້ຮັບຮາງວັນເຖິງສອງເທົ່າ ເພາະພວກເຫລົ່ານີ້ເຮັດວຽກຢ່າງໜັກໜ່ວງ.

**ບໍ່ເປັນຄົນເມົາເຫລົ້າ (3:3)** ໃນຄຣິສຕະຈັກເມືອງເອເຟໂຊອາດມີປະສົບການໃນການດື່ມເຫລົ້າ ແລະຄຣູສອນບາງຄົນກໍຍັງດື່ມເຫລົ້າຢູ່ ແລະແລ້ວກໍສອນພຣະທັມອອກນອກຫລັກ. ລາວເນັ້ນອີກໃນຂໍ້ທີ 8 ເຣື່ອງການດື່ມເຫລົ້າຈົນເກີນສ່ວນ. ແຕ່ຫລາຍຄົນກໍຍັງໃຊ້ຂໍ້ນີ້ຜິດໄປເຊັ່ນ ກິນໄດ້ດື່ມໄດ້ແຕ່ບໍ່ໃຫ້ເມົາຈົນເກີນໄປ.ຂໍ້ພຣະຄັມພີຕ່າງໆທີ່ກ່ຽວກັບການດື່ມ ທ່ານອ່ານຈະຄົ້ນຄວ້າໄດ້ຈາກນີ້ ມັດທາຍ 11:19; 24:49; ກິຈການ2:15; 1 ໂກຣິນໂທ 11:21; ເອເຟໂຊ 5:18; 1 ເທຊະໂລນິກ 5:7. ສິ່ງນີ້ແມ່ນນຳມາດ້ວຍຄວາມບາບທຸກປະການເຊັ່ນ ລູກາ 21:34; ໂຣມ 13:13; 1 ໂກຣິນໂທ 6:10; ຄາລາເຕັຍ 5:12; 1 ເປໂຕ 4:3.

**ບໍ່ເປັນຄົນຫຍາບຊ້າແຕ່ເປັນຄົນມີໃຈສຸພາບ ບໍ່ເປັນຄົນມັກຖຽງ (3:3)** ຜູ້ນຳຕ້ອງເປັນຄົນສຸພາບຮຽບຮ້ອຍ. ບໍ່ແມ່ນຈະເປັນຄົນໂຫດຮ້າຍ ມື້ນີ້ໃຈບໍ່ດີຢາກເວົ້າຢ່າງໃດກໍເວົ້າໄປ ມື້ຕໍ່ມາໃຈດີແລ້ວກໍເວົ້າດີໂດຍບໍ່ມີການຂໍໂທດເຮັດເໝືອນກັບຕົນເອງບໍ່ໄດ້ເຮັດຫຍັງເລີຍ, ຄົນຢ່າງນີ້ບໍ່ມັກສອນຕາມຫລັກ ເຂົາເປັນຄົນຈອງຫອງ. ເຂົາເອົານິດສັຍມາຄວບຄຸມຕົນເອງ (6:3-5; 2 ຕທ 2:22-26)

**ບໍ່ເປັນຄົນເຫັນແກ່ເງິນ (3:3)** ອີກຄຳນຶ່ງເຮົາຈະເຫັນໄດ້ວ່າບໍ່ເປັນຄົນໂລບມາກເຫັນແກ່ໄດ້ (3:8) ຄຣິສຕະຈັກຂອງພວກເຮົາທຸກຄຣິສຕະຈັກຕ້ອງການຢາກໃຫ້ຈະເຣີນ ກ່ອນຈະຈະເຣີນຄຣິສຕະຈັກຕ້ອງມີຄວາມເຊື່ອ ແລະມີການຖວາຍ. ຄຳວ່າບໍ່ເຫັນແກ່ເງິນຄຳນັ້ນແມ່ນບໍ່ຢາກໄດ້ຂອງຜູ້ອື່ນມາເປັນຂອງຕົນເອງ ບໍ່ຢ້ານຄົນອື່ນລື່ມ ບໍ່ເຫັນແກ່ເງິນຄຳເໜືອກວ່າພຣະເຈົ້າ.

ທີ່ໂປໂລກ່າວຜ່ານມາແມ່ນສຳລັບຜູ້ນຳ ແຕ່ຍັງອີກ 3 ຂໍ້ທີ່ສຳຄັນທີ່ສຸດກໍຄື: (1) ຕ້ອງເປັນຄົນຄອບຄອງບ້ານເຮືອນຂອງຕົນໄດ້ດີ (4:2) (2) ຢ່າຕັ້ງຜູ້ເຊື່ອໃໝ່ (3:6) (3) ຕ້ອງເປັນຜູ້ທີ່ຄົນພາຍນອກນັບຖື (3:7)

ພຣະທັມຄັມພີໃໝ່ໄດ້ກ່າວເລື້ອຍໆວ່າ ຄຣິສຕະຈັກປຽບເໝືອນຄອບຄົວ. ຜູ້ນຳຄວນຈະດູແລຄອບຄົວຂອງຕົນ ສັ່ງສອນບຸດທິດາຂອງຕົນໃຫ້ຢູ່ໃນໂອວາດຄຳສອນຂອງພຣະອົງ. ເພາະວ່າມານຊາຕານ ຖ້າມັນຫາກເຂົ້າມາທຳລາຍເຮົາບໍ່ໄດ້ມັນກໍຈະເຂົ້າມາທາງຄອບຄົວຄືລູກແລະເມັຍ.

## <u>ວຽກງານຂອງຄະນະເຖົ້າແກ່ (3:8-13</u>

ໂປໂລໄດ້ຫັນມາຫາໜ້າທີ່ຂອງຄະນະເຖົ້າແກ່ ຊຶ່ງເປັນຜູ້ນຳຫລືຄວາມນຶ່ງຜູ້ບົວຣະບັດຮັກສາ (1ຕທ 3:8).ລາວໄດ້ຊີ້ແຈງວ່າມີຢູ່ສອງລຳດັບໃນການທີ່ຈະນຳຄຣິສຕະຈັກ. ຄັ້ງແຮກໃນກຸງເຢຣູຊາເລັມ ສິດຍາພິບານຄົນດຽວບໍ່ສາມາດຈະເບິ່ງຄຣິສຕະຈັກໃຫ້ທົ່ວເຖິງໄດ້. ເພື່ອຈະໃຫ້ຄຣິສຕະຈັກຈະເຣີນຂຶ້ນ ພວກເຂົາເຈົ້າກໍໄດ້ປຶກສາກັນແລ້ວກໍໄດ້ເລືອກເອົາ 7 ຄົນໃຫ້ເປັນຜູ້ຮັບໃຊ້ບົວຣະບັດແລະຮັກສາ. (ກຈ 1:1-6)

ເມື່ອເບິ່ງເຖິງໜ້າທີ່ຂອງພວກຜູ້ບົວຣະບັດຮັກສາແລ້ວ ກໍມີໜ້າທີ່ສຳຄັນຫລາຍ ເພາະໜ້າທີ່ຂອງພວກເຂົາເຈົ້ານັ້ນກໍຄ້າຍໆກັບຜູ້ນຳຫລືສິດຍາພິບານ. ວຽກລາຍຣະອຽດໄດ້ບັນທຶກໄວ້ໃນ 3:8-13 ບໍ່ວ່າຈະເປັນຍິງຫລືຊາຍກໍຕາມຂໍ້ແຕກຕ່າງ ພິເສດທີ່ພວກເຮົາເຫັນກໍມີຢູ່ 3 ຢ່າງ ເຊັ່ນ:

**ບໍ່ເປັນຄົນສອງລີ້ນ** (3:8) ຜູ້ບົວຣະບັດບໍ່ຄວນເປັນຄົນມັກຊຸບຊິບນິນທາ, ບໍ່ເປັນຄົນເວົ້າຢ່າງນີ່ງແລະເຮັດອີກຢ່າງນຶ່ງ, ແລະເວົ້າຢ່າງນຶ່ງກັບຄົນນຶ່ງ ແລະເວົ້າອີກຢ່າງນຶ່ງກັບອີກຄົນນຶ່ງ.

**ຍຶດໝັ້ນໃນຂໍ້ເລິກລັບແຫ່ງຄວາມເຊື່ອ** (3:9) ຕ້ອງເປັນຄົນຍຶດໝັ້ນໃນຫລັກຄວາມເຊື່ອແລະເປັນຄົນມີໃຈສຳນຶກທີ່ດີ.

**ຕ້ອງລອງເບິ່ງພວກເຂົາເສັຍກ່ອນ** (3:10) ຕ້ອງໃຫ້ພວກເຂົາທົດລອງເບິ່ງ ແລະເຮົາກໍຕ້ອງຕິດຕາມເບິ່ງເຂົາດ້ວຍຄວາມເອົາໃຈໃສ່ ວ່າເຂົາມີຫລັກໝັ້ນໃນຄວາມເຊື່ອຫລືຕາມຫລັກຄຳສອນຫລືບໍ່.

## <u>ວຽກງານຂອງຜູ້ຍິງ (3:11)</u>

ຜູ້ຍິງ ສ່ວນຫລາຍແລ້ວຈະເປັນຜູ້ທີ່ມີຄອບຄົວແລ້ວ, ແລະສ່ວນຫລາຍກໍເປັນເມັຍຂອງເຖົ້າແກ່ ຫລືຜູ້ນຳອື່ນໆ. ຄຣິສຕະຈັກສມັຍແຮກ ຜູ້ຍິງເປັນພວກທີ່ເຂັ້ມແຂງຫລາຍແລະຮັກສາຄຣິສຕະຈັກໄດ້ດີ ແລະສມັຍດຽວນີ້ຜູ້ຍິງກໍຍັງຮັກສາຄວາມເຂັ້ມແຂງໄດ້ດີຫລາຍ ແລະການຮັບໃຊ້ກໍຄຽງບ່າຄຽງໄຫລ່ກັບພວກຜູ້ຊາຍໄດ້. ບາງຄຣິສຕະຈັກມີສະມາຊິກໜ້ອຍແດ່ ຕ້ອງໄດ້ໃຊ້ຜູ້ຍິງເປັນເຖົ້າແກ່ນຳດ້ວຍ.

## <u>ສະລຸບ</u>:

ເພາະພວກສອນຜິດ, ພວກຜູ້ມັກແບ່ງແຍກ ເຮັດໃຫ້ຊື່ສຽງຂອງໂບດເຊື່ອມເສັຍ ໂປໂລຈຶ່ງໄດ້ແຕ່ງຕັ້ງຣະບຽບຂຶ້ນມາເພື່ອຈະໄດ້ເລືອກເຟັ້ນຜູ້ທີ່ຈະມາເປັນຄຣູສອນແລະຜູ້ນຳ. ໂປໂລຖືເອົາຂໍ້ 2 ເປັນຂໍ້ສຳຄັນທີ່ສຸດ, ບໍ່ວ່າຈະເປັນຜູ້ນຳ ຄຣູສອນ ຜູ້ບົວຣະບັດ ຫລືເມັຍຂອງເຖົ້າແກ່ທັງຫລາຍກໍເຊັ່ນກັນ.

## <u>ຄຳຖາມ</u>

1. ເມື່ອສຶກສາມາຮອດນີ້ ພວກເຮົາຄິດວ່າຢ່າງໃດ ເຮົາຄວນຈະຕິດຕາມຢ່າງນີ້ຫລືບໍ່?

2. ພວກເຮົາໄດ້ເຫັນຄວາມສຳຄັນຂອງຜູ້ນຳຫລືບໍ່?

3. ເມື່ອໂປໂລອະທິບາຍຢ່າງນີ້ແລ້ວ ທ່ານລອງເວົ້າຄືນລອງເບິ່ງວ່າໜ້າທີ່ຂອງຜູ້ນຳມີຫຍັງແດ່?

4. ຜູ້ຍິງເປັນຜູ້ປ່າວປະກາດໄດ້ບໍ່? ເວລາໃດ?

5. ຜູ້ຊາຍເດ ເປັນຜູ້ປະກາດໄດ້ບໍ່? ເວລາໃດ?

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# <u>ບົດຮຽນທີ 5</u>
# <u>ກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** 1 ຕີໂມທຽວ 4:1-16
**<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u>** 1 ຕີໂມທຽວ 4:1-16
**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພວກເຮົາຈະກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງ
**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ພວກເຮົາຈະກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງໄດ້ຢ່າງໃດ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອຊີ້ສ່ອງທາງໃຫ້ກ້າວສູ່ຊີວິດຄຣິສຕຽນທີ່ແຂງແຮງ ແລະຕັດສິນໃຈນຳມາປະຕິບັດ.

**<u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເພື່ອຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ເປັນຜູ້ນຳທີ່ມີຈິດໃຈເປັນຜູ້ຮັບໃຊ້

## <u>ຄຳນຳ</u>

ໂປໂລຄິດວ່າຕີໂມທຽວບໍ່ຄວນຈະປລາດໃຈເລີຍວ່າ ຄວາມຈິງແລ້ວມີສະມາຊິກໃນຄຣິສຕະຈັກລາງຄົນໄດ້ຕິດຕາມຫລັກຄຳສອນອັນລໍ້ລວງຂອງພວກຄຣູສອນປອມກ່ຽວກັບຫລັກຄຳສອນໃນເຣື່ອງຄວາມບໍຣິສຸດ. ເພື່ອຈະຂັດຂວາງກັບພວກນີ້ ລາວຈະຕ້ອງປະກາດຂ່າວປະເສີດ ແລະຝຶກຝົນຕົນເອງທາງຝ່າຍຈິດວິນຍານໃນທາງຂອງພຣະເຈົ້າເຫມືອນກັບນັກກິລາຕຽມຕົວເພື່ອຈະເຂົ້າໃນການແຂ່ງຂັນ.

**<u>ປະຖິ້ມຄວາມເຊື່ອ</u>** (4:1-5)
ກ່ອນອື່ນຫມົດ ໂປໂລບໍ່ຢາກໃຫ້ຕີໂມທຽວປລາດໃຈວ່າຜູ້ທີ່ເຊື່ອລາງຄົນຂອງຊາວເມືອງເອເຟໂຊໄດ້ປະຖິ້ມຄວາມເຊື່ອໂດຍຫັນໄປເຊື່ອຟັງ "ວິນຍານທີ່ລໍ້ລວງ" (1 ຕີໂມທຽວ 4:1). ພຣະວິນຍານໄດ້ເຕືອນໄວ້ລ່ວງຫນ້າແລ້ວກ່ຽວກັບເຣື່ອງນີ້. ຕໍ່ມາ ໂປໂລຊີ້ໃຫ້ເຫັນອີກວ່າບໍ່ເກີດຂອງຫລັກຄຳສອນບໍ່ຈິງແມ່ນໄດ້ມາຈາກພວກຜີຮ້າຍ.

ເມື່ອໂປໂລໃຊ້ຄຳວ່າ "ໃນຄາວພາຍຫນ້າຈະມີລາງຄົນປະຖິ້ມຄວາມເຊື່ອ" (1 ຕີໂມທຽວ 4:1) ລາວໃຊ້ຄຳເວົ້າຕາມພາສາຂອງຊາວຢິວແມ່ນຫມາຍເຖິງຄາວສຸດທ້າຍ ຊຶ່ງເລີ້ມແຕ່ວັນຂອງພຣະເມຊີອາຊຶ່ງມາປາກົດ. ຄຣູສອນຂອງຊາວຢິວກ່າວເຖິງຄວາມຊົ່ວຮ້າຍໃນຄາວປະຈຸບັນແລະຄາວສຸດທ້າຍຈະມາເຖິງ. ເຖິງແມ່ນວ່າ ຄຣິສຕຽນຍັງຄອຍຖ້າການກັບມາຂອງພຣະຄຣິດ ເພື່ອໃຫ້ຍຸກໃຫມ່ສົມບູນໃນຣາຊອານາຈັກຂອງພຣະອົງ ພວກເຮົາຢູ່ໃນຄາວສຸດທ້າຍແລ້ວ ເພາະວ່າພຣະເມຊີອາໄດ້ມາປາກົດແລ້ວ.

ໂປໂລຢາກໃຫ້ຕີໂມທຽວຮູ້ໄວ້ວ່າ ຄວາມວຸ້ນວາຍໃນຄຣິສຕະຈັກຂອງຊາວເມືອງເອເຟໂຊນັ້ນ ອຳນາດຂອງຜີຮ້າຍໄດ້ເຂົ້າສິງຢູ່ໃນຈິດໃຈຂອງຜູ້ຂັດຂວາງມາຕັ້ງແຕ່ກ່ອນແລ້ວ. ພຍານມານໄດ້ມີບົດບາດຢູ່ໃນບົດທີ 3:6-7 ແລະກໍໄດ້ປາກົດອອກມາອີກໃຫ້ເຫັນໃນພຣະທັມ 2 ຕີໂມທຽວ 2:26. ຄົນທີ່ຂັດຂວາງຕໍ່ສູ້ກັບໂປໂລເປັນຄົນຫນ້າຊື່ໃຈຄົດ ຈິດໃຈຂອງພວກເຂົາຖືກພຍາມານປະທັບຕາໄວ້ແລ້ວ. ລາວໄດ້ກ່າວໄວ້ຢ່າງຄັກແນ່ໃນພຣະທັມເອເຟໂຊ "ເພາະວ່າເຮົາທັງຫລາຍບໍ່

ໄດ້ຕໍ່ສູ້ກັບມະນຸດທັມດາ ແຕ່ຕໍ່ສູ້ກັບຜູ້ປົກຄອງ, ຜູ້ມີອຳນາດ, ເຈົ້າໂລກທີ່ຢູ່ໃນໂມຫະຄວາມມືດແຫ່ງໂລກນີ້ ແລະຕໍ່ສູ້ກັບກຳລັງວິນຍານຝ່າຍຄວາມຊົ່ວຮ້າຍໃນອາກາດສະຖານ" (ເອເຟໂຊ 6:12).

ພວກຄຣູສອນບໍ່ຈິງຖືກວິນຍານຮ້າຍຊັກຊວນ ພວກເຂົາຫ້າມບໍ່ໃຫ້ຜູ້ທີ່ເຊື່ອເອົາກັນເປັນຜົວເມັຽ ແລະຫ້າມບໍ່ໃຫ້ກິນອາຫານບາງຊະນິດ (1 ຕີໂມທຽວ 4:3). ການແຕ່ງງານແລະອາຫານກ່ຽວພັນກັບຄວາມຢາກອັນພື້ນຖານ, ເພດສັມພັນ ແລະຄວາມຫິວ. ບາງທີພວກຄຣູສອນບໍ່ຈິງໄດ້ຊັກຊວນໃຫ້ແມ່ຫມ້າຍທີ່ຍັງຫນຸ່ມຢູ່ໃນຄຣິສຕະຈັກບໍ່ໃຫ້ແຕ່ງງານໃຫມ່ (5:11-15). ພວກເຂົາສອນວ່າຊີວິດທີ່ບໍ່ແຕ່ງງານນັ້ນບໍຣິສຸດກວ່າຜູ້ທີ່ແຕ່ງງານ. ຫລັກຄຳສອນເຫລົ່ານີ້ມາຈາກຊາວກຣີກ ພວກເຂົາເຊື່ອວ່າຮ່າງກາຍເປັນຂອງຊົ່ວຮ້າຍ ແລະວິນຍານເປັນຂອງດີ. ຫລັກຄຳສອນທີ່ກ່ຽວຂ້ອງກັບເພດສັມພັນສຳລັບຄູ່ຜົວເມັຽກໍຖືວ່າບໍ່ດີ (1 ໂກຣິນໂທ 7:1-7). ເພື່ອບັນລຸເຖິງຄວາມບໍຣິສຸດຈະຕ້ອງປາສຈາກແຕ່ງງານ.

ຄຣູສອນບໍ່ຈິງຍັງຢືນຢັນວ່າ ຜູ້ທີ່ເຊື່ອຈະຕ້ອງຂະລຳອາຫານບາງຢ່າງເພື່ອຈະໄດ້ບັນລຸເຖິງຊີວິດອັນສູງສົ່ງ. (ໃຫ້ເບິ່ງໂກໂລຊາຍ 2:21). ໃນທາງກົງກັນຂ້າມ ໂປໂລໄດ້ໂຕ້ຖຽງກັບຄົນກຸ່ມນີ້ວ່າອາຫານທີ່ກິນລົງໄປນັ້ນບໍ່ໄດ້ເຮັດໃຫ້ມີຫຍັງແຕກຕ່າງໄປເລີຍ (1 ໂກຣິນໂທ 8:8-9). ລາວກ່າວວ່າອາຫານບາງຢ່າງທີ່ພວກຄຣູສອນບໍ່ຈິງຫ້າມບໍ່ໃຫ້ກິນນັ້ນລ້ວນແຕ່ເປັນສິ່ງທີ່ດີຊຶ່ງພຣະເຈົ້າໄດ້ສ້າງຂື້ນມາ (1 ຕີໂມທຽວ 4:3-5; ປະຖົມມະການ 1:31). ຂະລຳອາຫານບາງຢ່າງຍ້ອນພິທີທາງສາສນາກໍຫມາຍຄວາມວ່າປະຕິດເສດໃນສິ່ງທີ່ພຣະເຈົ້າສ້າງຂື້ນມາ (ໃຫ້ເບິ່ງພຣະທັມກິຈການບົດທີ10). ພວກເຮົາຄວນຮັບປະທານອາຫານດ້ວຍຈິດໃຈຂອບພຣະຄຸນ.

ຫັກຫ້າມບໍ່ໃຫ້ແຕ່ງງານແລະບໍ່ໃຫ້ບໍຣິໂພກອາຫານບາງຢ່າງນັ້ນ ບໍ່ແມ່ນຫລັກຄຳສອນຂອງຂ່າວປະເສີດ, ແຕ່ແມ່ນ "ຄຳສອນຂອງພວກຜີຮ້າຍ" (1 ຕີໂມທຽວ 4:1). ຄຣິສຕຽນ ເອເຟໂຊບໍ່ຄວນຈະໄປເຊື່ອຟັງວິນຍານທີ່ລໍ້ລວງ.

<u>ຫວນກັບມາຫາຊີວິດຂອງຕີໂມທຽວ</u> (4:6-16)

ເມື່ອເນັ້ນໃຫ້ເຫັນຄວາມຜິດຂອງພວກຄຣູສອນບໍ່ຈິງແລ້ວ ໂປໂລຫວນມາຫາຕີໂມທຽວໃນຖານະເປັນຄຣູສອນຂ່າວປະເສີດແຫ່ງຄວາມຈິງ (1 ຕີໂມທຽວ 4:6, 11). ໂປໂລໄດ້ເຕືອນຕີໂມທຽວວ່າ ຕີໂມທຽວໄດ້ບຳຣຸງຕົນດ້ວຍ "ຂໍ້ຄວາມເຣື່ອງຄວາມເຊື່ອແລະດ້ວຍຫລັກຄຳສອນອັນດີ" (4:6). ພວກເຮົາພົບວ່າຕີໂມທຽວໄດ້ຮັບການອົບຮົມຈາກສາມບ່ອນຊຶ່ງນຳມາເປັນພື້ນຖານໃນຄວາມເຊື່ອຂອງລາວ. ບ່ອນທຳອິດນັ້ນແມ່ນລາວໄດ້ຮຽນຮູ້ມາຈາກແມ່ແລະແມ່ເຖົ້າຂອງລາວ (2 ຕີໂມທຽວ 1:5; 3:14-15). ບ່ອນທີສອງ ລາວໄດ້ຮຽນຮູ້ຈາກປະສົບການໃນຄຣິສຕະຈັກ (ກິຈການ 16:2). ສຸດທ້າຍລາວເປັນລູກຂອງໂປໂລໃນຄວາມເຊື່ອ (1 ຕີໂມທຽວ 1:2). ຈົດຫມາຍທີ່ຂຽນໄປຫາສິດຍາພິບານ "ຜູ້ບົວລະບັດ" (The pastoral epistles) ແມ່ນເນັ້ນເຖິງ "ຄຳສອນອັນມີຫລັກ" ເພາະເປັນຫ່ວງ ຢ້ານວ່າພວກຜູ້ຮັບໃຊ້ຈະສອນໄປໃນທາງຜິດ (1 ຕີໂມທຽວ 1:10; 2 ຕີໂມທຽວ 4:3; ຕີໂຕ 1:9, 2:1).

ໂປໂລກ່າວຕໍ່ຕີໂມທຽວວ່າ " ຖ້າເຈົ້າຈະໃຫ້ຄຳແນະນຳເຫລົ່ານີ້ແກ່ພີ່ນ້ອງ ເຈົ້າກໍຈະເປັນຜູ້ບົວລະບັດທີ່ດີຂອງພຣະເຢຊູຄຣິດ" (1 ຕີໂມທຽວ 4:6). "ໃຫ້ຄຳແນະນຳເຫລົ່ານີ້" ເປັນຄຳແນະນຳໄປໃນທາງດີ. ໃຫ້ຕີໂມທຽວ "ເວັ້ນຫນີຈາກນິຍາຍປະໂລມໂລກ" ຊຶ່ງເປັນທາງບໍ່ດີ (4:7). "ເຣື່ອງຄວາມເຊື່ອ ແລະດ້ວຍຫລັກຄຳສອນອັນດີ " (4:6) ຕ່າງກັນກັບນິຍາຍປະໂລມໂລກທີ່ "ພວກຜູ້ຍິງເຖົ້າເຄີຍເລົ່າໃຫ້ຟັງ" ຊຶ່ງເປັນຄຳສອນທີ່ໄຮ້ປໂຍດ.

ຕີໂມທຽວຈະຕ້ອງຝຶກຕົວລາວເອງໃຫ້ເປັນຜູ້ທີ່ນັບຖືພຣະເຈົ້າຢ່າງຖືກຕ້ອງ (4:7). ໂປໂລສົມທຽບໃຫ້ຕີໂມທຽວເຫັນວ່າການຝຶກຫັດທາງກາຍມີປໂຍດບາງຢ່າງຫມາຍຄວາມວ່າມີປໂຍດໃນໂລກນີ້, ແຕ່ການຝຶກຝົນທາງຝ່າຍຈິດວິນຍານນຳໄປສູ່ການນັບຖືພຣະເຈົ້າຢ່າງຖືກຕ້ອງ ແລະເປັນປໂຍດບໍ່ພຽງແຕ່ຢູ່ໃນໂລກປັດຈຸບັນແຕ່ນຳປໂຍດໄປສູ່ຊີວິດຫນ້າ.

ສຳລັບໂປໂລແລ້ວ ຊີວິດອັນຕລອດໄປເລີ້ມເກີດຂື້ນສຳລັບຜູ້ທີ່ຢູ່ໃນພຣະຄຣິດ. ຊີວິດຫນ້ານັ້ນປາກົດການແລ້ວສຳລັບໄພ່ພົນຂອງພຣະເຈົ້າ. ເຫມືອນດັ່ງໃນຂໍ້ທີ 8 ໄດ້ກ່າວວ່າ "ເພາະການຝຶກຫັດທາງກາຍນັ້ນມີປໂຍດບາງຢ່າງ ແຕ່ການນັບຖືພຣະເຈົ້າຢ່າງຖືກຕ້ອງມີປໂຍດທຸກຢ່າງ ເພາະໄດ້ຮັບພຣະສັນຍາໄວ້ສຳລັບຊີວິດໃນປັດຈຸບັນແລະໃນອະນາຄົດດ້ວຍ." ໃນຂໍ້ທີ 9 ພວກເຮົາຈະພົບວ່າ ໂປໂລໄດ້ກ່າວເຖິງ "ຂໍ້ຄວາມນີ້ກໍສັດຈິງແລະສົມຄວນທຸກຄົນຈະໄດ້ຮັບເຊື່ອເອົາໄວ້" (ໃຫ້ເບິ່ງ 1:15; 3:1). "ຂໍ້ຄວາມນີ້ກໍສັດຈິງ" ແມ່ນອ້າງອີງໃສ່ຂໍ້ທີ 8 ຄືການນັບຖືພຣະເຈົ້າຢ່າງຖືກຕ້ອງກໍມີຄຸນປໂຍດຫລາຍ.

ເມື່ອໂປໂລໄດ້ກ່າວຖແລງການໃນຂໍ້ທີ 8 ແລະໄດ້ປະກາດເຖິງຂໍ້ຄວາມຈິງໃນຂໍ້ທີ 9. ຕໍ່ມາ ລາວໄດ້ໃຫ້ເຫດຜົນໃນຂໍ້ທີ 10. ຄຳວ່າ "ເຫດທີ່" ພາສາອັງກິດໃຊ້ຄຳວ່າ "For it is for this" ພາສາລາວອາດແປວ່າ "ເຫດທີ່ດ້ວຍເຫດດັ່ງກ່າວ" (ຄືການນັບຖືພຣະເຈົ້າຢ່າງຖືກຕ້ອງເຮັດໃຫ້ໄດ້ຮັບພຣະສັນຍາໄວ້ສຳລັບຊີວິດໃນປັດຈຸບັນແລະໃນອະນາຄົດ). "ເຮັດການຫນັກຫນ່ວງ ແລະອົດສາສູ້" ສອງຄຳນີ້ໂປໂລມັກໃຊ້ຫລາຍແລະໄດ້ອາງອີງເຖິງການຮັບໃຊ້ຂອງລາວແລະຂອງຄົນອື່ນດ້ວຍ (ໃຫ້ທຽບເບິ່ງ ໃນໂກໂລຊາຍ 1:29). ຄຳວ່າ "ເຮັດການຫນັກຫນ່ວງ" ຫມາຍເຖິງ <u>ອອກເຮື່ອເຫແຮງເຮັດເອົາແທ້ເອົາວ່າ ເຮັດໃຫ້ດີທີ່ສຸດ</u> ຊຶ່ງມີນ້ຳໃຈແຂ່ງຂັນ (1 ຕີໂມທຽວ 6:12; 2 ຕີໂມທຽວ 4:7; 1 ໂກຣິນໂທ 9:25) ແລະໃຊ້ເຣື່ອງລາວຂອງນັກກິລາເລີ້ມຈາກພຣະທັມ 1 ຕີໂມທຽວ 4:7. ການນັບຖືພຣະເຈົ້າຢ່າງຖືກຕ້ອງບໍ່ແມ່ນການງ່າຍ. ຄຳວ່າ "ອົດສາສູ້" ຫມາຍຄວາມວ່າສູ້ທົນໄປເລື້ອຍໆ ເຫມືອນກັບນັກແລ່ນ (marathone) ເບິ່ງວ່າຜູ້ໃດຈະແລ່ນໄດ້ທົນກວ່າກັນໄປຈົນເຖິງຫລັກຊັຍ. ຄຳວ່າ "ເຮັດການຫນັກຫນ່ວງ ແລະອົດສາສູ້" ສອງຄຳນີ້ເປັນຄຳກິຣິຍາຊຶ່ງບົ່ງບອກເຖິງການກະທຳໃນປະຈຸບັນແລະສືບໆໄປ. ຄຣິສຕຽນຈະຕ້ອງອົດສາສູ້ໃນການນັບຖືພຣະເຈົ້າຢ່າງຖືກຕ້ອງ ຊຶ່ງພາສາອັງກິດໃຊ້ຄຳວ່າ "godliness". ພາສາລາວແປວ່າ ເປັນຄົນທີ່ໃຊ້ຊີວິດໃຫ້ເຫັນວ່າມີພຣະເຈົ້າໃນຊີວິດຂອງເຂົາ.

ໂປໂລເອີ້ນພຣະເຈົ້າວ່າ "ຜູ້ຊົງໂຜດໃຫ້ພົ້ນຂອງຄົນທັງປວງ" (1 ຕີໂມທຽວ 4:10). ບາງຄົນພະຍາຍາມໃຊ້ພຣະທັມຂໍ້ນີ້ຊັກຊວນໃຫ້ເຂົ້າໃຈວ່າທຸກຄົນໄດ້ໄປສວັນກັນຫມົດ. ແຕ່ຄວາມຈິງແລ້ວ ຂໍ້ຕໍ່ໄປໄດ້ບັນລະຍາຍໃຫ້ເຫັນຢ່າງແຈ່ມແຈ້ງ. ລາວໄດ້ກ່າວວ່າ "ຜູ້ຊົງໂຜດໃຫ້ພົ້ນຂອງຄົນທັງປວງ ເປັນຕົ້ນຂອງພວກຄົນທີ່ເຊື່ອໃນພຣະອົງ."

ໂປໂລໃຫ້ກຳລັງໃຈຕີໂມທຽວໂດຍກ່າວວ່າ "ຢ່າໃຫ້ຜູ້ໃດຫມິ່ນປມາດຄວາມຫນຸ່ມຂອງເຈົ້າ" (1 ຕີໂມທຽວ 4:12). ລາວຄົງຈະມີອາຍຸສາມສິບຫາສາມສິບຫ້າປີ ແລະລາວອາດຈະເປັນຄົນມັກອາຍ(1 ໂກຣິນໂທ 16:10-11; 2 ຕີໂມທຽວ 1:6-7). ລາວຢູ່ໃນສັງຄົມຂອງຄົນໃຫ້ກຽດຜູ້ເຖົ້າຜູ້ແກ່. ຜູ້ທີ່ຢູ່ໃນການເບິ່ງແຍງຂອງລາວອາດຈະມີຜູ້ທີ່ແກ່ກວ່າລາວ. ໂປໂລຈຶ່ງໄດ້ກ່າວຕໍ່ຜູ້ທີ່ຢູ່ໃນຄຣິສະຈັກນັ້ນວ່າ ເຖິງແມ່ນວ່າອາຍຸຂອງຕີໂມທຽວຈະອ່ອນກວ່າພວກເຂົາກໍຕາມ ແຕ່ຕີໂມທຽວໄດ້ປະຕິບັດງານຢູ່ໃຕ້ອຳນາດຂອງໂປໂລ.

ຕີໂມທຽວຈະຕ້ອງເປັນແບບຢ່າງໃຫ້ຄົນອື່ນໆ "ໃນທາງກິຣິຍາແລະວາຈາ ໃນຄວາມຮັກ ໃນຄວາມເຊື່ອແລະໃນຄວາມບໍຣິສຸດ (1 ຕີໂມທຽວ 4:12). ພວກຄຣູສອນປອມໄດ້ປະຖິ້ມຄວາມເຊື່ອແລະຄວາມຮັກ (1:5-6) ແລະຖືເອົາຄວາມບໍຣິສຸດໃນທາງຜິດ (4:3).

ຕີໂມທຽວຈະຕ້ອງຕັ້ງໃຈໃນການອ່ານພຣະຄັມພີໃນທີ່ປະຊຸມ ໃນການເຕືອນສະຕິ ແລະໃນການສັ່ງສອນຈົນກວ່າໂປໂລຈະມາ (4:13). ສິ່ງທີ່ກ່າວມານີ້ກໍເປັນຫນ້າທີ່ຂອງສິດຍາພິບານຢູ່ແລ້ວ. ລາວໄດ້ເຕືອນຕີໂມທຽວບໍ່ໃຫ້ເມີນເສີຍຕໍ່ "ຄຸນທັມທີ່ມີຢູ່ໃນຕົວຂອງເຈົ້າ" ພາສາອັງໃຊ້ຄຳວ່າ "the spiritual gift within you" ຫມາຍຄວາມວ່າ <u>ຂອງພຣະຣາຊທານໃນຕົວເຈົ້າ</u> ຕີໂມທຽວເປັນຜູ້ປະກາດພຣະທັມແລະເປັນຄຣູສອນຂອງຂ່າວປະເສີດຢ່າງແນ່ນອນ. ໃນບົດບາດອັນນີ້ລາວຈະໄດ້ຊັກຊວນຜູ້ທີ່ຂັດຂວາງ ແລະເອົາຊະນະຫລັກຄຳສອນປອມ (ໃຫ້ອ່ານ 2 ຕີໂມທຽວ 1:13; 2:15, 24-26;

3:14-4:5).

ໂປໂລໄດ້ອ້າງອີງໃຫ້ເຫັນສິ່ງທີ່ໜ້າສົນໃຈຂອງການ "ວາງມືໃສ່" ຈາກພວກຄນະເຖົ້າແກ່ (ໃຫ້ເບິ່ງ 2 ຕີໂມທຽວ 1:6). ພວກເຮົາໄດ້ພົບເຫັນວ່າ ການວາງມືມີມາຕັ້ງແຕ່ໃນສມັຍຂອງພຣະຄັມພີພຣະສັນຍາເດີມ (ຈົດບັນຊີ 27:18-23; ພຣະບັນຍັດສອງ 34:9). ໃນພຣະທັມກິຈການ ບົດທີ 13 ພຣະວິນຍານຊົງນຳພາ (ກິຈການ13:2) "ຜູ້ປະກາດພຣະທັມ ແລະອາຈານ" ກໍຢູ່ດ້ວຍ (13:1) ຄນະຂອງຄຣິສຕະຈັກໄດ້ວາງມືໃສ່ຜູ້ທີ່ໄດ້ຖືກຮ້ອງໃຫ້ມາຮັບໃຊ້ (13:3). ສະນັ້ນ ຄຣິສຕະຈັກໃນສມັຍແລກໄດ້ຮັບຮູ້ຂອງພຣະຣາຊທານ ອະທິຖານ ແລະວາງມືໃສ່ຜູ້ທີ່ໄດ້ຖືກຊົງເລືອກໃຫ້ມາຮັບໃຊ້.

ທ້າຍສຸດນີ້ ໂປໂລໄດ້ບອກໃຫ້ຕີໂມທຽວ "ຈົ່ງລະວັງຕົວແລະການສັ່ງສອນ" ດ້ວຍຄວາມພາກພຽນສູ້ທົນ. ສຳລັບໂປໂລ ແລ້ວ ຄວາມລອດພົ້ນຈະຕ້ອງມີຄວາມພາກພຽນສູ້ທົນ (2 ຕີໂມທຽວ 2:12; ໂກໂລຊາຍ 1:21-23). ການເປັນແບບ ຢ່າງຂອງຕີໂມທຽວ ຊາວເອເຟໂຊທີ່ມີຄວາມເຊື່ອຈະຖືກຮ້ອງໃຫ້ມີຄວາມພາກພຽນສູ້ທົນໃນຄວາມເຊື່ອແລະຄວາມຮັກ ຈົນເຖິງເປົ້າໝາຍປາຍທາງ-ຄວາມລອດພົ້ນ.

<u>ຄຳຖາມ:</u>

1. ພວກເຮົາຈະຝຶກຝົນຕົນເອງດ້ວຍກົດວິນັຍທາງຝ່າຍຈິດວິນຍານຢ່າງໃດ?
2. ເປັນໜຍັງບາງຄົນອຸທິດຕົນຝຶກກາຍະກັມເພື່ອໄປແລ່ນແຂ່ງຂັນລະຍະຍາວ ເຊິ່ງເປັນພຽງແຕ່ຂອງຊົ່ວຄາວ, ແລະໄດ້ ເມີນເສີຍຝຶກກາຍະກັມທາງຝ່າຍຈິດວິນຍານ ເຊັ່ນອ່ານພຣະຄຳແລະອະທິຖານ ເຊິ່ງຈະນຳຜົນອັນຕລອດໄປມາໃຫ້?
3. ມີອາຫານອັນໃດແດ່ເປັນອາຫານທີ່ຫວງຫ້າມໃນສມັຍນີ້ສຳລັບຜູ້ຕິດຕາມພຣະຄຣິດ?
4. ຕີໂມທຽມຈະຕ້ອງເປັນແບບຢ່າງໃຫ້ຜູ້ທີ່ເຊື່ອຂອງຊາວເອເຟໂຊໃນທ່າງໃດແດ່?

*ສຈ. ບຸນເຮົ່ງ ພົງປຣະພັນ*

# ບົດຮຽນທີ 6
# ພຣະເຈົ້າແລະເງິນຄຳ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຕີໂມທຽວ 6:ຂ-19
**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** 1 ຕີໂມທຽວ 6
**ຈຸດສຳຄັນຂອງບົດຮຽນນີ້:** ຄຣິສຕຽນຄວນຈະເອົາຄວາມຮັ່ງມີຂອງຕົນສົ່ງເສີມໂບດ
**ຄຳຖາມເພື່ອການສຳຣວດ:** ເຮົາຈະຮູ້ໄດ້ຢ່າງໃດວ່າເຮົາເປັນຄົນຮັກເງິນຫລາຍກວ່າພຣະເຈົ້າ
**ຈຸດປະສົງຂອງບົດຮຽນນີ້:** ການຮັ່ງມີຂອງເຮົາແມ່ນພຣະເຈົ້າເປັນຜູ້ໂຜດປະທານ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກຫນ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.

## ບົດນຳ

ເຮົາມັກຈະເວົ້າເລື້ອຍໆວ່າຂອບຄຸນພຣະເຈົ້າເງິນເດືອນຂຶ້ນ, ຂອບຄຸນພຣະເຈົ້າໄດ້ເງິນອິນຄຳແທກຄືນ, ຂອບຄຸນພຣະເຈົ້າທີ່ມີລາຍໄດ້ເພີ້ມ ແລະຂອບຄຸນໃນລາຍໄດ້ອື່ນໆ ຄວາມຈິງແລ້ວການຂອບຄຸນນັ້ນເປັນການດີແລະເໝາະສົມທີ່ຄຣິສຕຽນຈະຕ້ອງຂອບພຣະຄຸນ ແຕ່ສິ່ງທີ່ຍັງຂາດຢູ່ແມ່ນການປະຕິບັດຕາມຄຳວ່າຂອບຄຸນ ຫລາຍເທື່ອເຮົາເວົ້າວ່າຂອບຄຸນແຕ່ບໍ່ໄດ້ຈິກກະເປົາຖວາຍຕາມສິ່ງທີ່ເຮົາຂອບຄຸນ. ທ່ານ John D. Rockefeller ເປັນຄົນຮັ່ງທີ່ສຸດໃນໂລກຖືກສຳພາດວ່າ ມີເງິນຫລາຍປານໃດຈຶ່ງຈະພໍກັບຄວາມຕ້ອງການ? ລາວຕອບວ່າ ມີອີກຈັກນ້ອຍກ່ອນ. ຄຣິສຕຽນເຮົາໃນໂບດກໍມີຄວາມຄິດອັນດຽວກັບເພິ່ນນັ້ນຫລະ ມີອີກນ້ອຍນຶ່ງກໍຈະເຊົາ ຫລືລາງຄົນເວົ້າວ່າມີເງິນຫລາຍຈະປຸກໂບດວ່າຊັ້ນ.

**ຫລັກຄຳສອນ 6:1-5**

ຄຣິສຕຽນບໍ່ຄວນຄິດວ່າຕົນເອງມີພຣະເຈົ້າແລ້ວ ບໍ່ຍອມນັບຖືເຈົ້ານາຍຂອງຕົນທີ່ໂຮງງານໂປໂລສອນວ່າ *"ສ່ວນຄົນທັງຫລາຍທີ່ເຂົ້າຢູ່ໃຕ້ແອກແຫ່ງຄວາມເປັນຂ້ອຍຂ້ານັ້ນໃຫ້ຖືວ່ານາຍຂອງຕົນເປັນຜູ້ສົມຄວນໄດ້ຮັບກຽດທຸກຢ່າງເພື່ອວ່າພຣະນາມຂອງພຣະເຈົ້າແລະຄຳໂອວາດຈະບໍ່ຖືກປະໝາດ"* (ຂໍ້ 1) ໃນສມັຍນັ້ນພວກຂ້ອຍຂ້າຖືວ່າເປັນຄົນ ອີກຊົນຊັ້ນຕ່ຳບໍ່ມີສິດໃດໆ ແຕ່ມີພວກຂ້ອຍຂ້າຫລາຍຄົນໄດ້ຮັບໜ້າທີ່ອັນສຳຄັນຍ້ອນການເຮັດດີ ນັບຖືເຈົ້ານາຍຢ່າງຖືກຕ້ອງຈົນເຈົ້ານາຍເຫັນຄຸນງາມຄວາມດີແລ້ວເພິ່ນກໍມອບວຽກສຳຄັນໃຫ້ເຮັດ. ຄຣິສຕຽນສມັຍນີ້ກໍຄວນນັບຖືພວກເຈົ້ານາຍທີ່ໂຮງການຕາມຫລັກຄຳສອນ ການເຮັດດັ່ງນີ້ນອກຈາກທ່ານຈະເລື່ອນຂຶ້ນເປັນຜູ້ສຳຄັນຂອງໂຮງງານແລ້ວຍັງສາມາດຈູງໃຈພວກເຈົ້ານາຍໃຫ້ເຊື່ອພຣະເຈົ້າກໍເປັນໄດ້. ໃນກໍຣະນີເຈົ້ານາຍເປັນຜູ້ເຊື່ອໂປໂລສອນວ່າບໍ່ໃຫ້ຄິດປມາດນາຍຂອງຕົນ *"ຝ່າຍຂ້ອຍຂ້າທີ່ມີນາຍເປັນຜູ້ເຊື່ອແລ້ວກໍຢ່າໄດ້ຄິດປມາດນາຍນັ້ນ ເພາະເຫດວ່າເປັນພີ່ນ້ອງກັນແຕ່ຫລາຍກວ່ານັ້ນໃຫ້ຮັບໃຊ້ນາຍໃຫ້ດີຂຶ້ນ"* (ຂໍ້ 2) ສມັຍເຈົ້ານາຍແລະຂ້າທາດນັ້ນ ເມື່ອພວກເຈົ້ານາຍເປັນຜູ້ເຊື່ອພຣະ

ເຈົ້າແລ້ວພວກເຂົາມັກຈຳນຳເອົາຂ້າທາດມາເຊື່ອພຣະເຈົ້າຕາມເຂົາ ຖືວ່ານາຍຜູ້ນັ້ນເຮັດການດີຕໍ່ຂ້າທາດຂອງຕົນອັນໃຫຍ່ຫລວງ ເພາະວ່າທີ່ບ້ານພວກເຂົາເປັນຂ້າທາດແລະເຈົ້ານາຍ ແຕ່ໃນໂບດເຂົາເປັນອ້າຍນ້ອງຮ່ວມຄວາມເຊື່ອ.

ໂປໂລສັ່ງເຕືອນຜູ້ສອນປອມທີ່ບໍ່ນັບຖືແລະປະຕິບັດຕາມຫລັກຂອງພຣະເຢຊູຄຣິດ *"ຖ້າຜູ້ໃດສອນຜິດໄປຈາກນີ້ ແລະບໍ່ຍອມເຫັນຕາມພຣະທັມອັນມີຫລັກຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ ແລະຄຳໂອວາດທີ່ສົມກັບການນັບຖືພຣະເຈົ້າຢ່າງຖືກຕ້ອງ, ຜູ້ນັ້ນກໍເປັນຄົນຈອງຫອງ ບໍ່ຮູ້ຈັກສິ່ງໃດ ແຕ່ມົວເມົາໃນການຖົກຖຽງກັນ"* (ຂໍ້ 3-4). ໃນສັງຄົມແລະຄວາມເຊື່ອຂອງຄົນຢິວມັກຈະນັບຖືພຣະເຈົ້າແລະກົດບັນຍັດຂອງໂມເຊເທົ່ານັ້ນ ແຕ່ປະຕິເສດພຣະເຢຊູ, ພວກເຂົາພາກັນອ້າງວ່າພວກເຂົານັບຖືພຣະເຈົ້າຢ່າງຖືກຕ້ອງ. ດ້ວຍເຫດນີ້ໂປໂລຈຶ່ງເວົ້າວ່າເປັນຄົນຈອງຫອງທີ່ບໍ່ຍອມຮັບພຣະບຸດອົງດຽວຂອງພຣະເຈົ້າ.

## <u>ພໍໃຈໃນສິ່ງທີ່ມີ</u> 6:6-10

ການນັບຖືພຣະເຈົ້າຢ່າງຖືກຕ້ອງເປັນຜົນກຳໄລມະຫາສານແທ້ຫາກມີຊີວິດຈິດໃຈເປັນແນວນັ້ນ ພວກຄຣູສອນເຫລົ່ານີ້ໂປໂລຮ້ອງເຂົາວ່າເປັນພວກຄຣູສອນປອມ, ຄຳວ່າປອມໝາຍເຖິງພວກເຂົາປອມຕົວເປັນຜູ້ສອນພຣະທັມເພື່ອຫາຜົນປະໂຍດສ່ວນຕົວ ບໍ່ຮູ້ຈັກພໍໃຈກັບສິ່ງຕົນເອງມີຢູ່ຈຶ່ງກາຍເປັນຄົນໂລບມາກທີ່ພາໃຫ້ຫລົງໄປຈາກຄວາມເຊື່ອ.

ເພື່ອປ້ອງກັນບໍ່ໃຫ້ເຮົາກາຍເປັນຄົນໂລບແລະຫລົງໄປຈາກຄວາມເຊື່ອໂປໂລແນະນຳວ່າ *"ເພາະພວກເຮົາບໍ່ໄດ້ເອົາສິ່ງໃດເຂົ້າມາໃນໂລກສັນໃດ ເຮົາກໍຈະເອົາສິ່ງໃດອອກໄປຈາກໂລກບໍ່ໄດ້ສັນນັ້ນ ແຕ່ຖ້າພວກເຮົາມີອາຫານການກິນແລະເຄື່ອງນຸ່ງຫົ່ມກໍໃຫ້ເຮົາພໍໃຈກັບສິ່ງເຫລົ່ານັ້ນ"* (ຂໍ້ 7-8). ໂປໂລບໍ່ໄດ້ແນະນຳໃຫ້ເຮົາເປັນຄົນກຽດຄ້ານບໍ່ຕ້ອງຊອກຕ້ອງຫາອັນໃດ ແຕ່ບໍ່ໃຫ້ເຫັນເງິນຄຳແລະສິ່ງຂອງສຳຄັນໄປກວ່າພຣະເຈົ້າ ໂດຍການພໍໃຈກັບສິ່ງທີ່ຕົນເອງມີ ຫາກບໍ່ພໍໃຈແລ້ວອາດຈະເປັນອັນຕະລາຍແກ່ຕົນ *"ສ່ວນຄົນທີ່ຢາກລ່ຳລວຍ ກໍຕົກຢູ່ໃນການທົດລອງ, ໃນບ້ວງແຮ້ວ, ແລະຕັນຫາອັນໂງ່ຫລາຍຢ່າງ ຊຶ່ງເປັນພັຍແກ່ຕົວທີ່ເຮັດໃຫ້ມະນຸດຈົມລົງໃນຄວາມວິນາດຈິບຫາຍເສື່ອມສູນໄປ"* (ຂໍ້ 9). ຄວາມຈິງແລ້ວການລ້ຳລວຍນັ້ນບໍ່ຜິດຫລັກສິນທັມປະການໃດດອກ ພວກຜູ້ຮັບໃຊ້ພຣະເຈົ້າໃນສມັຍພຣະຄັມພີເດີມຫລາຍຄົນກໍເປັນຄົນລ້ຳລວຍມີຊັບສົມບັດ, ມີສັດລ້ຽງ ແລະມີຂ້າທາດຢ່າງຫລວງຫລາຍ ແຕ່ເພິ່ນລ້ຳລວຍໃນທາງຖືກຕ້ອງພຣະເຈົ້າກໍອວຍພອນເພິ່ນ, ຫາກເຮົາຢາກລ້ຳລວຍກໍຈົ່ງນັບຖືພຣະເຈົ້າແລະປະຕິບັດພຣະເຈົ້າຢ່າງຖືກຕ້ອງແລ້ວພຣະເຈົ້າຈະໂຜດປະທານໃຫ້ເປັນຄົນລ້ຳລວຍ. *"ແຕ່ກ່ອນອື່ນ ທ່ານທັງຫລາຍຈົ່ງສແວງຫາຣາຊອານາຈັກຂອງພຣະເຈົ້າ ແລະຄວາມຊອບທັມຂອງພຣະອົງ ແລະພຣະອົງຈະຊົງເພີ້ມເຕີມສິ່ງທັງປວງເຫລົ່ານີ້ໃຫ້ແກ່ທ່ານ"* (ມັດທາຍ 6:33). ຄຳວ່າ ເພີ້ມເຕີມໝາຍຄວາມວ່າສິ່ງທີ່ມີຢູ່ແລ້ວຈະໄດ້ອີກ.

*"ເພາະວ່າການຮັກເງິນຄຳເປັນມູນເຄົ້າຂອງຄວາມຊົ່ວທຸກຢ່າງ"* (ຂໍ້ 10ກ)ເງິນຄຳບໍ່ແມ່ນຂອງຊົ່ວມົວໝອງແຕ່ຢ່າງໃດແຕ່ການຮັກເງິນຄຳຕ່າງຫາກທີ່ນຳພາຄົນເຮົາໃຫ້ເຮັດຊົ່ວ, ທ່ານອາດຈະເຫັນຜູ້ຮັບໃຊ້ພຣະເຈົ້າຫລາຍຄົນຕົກໄປແລ້ວຍ້ອນຢາກໄດ້ຫລາຍ, ສິ່ງນັ້ນກໍກາຍເປັນບ້ວງແຮ້ວທີ່ຮັດຄໍເໝືອນແຮ້ວຮັດຄໍນົກທີ່ພວກນາຍພານຫ້າງໄວ້ໂດຍເອົາເຍື່ອລໍ້ນົກ. ບາງທີນົກອາດຈະຮູ້ແລ້ວວ່າແມ່ນແຮ້ວ ແຕ່ເນື່ອງຈາກຄວາມຢາກຈຶ່ງຕັດສິນໃຈຈະຄາບເຍື່ອທີ່ຢູ່ໃນແຮ້ວແຕ່ປາກົດວ່າປາກບໍ່ທັນເຖິງເຍື່ອແຮ້ວກໍຮັດຄໍຕາຍເສັຽກ່ອນ. ຜູ້ຮັບໃຊ້ແລະຄົນທີ່ຢາກລ້ຳລວຍກໍຈະເປັນຄືນົກນັ້ນແທ້ຄືຈະຕາຍຈາກຄວາມຍ້ອນເງິນ. ການມີເງິນຄຳຫລວງຫລາຍນັ້ນກໍດີຫາກເຮົາໃຊ້ເງິນທີ່ເຮົາມີຢູ່ເປັນຜົນປະໂຍດຕໍ່ຣາຊແຜ່ນດິນຂອງພຣະເຈົ້າ, ໂບດໃຫຍ່ໆທີ່ເຮົາເຫັນຢູ່ນັ້ນແມ່ນແຕ່ຕ່ອນເງິນຂອງຄົນຮັ່ງມີທີ່ຮັກພຣະເຈົ້າຫລາຍກວ່າເງິນຄຳຂອງຕົນເອງຈຶ່ງໄດ້ຖວາຍເພື່ອພຣະຣາຊກິຈຂອງພຣະເຈົ້າ ຄົນທີ່ຖວາຍເງິນກ້ອນໃຫຍ່ສ້າງໂບດເຫລົ່ານັ້ນຍັງບໍ່ມີໃຜທຸກຈັກຄົນເທື່ອ ແຕ່ກັບລວຍຂຶ້ນທຸກວັນ.

*"ແລະເພາະເຫດຄວາມໂລບນີ້ແຫລະ, ຈຶ່ງຊັກຈູງລາງຄົນໃຫ້ຫລົງໄປຈາກຄວາມເຊື່ອ ແລະແທງຕົວເອງຈົນຊອດດ້ວຍຄວາມເຈັບແສບຫລາຍປະການ"* (ຂໍ້ 10ຂ). ຄວາມໂລບທີ່ໂປໂລກ່າວໝາຍເຖິງຄວາມໂລບມາກໂລພາ ຫລືແມ່ນຄວາມຢາກໄດ້ຫລາຍເກີນໄປ. ຄວາມໂລບນີ້ເຮັດໃຫ້ຜູ້ຮັບໃຊ້ພຣະເຈົ້າແລະຄຣິສຕຽນຫລາຍຄົນຫລົງ ຜິດຄິດຊົ່ວແລະຂາຍໜ້າໄປຈາກພຣະເຈົ້າແລ້ວ ແຕ່ໃນສາຍຕາຂອງຄົນທົ່ວໄປມັກຈະເຫັນແຕ່ບັນດາອາຈານທີ່ເຮັດການເຊັ່ນນີ້ ດ້ວຍວ່າອາຈານເປັນເປົ້າສາຍຕາຂອງສະມາຊິກແລະຄົນທົ່ວໄປ ຄວາມຈິງແລ້ວຄວາມໂລບນີ້ມັນເກີດກັບພວກອາຈານນ້ອຍກວ່າຄຣິສຕຽນທົ່ວໄປ, ດັ່ງນັ້ນຈະເປັນອາຈານກໍດີ, ເຖົ້າແກ່ຫລືຜູ້ປຶກຄອງກໍດີ, ນາຍຄັງກໍດີ ສະມາຊິກກໍດີຈົ່ງຟັງຄຳຕັກເຕືອນຂອງໂປໂລໃຫ້ດີ ເພື່ອວັນສຸດທ້າຍຈະບໍ່ໄດ້ເຮັດຄືຢູດາ ອິສກາຣີອົດ (ມັດທາຍ 27:5).

## <u>ຈົ່ງຫລີກໜີ</u> 6:11-16

ໂປໂລບອກຕີໂມທຽວວ່າ *"ແຕ່ເຈົ້າຜູ້ເປັນຄົນຂອງພຣະເຈົ້າ, ຈົ່ງຫລີກໜີຈາກສິ່ງເຫຼົ່ານີ້ ແລະຈົ່ງຕິດຕາມຄວາມຊອບທັມ, ຄວາມນັບຖືພຣະເຈົ້າຢ່າງຖືກຕ້ອງ, ຄວາມສັດຊື່, ຄວາມຮັກ: ຄວາມໝັ້ນພຽນ, ແລະຄວາມອ່ອນສຸພາບ ຈົ່ງອົດສາແຂ່ງຂັນສູ້ຕາມແນວທາງຂອງຄວາມເຊື່ອ ຈົ່ງຍຶດເອົາຊີວິດອັນຕລອດໄປເປັນນິດໄວ້ ຊຶ່ງພຣະເຈົ້າໄດ້ຊົງເອີ້ນໃຫ້ເຈົ້າໄດ້ຮັບນັ້ນ"* (ຂໍ້ 11-12). ສິ່ງເຫລົ່ານັ້ນທີ່ໂປໂລກ່າວເຖິງແມ່ນເຣື່ອງການສິດສອນແບບບໍ່ເອົາພຣະເຢຊູເປັນຫລັກ, ການຮັກເງິນຄຳຊຶ່ງເປັນບໍ່ເກີດຂອງຄວາມຊົ່ວຮ້າຍທຸກຢ່າງ, ແຕ່ໃຫ້ຕັ້ງໃຈເຮັດສິ່ງທີ່ເພິ່ນກ່າວມາຂ້າງເທິງຄື;

1. ຕິດຕາມຄວາມຊອບທັມ.
2. ຄວາມນັບຖືພຣະເຈົ້າຢ່າງຖືກຕ້ອງ.
3. ສັດຊື່.
4. ມີຄວາມຮັກ.
5. ມີຄວາມໝັ້ນພຽນ.
6. ຄວາມອ່ອນສຸພາບ.
7. ອົດສາແຂ່ງຂັນສູ້ຕາມແນວທາງຂອງຄວາມເຊື່ອ.

ໂດຍຍຶດເອົາຊີວິດອັນຕລອດໄປເປັນນິດເປັນຫລັກຄ້ຳປະກັນ ໂດຍເຂົ້າໃຈວ່າໃຜຈະເວົ້າຫຍັງໃຫ້ກໍຕາມ ຂ້າພະເຈົ້າມີຊີວິດນິຣັນແລ້ວ, ໃຜຈະຮັ່ງມີຍ້ອນການໂລບກໍຕາມ ຂ້າພະເຈົ້າຈະບໍ່ໂລບ ເພາະຂ້າພະເຈົ້າມີຊີວິດນິຣັນແລ້ວ *"ເພາະພວກເຮົາບໍ່ໄດ້ເອົາ ສິ່ງໃດເຂົ້າມາໃນໂລກສັນໃດ ເຮົາກໍຈະເອົາສິ່ງໃດອອກໄປຈາກໂລກບໍ່ໄດ້ສັນນັ້ນ"* (ຂໍ້ 7-8). ສອງປະເດັນໃຫຍ່ທີ່ໂປໂລສັ່ງໃຫ້ຕີໂມທຽວເຮັດມີ;

<u>1. ໃຫ້ຫລີກໜີ,</u> ແປວ່າບໍ່ໃຫ້ເຮັດ, ບໍ່ໃຫ້ເວົ້າ, ບໍ່ໃຫ້ວ່າ, ບໍ່ໃຫ້ກ່ຽວຂ້ອງພົວພັນແຕ່ປະການໃດ ສລູບແລ້ວເປັນການຫ້າມ. ຫລາຍເທື່ອພວກເຮົາກໍຫລົບໜີຈາກບັນຫາຕ່າງໆຄືກັນ ແຕ່ປາກົດວ່າໜີໄປແລ້ວບັນຫາກະຍັງຕາມມາຢູ່ທັງນີ້ກໍເພາະວ່າ ເຮົາເອງຫລືຄົນໃນເຮືອນເຮົາຍັງເຮັດແນວນັ້ນຢູ່, ຍັງເວົ້າແນວນັ້ນຢູ່, ຍັງກ່ຽວຂ້ອງພົວພັນກັບສິ່ງນັ້ນຢູ່. ດັ່ງນັ້ນເຮົາແລະຄົນໃນເຮືອນເຮົາຄວນຮຽນເອົາວິທີຫລີກໜີຂອງໂປໂລສັ່ງຕີໂມທຽວຈະໄດ້ຜົນແນ່ນອນ.

<u>2. ໃຫ້ປະຕິບັດ,</u> ຄວາມຊອບທັມຄືຊອບທັມໃນສາຍພຣະເນດຂອງພຣະເຈົ້າ. ຄວາມນັບຖືພຣະເຈົ້າຢ່າງຖືກຕ້ອງ ເພາະວ່າມີຫລາຍຄົນນັບຖືພຣະເຈົ້າແບບບໍ່ຖືກຕ້ອງ, ສັດຊື່ຕໍ່ທຸກສິ່ງ, ຄວາມຮັກຄືຮັກພຣະເຈົ້າຕ້ອງຮັກມະນຸດ, ຄວາມໝັ້ນພຽນໃນການງານຕ່າງໆ, ຄວາມອ່ອນສຸພາບໃນດ້ານກິຣິຍາແລະວາຈາ. ອົດສາແຂ່ງຂັນສູ້ຕາມແນວທາງຂອງຄວາມເຊື່ອ ແປວ່າຢ່າຫວັ່ນໄຫວໃນຍາມຍາກ.

## <u>ສອນຄົນຮັ່ງມີ</u> 6:17-19

ໃນໂບດເມືອງເອເຟໂຊບ່ອນຕີໂມທຽວເປັນອາຈານຮັບໃຊ້ຢູ່ນັ້ນມີຄົນຮັ່ງມີຢູ່ຈຳນວນນຶ່ງທີ່ໂປໂລຮູ້ຈັກພວກເຂົາເພິ່ນຈຶ່ງ

ສັ່ງຕີໂມທຽວວ່າ *"ຈົ່ງສັ່ງຄົນທີ່ຮັ່ງມີຝ່າຍໂລກ ຢ່າໃຫ້ເຂົາເປັນຄົນມີໃຈອວດອົ່ງຖືໂຕ ຫລືວາງໃຈໃນຊັບສິນທີ່ບໍ່ທ່ຽງ ໝັ້ນ ແຕ່ໃຫ້ວາງໃຈໃນພຣະເຈົ້າ ຜູ້ຊົງປະທານສິ່ງສາຣະພັດໃຫ້ແກ່ເຮົາທັງຫລາຍຢ່າງບໍຣິບູນ"* (ຂໍ້ 17) ໂປໂລບໍ່ໄດ້ ເວົ້າໝິ່ນປມາດຄົນຮັ່ງມີ ແຕ່ຢາກບອກໃຫ້ພວກເຂົາສົນທຽບຊັບສົມບັດໃນໂລກທີ່ບໍ່ທ່ຽງໝັ້ນກັບຊັບສົມບັດຢ່າງບໍຣິ ບູນໃນຟ້າສັວນ ຄືຊີວິດອັນຕລອດໄປເປັນນິດ, ດ້ວຍວ່າຫາກຜູ້ໃດຮັກຊັບສົມບັດໃນໂລກຫລາຍກວ່າຮັກພຣະເຈົ້າຈະ ຕ້ອງເສັຽທັງສົມບັດແລະຊີວິດ, ຜູ້ໃດຮັກພຣະເຈົ້າຫລາຍກວ່າຊັບສົມບັດຝ່າຍໂລກຈະໄດ້ສິ່ງສາຣະພັດຢ່າງບໍຣິບູນໃນ ຟ້າສວັນ. ດັ່ງນັ້ນມີເງິນຄຳຮັ່ງມີກໍຄວນຂອບພຣະຄຸນພຣະເຈົ້າດ້ວຍການຖວາຍຕາມອັດຕຣາສ່ວນທີ່ພຣະເຈົ້າວາງໄວ້ ການເຮັດດັ່ງນີ້ຈະກາຍເປັນຜູ້ຮັບສິ່ງສາຣະພັດທັງໃນໂລກແລະໃນສວັນອີກດ້ວຍ. *ໃຫ້ເຂົາຮັ່ງມີໃນການປະຕິບັດອັນດີ ງາມ ໃຫ້ເຂົາມີໃຈສັດທາເອື້ອເຟື້ອເຜື່ອແຜ່ ແລະບໍ່ເຫັນແກ່ຕົວ ຢ່າງນີ້ຈຶ່ງຈະທ້ອນໂຮມຊັບສົມບັດໄວ້ສຳລັບຕົນ ເພື່ອ ເປັນຮາກຖານອັນດີສຳລັບຄາວພາຍໜ້າ ເພື່ອເຂົາຈະໄດ້ຍຶດເອົາຊີວິດອັນທ່ຽງແທ້"* (ຂໍ້ 19).

**<u>ຄຳຖາມ</u>**

1. ເປັນຫຍັງຄຣິສຕຽນສ່ວນຫລາຍຂອບຄຸນພຣະເຈົ້າໃນສິ່ງທີ່ໄດ້ມາ ງ່າຍກວ່າການຖວາຍໃຫ້ພຣະເຈົ້າ?

2. ເປັນຫຍັງໂປໂລຈຶ່ງສອນໃຫ້ນັບຖືເຈົ້ານາຍ?

3. ຄຳສອນທີ່ມີຫລັກ ແລະບໍ່ມີຫລັກແຕກຕ່າງກັນແນວໃດ?

4. ດ້ວຍເຫດໃດໂປໂລຈຶ່ງສອນໃຫ້ພໍໃຈໃນສິ່ງທີ່ຕົນມີ?

5. ເຮັດແນວໃດເຮົາຈະຮູ້ວ່າເຮົາຮັກພຣະເຈົ້າຫລາຍກວ່າຮັກເງິນຄຳ?

6. ການຮັກເງິນຄຳເປັນຈຸດເລີ້ມຕົ້ນຂອງການຊົ່ວຮ້າຍແນວໃດ?

7. ເຮັດແນວໃດຄົນຮັ່ງມີຈຶ່ງຈະຮັກສາຊັບສົມບັດຂອງຕົນໄວ້ໄດ້?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

# ບົດຮຽນທີ 7
# ເລົ້າໂລມໃຫ້ຕັ້ງໝັ້ນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຂ ຕີໂມທຣອ 1:1-14
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ຂ ຕີໂມທຣອ 1
**ຈຸດສຳຄັນຂອງບົດຮຽນນີ້:** ໂອກາດສືບທອດການດີ
**ຄຳຖາມເພື່ອການສຳຣວດ:** ແມ່ນຫຍັງເຮັດໃຫ້ເຮົາຢາກສືບທອດ?
**ຈຸດປະສົງຂອງບົດຮຽນນີ້:** ເລົ້າໂລມໃຫ້ສືບທອດການດີ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ຈຸດປະສົງໂປໂລຂຽນຈົດໝາຍສະບັບນີ້ກໍເພື່ອຈະເລົ້າໂລມໃຈ ແລະບອກວິທີການໃນການປະກາດຂ່າວປະເສີດໃນເມື່ອປະເຊີນບັນຫາໃນດ້ານການຮັບໃຊ້ພຣະເຈົ້າຂອງຕີໂມທຣອທີ່ເມືອງເອເຟໂຊ.

## ສະແດງຄວາມນັບຖື 1:1-2

ໂປໂລຂຶ້ນຕົ້ນຈົດໝາຍໂດຍໃຊ້ຄຳເວົ້າວ່າ "*ໂປໂລ ອັຄສາວົກຂອງພຣະເຢຊູ*" ຊຶ່ງເປັນວິທີການເລີ່ມຕົ້ນຈົດໝາຍຂອງໂປໂລທີ່ມີນໍ້າໜັກສຳລັບຄຣິສຕຽນທົ່ວໄປ ດ້ວຍວ່າຄຳວ່າ ອັຄສາວົກ ໃນພາສາກຣີກ ຊຶ່ງເປັນພາສາສມັຍພຣະເຢຊູ ຄືສມັຍພຣະຄັມພີໃໝ່ແປວ່າ ຜູ້ຖືກສົ່ງໄປ ຫລືແຕ່ງຕັ້ງສົ່ງອອກໄປຕາງໜ້າພຣະເຢຊູ ດັ່ງນັ້ນຈຶ່ງ ມີຕຳແໜ່ງເໜືອເຖົ້າແກ່ຫລືຜູ້ປົກຄອງ ແລະຍັງມີຕຳແໜ່ງເໜືອຄຣິສຕະຈັກ (ໂບດ) ອີກດ້ວຍ, ນອກຈາກຄຳວ່າອັຄສາວົກແລ້ວ ເພິ່ນຍັງອ້າງອີງຕໍ່ໄປວ່າ *ອັຄສາວົກຂອງພຣະເຢຊູ* ແປວ່າພຣະເຢຊູເປັນຜູ້ແຕ່ງຕັ້ງເພິ່ນ ແລະນາມຊື່ ເຢຊູນີ້ແຫລະເປັນຄວາມຫວັງຂອງຄຣິສຕຽນທຸກໆຄົນ. ດ້ວຍຄຳວ່າ *ອັຄສາວົກຂອງພຣະເຢຊູ* ໂບດຄຣິສຕຽນທຸກແຫ່ງຈະຕ້ອງນັບຖື, ໃຫ້ກຽດໂດຍເຊື່ອຟັງອັຄສາວົກສເມີ, ດ້ວຍເຫດນີ້ໂປໂລຈຶ່ງ ເລີ່ມຕົ້ນຈົດໝາຍວ່າ "*ໂປໂລ ອັຄສາວົກຂອງພຣະເຢຊູຄຣິດທາງນໍ້າພຣະທັຍຂອງພຣະເຈົ້າຕາມພຣະສັນຍາທີ່ຈະຊົງ ປະທານຊີວິດຊຶ່ງມີຢູ່ໃນພຣະເຢຊູຄຣິດ*" (ຂໍ້ 1).

"*ເຖິງຕີໂມທຣອທີ່ຮັກຂອງເຮົາ*" (ຂໍ້ 2) ຫາກສົມທຽບໃສ່ພາສາເດີມແລ້ວຍັງຂາດຄຳວ່າ "ລູກ" ໃນພຣະຄັມພີລາວເຮົາ

ດັ່ງນັ້ນຈຶ່ງຂໍນຳທ່ານໄປອ່ານ 1ຕີໂມທຣວ 1:2 ດັ່ງນີ້ *"ເຖິງ ຕີໂມທຣວລູກແທ້ຂອງເຮົາໃນຄວາມເຊື່ອ "* ນີ້ເປັນສຳນວນໃນການເວົ້າດ້ວຍໃຈຮັກຂອງໂປໂລທີ່ມີຕໍ່ຕີໂມທຣວ, ຫາກເປັນຄົນລາວມັກຈະຮ້ອງວ່າລູກຮັກຫລືພໍ່ຮັກຕາມພາສາທ້ອງຖິ່ນ. ຕີໂມທຣວບໍ່ແມ່ນລູກທີ່ເກີດມາຈາກການຂອງໂປໂລ ແຕ່ແມ່ນລູກທີ່ເກີດດ້ວຍຄວາມເຊື່ອດຽວກັນ ດ້ວຍວ່າໂປໂລເອງເປັນຜູ້ນຳຕີໂມທຣວມາຮັບເຊື່ອພຣະເຢຊູ ແລະຍັງໃຫ້ບັບຕິສມາຕີໂມທຣວດ້ວຍຕົວເພິ່ນເອງດ້ວຍເຫດຜົນອັນນີ້ເພິ່ນຈຶ່ງຮ້ອງຕີໂມທຣວວ່າລູກແທ້ໃນຄວາມເຊື່ອ (ຊຶ່ງເປັນພາສາຂອງຄຣິສຕຽນ).

*"ຂໍພຣະຄຸນ, ພຣະເມດຕາ, ແລະສັນຕິສຸກ ຊຶ່ງມາຈາກພຣະບິດາຂອງພຣະເຢຊູຄຣິດ ອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ຈົ່ງມີຢູ່ກັບເຈົ້າເທີ້ນ "* (ຂໍ້ 2). ເປັນຄຳເວົ້າມາດຕະຖານຂອງໂປໂລ ເພາະວ່າດ້ວຍພຣະເມດຕາຂອງພຣະເຈົ້າເຮົາທັງຫລາຍຈຶ່ງລອດພົ້ນຈາກການຊົ່ວຮ້າຍວັນຕໍ່ວັນ, ດ້ວຍເຫດນີ້ໂປໂລຈຶ່ງຂອບພຣະຄຸນພຣະເຈົ້າສຳລັບຕີໂມທຣວຢູ່ສເມີ.

<u>ຂອບພຣະຄຸນດ້ວຍຄວາມເຊື່ອ</u> 1:3-5

*"ເມື່ອເຮົາລະນຶກເຖິງເຈົ້າຢູ່ສເມີໃນການອ້ອນວອນແລະທູນຂໍ ທັງກາງວັນແລະກາງຄືນ "* ມີຄວາມໝາຍວ່າທຸກຄັ້ງທີ່ໂປໂລຄິດຮອດຕີໂມທຣວບໍ່ວ່າກາງວັນແລະກາງຄືນໂປໂລກໍຈະອ້ອນວອນເພື່ອຕີໂມທຣວຢູ່ສເມີ, ໂປໂລໄດ້ປະຕີໂມທຣວໄວ້ທີ່ເມືອງເອເຟໂຊ ເພື່ອຈະເປັນຜູ້ນຳຄຣິສຕຽນໃນເມືອງນັ້ນ ສ່ວນໂປໂລຈຳຕ້ອງເດີນທາງໄປປະກາດທີ່ແຂວງມາເກໂດເນັຽ ຈຶ່ງເປັນຕົ້ນເຫດໃຫ້ໂປໂລຄິດຮອດຕີໂມທຣວໃນການປະກາດໃນຖ້າມກາງພວກຄຣູສອນປອມທີ່ເມືອງເອເຟໂຊນັ້ນ. (ອ່ານ 1ຕີໂມທຣວ 1:3). ດ້ວຍເຫດນີ້ໂປໂລຈຶ່ງອ້ອນວອນເພື່ອຕີໂມທຣວທັງກາງວັນແລະກາງຄືນເພື່ອຕີໂມທຣວຈະໄດ້ມີກຳລັງແລະມີສະຕິປັນຍາໃນການທີ່ຈະຕໍ່ສູ້ກັບບັນຫາຕ່າງໆ.

ໂປໂລຂອບພຣະຄຸນພຣະເຈົ້າດ້ວຍໃຈສຳນຶກຜິດແລະຊອບອັນບໍຣິສຸດມີຄວາມໝາຍວ່າໂປໂລຮູ້ວ່າອັນໃດຖືກອັນໃດຜິດດ້ວຍໃຈອັນບໍຣິສຸດຂອງເພິ່ນໆຮູ້ວ່າການກະທຳຂອງເພິ່ນເປັນທີ່ພໍພຣະທັຍພຣະເຈົ້າ, ໂປໂລມີຈິດສຳນຶດຜິດແລະຊອບເໝືອນຢ່າງປູ່ຍ່າຕາຍາຍຂອງເພິ່ນດ້ວຍ (ຂໍ້ 3). ການນຳຕີໂມທຣວມາເປັນຜູ້ຮັບໃຊ້ທີ່ເມືອງເອເຟໂຊນັ້ນໂປໂລກໍຮູ້ດີວ່າເປັນນ້ຳພຣະທັຍພຣະເຈົ້າ ດ້ວຍເຫດນີ້ເພິ່ນຈຶ່ງຂອບພຣະຄຸນພຣະເຈົ້າສຳລັບວຽກງານການຮັບໃຊ້ຂອງຕີໂມທຣວ ລູກຮັກຂອງເພິ່ນທາງຄວາມເຊື່ອ, ໂປໂລຍັງຮູ້ດີວ່າເພິ່ນເອງຈະຖືກຈັບໃນໂອກາດໃກ້ນີ້ໃນຖານກ່າວຫາເປັນຄົນທໍຣະຍົດຈັກກະພັດໂຣມັນ ແລະໄປຮັບໃຊ້ພຣະເຢຊູຄຣິດ ເພິ່ນຂອບພຣະຄຸນເພາະຕີໂມທຣວຜູ້ທີ່ເພິ່ນຮ້ອງວ່າລູກຈະສືບຕໍ່ງານທີ່ເພິ່ນເຮັດຕໍ່ໆໄປຫລັງຈາກເພິ່ນຖືກຈັບຂັງຄຸກ.

*"ຂະນະເມື່ອເຮົາລະນຶກເຖິງນ້ຳຕາຂອງເຈົ້າ ເຮົາກໍປາຖນາທີ່ຈະໄດ້ພົບເຈົ້າ "* (ຂໍ້ 4) ໂປໂລກ່າວເຖິງເວລາທີ່ເພິ່ນຂໍໃຫ້ຕີໂມທຣວເປັນຜູ້ປະກາດທີ່ເມືອງເອເຟໂຊນັ້ນຕີໂມທຣວໄດ້ຮ້ອງໄຫ້ຍ້ອນບໍ່ພາກຈາກໂປໂລ ໃນເວລານັ້ນໂປໂລບອກວ່າເພິ່ນຈະຕ້ອງກັບຄືນມາຢາມຕີໂມທຣວອີກ. ການຫລັ່ງນ້ຳຕາຂອງຕີໂມທຣວເຮັດໃຫ້ໂປໂລຄິດຮອດຫລາຍ ແຕ່ກໍຈຳໃຈຕ້ອງພາກຈາກກັນຍ້ອນວຽກງານການປະກາດຂ່າວປະເສີດເຣື່ອງພຣະເຢຊູຄຣິດ. *"ເຮົາໄດ້ລະນຶກເຖິງຄວາມເຊື່ອອັນຈິງໃຈຂອງເຈົ້າ ອັນເປັນຄວາມເຊື່ອຊຶ່ງເມື່ອກ່ອນໄດ້ມີ ຢູ່ໃນນາງໂອລີແມ່ເຖົ້າຂອງເຈົ້າ ແລະນາງຢູນີເກແມ່ຂອງເຈົ້າບັດນີ້ເຮົາເຊື່ອແນ່ວ່າມີຢູ່ໃນເຈົ້າເໝືອນກັນ "* (ຂໍ້ 5). ນາງໂອລີຜູ້ເປັນແມ່ເຖົ້າ ແລະນາງຢູນີເກຜູ້ເປັນແມ່ນຂອງຕີໂມທຣວໄດ້ຮັບເຊື່ອຍ້ອນການປະກາດຂອງໂປໂລທີ່ເມືອງລີຊະທາ (ກິຈການ 16:1) ແລະພາຍລຸນມາຕີໂມທຣວກໍຮັບເຊື່ອພຣະເຢຊູຕາມຫລັງແມ່ເຖົ້າແລະແມ່ຂອງຕົນຈົນກາຍເປັນຜູ້ຮັບໃຊ້ພຣະເຈົ້າ. ເຣື່ອງນີ້ເປັນບົດຮຽນແກ່ເຮົາຜູ້ເປັນພໍ່ເຖົ້າ, ແມ່ເຖົ້າ, ຫລືພໍ່ແມ່ທັງຫລາຍ ຫາກເຮົາທັງຫລາຍປະຕິບັດຄວາມເຊື່ອເໝືອນຢ່າງ ນາງໂອລີຜູ້ເປັນແມ່ເຖົ້າ ແລະນາງຢູນີເກ ຜູ້ເປັນແມ່ຂອງຕີໂມທຣວ ເຮົາກໍຈະສາມາດເປັນແຮງຈູງໃຈໃຫ້ລູກຫລານຂອງເຮົາເຊື່ອພຣະເຈົ້າດ້ວຍ.

แนะนำตีโมทรอ 1:6-14

**1. ย่าย้าน**

"เหดสันนั้นเราจึงแนะนำเจ้าให้เป็นคุนทันของพระเจ้า ที่มียู่ในเจ้าด้วยการวางมือของเราให้ลุกรุ่งเรือง ขึ้นใหม่" (ข้อ 6) แปว่า ในขะนะที่โปโลวางมือสะถาปะนาตีโมทรอให้เป็นผู้รับใช้พระเจ้านั้นตีโมทรอได้รับ ของพระธาจุทานแล้ว โปโลจึ่งสั่งว่าให้ใช้ของประทานนั้นให้เป็นเหมือนถ่านไฟที่ลุกไหม้จนนำแสงสะหว่าง อันรุ่งเรืองโดยบ่ย้านพวกครูสอนปอมที่ยู่แถวนั้นแต่ใดๆ *"เพาะว่าพระเจ้าบ่ได้ซงประทานอันย้านกัวให้ แก่เรา* (หมายเถิงโปโลและตีโมทรอ) *แต่ซงประทานใจอันประกอบด้วยริดอำนาด, ความรัก, และการบัง คับตนให้แก่เรา* " (ข้อ 7).

**2. ย่าอาย**

*"เหดสันนั้นย่าละอายที่จะเป็นพะยานฝ่ายองพระผู้เป็นเจ้าของเราทังหลาย, แต่จึ่งมีส่วนในการยากลำ บาก เพื่อเห็นแก่ข่าวปะเสิด โดยอาสัยริดอำนาดแห่งพระเจ้า* " (ข้อ 7-8). บางที่โปโลอาจรู้นิดสัยของตี โมทรอเป็นคนมักอายในการเว้าหลืเป็นคนบ่ก้าเว้าและพ้อมกันนั้นจึ่งตรมพ้อมที่จะรับความลำบากเพื่อ นำข่าวปะเสิดไปทุกแห่ง แต่บ่แม่นอาสัยกำลังเหื่อแรงของตนเอง แต่อาสัยอำนาดแห่งพระเจ้า, (อ่าน ต่อจน เถิง ข้อ 11).

**3. ให้อดทน**

*"เพาะเหดสันนี้เราจึ่งอดทนเอาสิ่งทังหลายเหล่านี้ เถิงปานนั้นเราก็บ่มีความละอาย เพาะว่าเรารู้จัก พระองผู้ที่เราได้เชื่อและวางใจนั้น และเราเชื่อหมั้นว่าพระองซงสามาดรักสา ซึ่งเรามอบไว้กับพระอง จนเถิงวันนั้น* " (ข้อ 12) โปโลกล่าวเถิงตัวเพิ่นเองเป็นตัวย่างในการอดทนโดยบ่มีความละอาย เพาะเพิ่น เองรู้ดีกว่าพระเยซูผู้ที่เพิ่นไว้วางใจนั้นซงเป็นพระเจ้า และเพิ่นเองก็มอบจิดวินยานของเพิ่นไว้กับพระ เยซูคริดจนเถิงวันที่พระเยซูซงพิพากสาตัดสินโลก.

**4. เຮັດຕາມຫລັກການ**

*"จึ่งเฮັດตามแบบย่างแห่งหลักคำสอนอันมีหลัก ที่เจ้าได้ยินจากเราด้วยความเชื่อและด้วย ความรักใน พระเยซูคริด* " (ข้อ 13). โปโลมีหลักแห่งความเชื่อและหลักแห่งการสิดสอนพระทัมพระเจ้า ดั่งนั้นเพิ่น เพิ่นจึ่งแนะนำบอกตีโมทรอให้สอนตามสิ่งที่ได้ธรมรู้จากโปโลโดยบ่ให้สอนนอกเหนือจากนี้. ท่านอาด จะได้ยินเรื่องการค้นพົບเอกสานหลืเรื่องราวของพระเยซูคริดออกมาอีกหลายย่าง คำถามมียู่ว่าเรา จะรู้ได้แนวใดว่าสิ่งที่ค้นพົບใหม่ๆนั้นเป็นเรื่องจิงหลืบ่จิง?. วันนึ่งข้าพะเจ้าเດີນทางไปต่างเมืองเพื่อรับ ใช้พระเจ้า มีบันดาอาจานอีกสามคนที่ไปนำกัน, ก็เລີຍสนทะนากันในเรื่องนี้. อาจานผู้นึ่งออกคำเห็น ว่า; มีนักซ่วซานเงินโดลาผู้นึ่งใช้เวลาค้นคว้าเงินโดลาจนรู้ย่างละອຽດ, ท่านผู้นี้สามาดบอกทันทีว่า เงินใบใดปอม เพาะว่าเพิ่นรู้จักเบິ່ງออกว่า ใบปอมนั้นบ่คືใบแท้. ดั่งนั้นหากเราย่ากจะรู้ว่าอันใดเป็น เรื่องแท้ของพระเยซู เราก็ควนธรมแต่เรื่องแท้ในพระคัมพี หากสิ่งใดพระคัมพีบ่กล่าวไว้สิ่งนั้นก็บ่แม่น ของแท้. โปโลสั่งตีโมทรอให้เฮັດตามหลักที่โปโลเคียสอนมานั้นหากสอนตามนั้นก็แม่นสอนของแท้.

**5. รักสาของประทาน**

*"ຈົ່ງຮັກສາສິ່ງອັນດີທີ່ໄດ້ຊົງມອບໄວ້ ໂດຍພຣະວິນຍານບໍຣິສຸດຊຶ່ງຊົງສະຖິດພາຍໃນເຮົາທັງຫລາຍ "* (ຂໍ້ 14). ສິ່ງອັນດີທີ່ຊົງມອບໄວ້ແມ່ນຂ່າວປະເສີດທີ່ມອບເປັນຂອງປະທານໃຫ້ຕີໂມທຽວໃຫ້ເປັນຜູ້ປະກາດຂ່າວປະເສີດເຣື່ອງພຣະເຢຊູຄຣິດໃຫ້ຮັກສາໄວ້ໂດຍດໍາເນີນງານຕໍ່ໄປ. ເມື່ອກ່ອນນີ້ຕີໂມທຽວເປັນພຽງຜູ້ຊ່ອຍໂປໂລເທົ່ານັ້ນ ຕໍ່ນີ້ໄປຕີໂມທຽວຈະຕ້ອງເປັນອາຈານ ແລະຮັບໃຊ້ໃນຖ້ານກາງບັນຫາຕ່າງໆ ດັ່ງນັ້ນສິ່ງສໍາຄັນກໍຄືຮັກສາຂ່າວປະເສີດທີ່ຊົງມອບໃຫ້ປະກາດນັ້ນໂດຍຍອມພຣະວິນຍານບໍຣິສຸດຊຶ່ງຊົງສະຖິດພາຍໃນເຮົາທັງຫລາຍ ເປັນຜູ້ນໍາພາ.

<u>**ຄໍາຖາມ**</u>

1. ເປັນຫຍັງໂປໂລຈຶ່ງເວົ້າໃນຈົດໝາຍວ່າ ອັຄສາວົກຂອງພຣະເຢຊູຄຣິດ?

2. ທຸກຄັ້ງທີ່ເພິ່ນຄິດຮອດຕີໂມທຽວເພິ່ນເຮັດຫຍັງ? ຄຣິສຕຽນຄິດເຖິງກັນຄວນເຮັດອັນໃດ?

3. ເປັນຫຍັງໂປໂລຈຶ່ງຮ້ອງຕີໂມທຽວວ່າລູກ?

4. ຕີໂມທຽວສືບທອດຄວາມເຊື່ອມາຈາກໃຜ? ການສືບທອດຄວາມເຊື່ອນີ້ສອນຫຍັງເຮົາແດ່?

5. ໃຈສໍານຶກຜິດແລະຊອບທີ່ໂປໂລກ່າວແປວ່າຫຍັງ?

6. ທ່ານເຂົ້າໃຈແນວໃດທີ່ໂປໂລແນະນໍາ 1. ຢ່າຢ້ານ. 2. ຢ່າອາຍ. 3. ຈົ່ງອົດທົນ. 4 ເຮັດຕາມຫລັກ ແລະ 5. ຮັກສາສິ່ງອັນດີ.

*ສຈ. ດຣ. ທຸນພັນ ວົງສຸຣິດທ໌*

# ບົດຮຽນທີ 8
# ດຳເນີນຊີວິດດ້ວຍຈຸດປະສົງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ຕີໂມທຽວ 2: 1-17, 20-23

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** 2 ຕີໂມທຽວ 2

**ຈຸດສຳຄັນຂອງບົດຮຽນນີ້:** ຊີວິດຂອງພວກເຮົາຈະມີຄວາມໝາຍຫລາຍຂຶ້ນສຳລັບເຮົາເອງແລະຜູ້ອື່ນຖ້າພວກເຮົາຕັ້ງໃຈໃສ່ເຣື່ອງການຮັບໃຊ້ພຣະຄຣິດຢ່າງດຽວ.

**ຄຳຖາມເພື່ອການສຳຣວດ:** ຊີວິດຂອງທ່ານສຸມໃສ່ເຣື່ອງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີທາງທີ່ຈະໃຫ້ພຣະຄຣິດເປັນຈຸດຮວມຂອງຊີວິດຂ້ອຍ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ໃນພຣະທັມຕີໂມທຽວສະບັບທີສອງ ບົດ 2, ໂປໂລໄດ້ໃຫ້ຄຳແນະນຳສເພາະ ພ້ອມດ້ວຍຕົວຢ່າງສຳລັບຕີໂມທຽວ ຜູ້ທີ່ທ່ານໄດ້ເອີ້ນວ່າ "ລູກ" ທາງຝ່າຍຈິດວິນຍານ ໃຫ້ສຸມຊີວິດແລະການຮັບໃຊ້ຂອງເຂົາໃສ່ພຣະເຢຊູຄຣິດຢ່າງເຕັມສ່ວນ.

ກ່ອນຈະລົງສນາມແຂ່ງຂັນ, ຫົວໜ້າທີມຈະບອກລູກທີມເຖິງແຜນການຫລິ້ນ ແລະເຂົາຈະໜູນໃຈນັກກິລາແຕ່ລະຄົນ. ໃນຂະນະທີ່ໂປໂລກຳລັງຕຽມຕົວຈະມອບການຮັບໃຊ້ໃຫ້ກັບຕີໂມທຽວ, ທ່ານມີຫລາຍໆຢ່າງທີ່ຈະບອກໃຫ້ກັບລູກຊາຍ. ຫລາຍກວ່ານັ້ນທ່ານຍັງຕ້ອງການເຕືອນຕີໂມທຽວເຣື່ອງຄວາມເຊື່ອ. ໃນບົດຮຽນມື້ນີ້ ພວກເຮົາຈະໄດ້ພິຈາຣະນາເບິ່ງຄຳແນະນຳຂອງໂປໂລໃນພຣະທັມຕີໂມທຽວສະບັບທີສອງ ບົດສອງ. ນອກນັ້ນໃນບົດຮຽນນີ້ ພວກເຮົາຈະໄດ້ເຫັນຄວາມໜູນໃຈຫລາຍໆຢ່າງ ແລະຕົວຢ່າງອີກຫລາຍໆອັນ.

### ຈົ່ງເຂັ້ມແຂງຢູ່ໃນພຣະເຢຊູຄຣິດ (2:1-7)

ໃນພາກສຸດທ້າຍຂອງບົດທີນຶ່ງ, ໂປໂລໄດ້ເລົ່າເຣື່ອງບຸກຄົນບາງຄົນໃຫ້ຕີໂມທຽວໄດ້ຮູ້ເຊັ່ນໂອເນຊີໂຟໂຣຜູ້ທີ່ໄດ້ຊ່ວຍເຫລືອຢ່າງສັດຊື່ໃນກຸງໂຣມແລະຟຸເຄໂລແລະເຮຣະໂມເຄນຜູ້ທີ່ໄດ້ຫລົບໜ້າໜີ. ນອກນັ້ນໂປໂລຍັງໄດ້ອ້ອນວອນຂໍພຣະຄຸນຂອງພຣະເຈົ້າເພື່ອໂອເນຊີໂຟໂນໃນເວລາພຣະຄຣິດສະເດັດມາ (2 ຕມທ 1:15-18).

ໂອເນຊີໂຟໂຣໄດ້ສະແດງຕົວເປັນຄົນສັດຊື່ໃນການຮັບໃຊ້. ໂປໂລໄດ້ຂໍຮ້ອງຕີໂມທຽວໃຫ້ເຮັດຢ່າງດຽວກັນ, "ຈົ່ງເຂັ້ມ

ແຂງຂື້ນດ້ວຍພຣະຄຸນຊຶ່ງມີຢູ່ໃນພຣະຄຣິດ ຄືພຣະເຢຊູ"(2 ຕມທ 2: 1). ໂປໂລແນະນໍາຕີໂມທຽວຕໍ່ໄປວ່າ "ຈົ່ງມອບຄໍາສອນທີ່ເຈົ້າໄດ້ຍິນຈາກເຮົາຕໍ່ໜ້າພຍານຫລາຍຄົນ ໄວ້ກັບຄົນຊື່ສັດທີ່ສາມາດສອນຄົນອື່ນຕໍ່ໄປ" (2 ຕມທ 2:2).

ຫລັງຈາກທີ່ໄດ້ສັ່ງຕີໂມທຽວໃຫ້ເຂັ້ມແຂງແລະໃຫ້ສອນຄົນອື່ນແລ້ວ, ໂປໂລໄດ້ບອກຕີໂມທຽວເປັນຄັ້ງທີສອງວ່າໃຫ້ມີສ່ວນຮ່ວມທົນທຸກຊຶ່ງເກີດຂື້ນຈາກການປະກາດຂ່າວປະເສີດ (2:3) ເພື່ອເຂົາຈະໄດ້ເປັນ "ທະຫານທີ່ດີຂອງພຣະເຢຊູຄຣິດ," ແລະເພື່ອຜູ້ທີ່ເກນເຂົາຈະໄດ້ພໍໃຈ (2:4). ທະຫານຈະຕ້ອງເຮັດໃຫ້ຖືກໃຈຜູ້ບັງຄັບບັນຊາ ແລະຄຣິສຕຽນຈະຕ້ອງເຮັດໃຫ້ຖືກໃຈພຣະຜູ້ເປັນເຈົ້າຜູ້ຊຶ່ງເກນພວກເຂົາເຂົ້າໃນ "ກອງທັບສວັນ."

ໂປໂລໄດ້ໃຊ້ຄໍາປຽບທຽບເຣື່ອງນັກກິລາເພື່ອສອນຕີໂມທຽວ. ທ່ານໄດ້ບອກວ່າ "ນັກກິລາຈະບໍ່ໄດ້ສວມພວງມາລັຍຖ້າເຂົາບໍ່ແຂ່ງຂັນຕາມກົດລະບຽບ" (2:5). ໃນສມັຍຂອງໂປໂລ, ນັກກິລາທີ່ຊະນະຈະໄດ້ຮັບພວງມາລັຍ (1 ກຣທ 9: 25). ໃນທີ່ນີ້ໂປໂລໄດ້ເນັ້ນເຖິງຄວາມສໍາຄັນຂອງການດໍາເນີນຊີວິດຕາມແນວທາງຂອງພຣະເຈົ້າ. ໃນຂໍ້ 2:6, ໂປໂລໄດ້ໃຫ້ຕົວຢ່າງເຣື່ອງຊາວນາຜູ້ເຮັດການໜັກໜ່ວງ ຊຶ່ງຄວນຈະເປັນຜູ້ຕົ້ນທີ່ໄດ້ຮັບຜົນ. ທ່ານເຄີຍສອນເຣື່ອງຄ້າຍກັນນີ້ໃນບ່ອນອື່ນເຊັ່ນວ່າຄົນທີ່ປະກາດພຣະທັມຈະຕ້ອງກິນຜົນຈາກຂ່າວປະເສີດ (1 ກຣທ 9:7). ໂປໂລບໍ່ໄດ້ໃຫ້ລາຍລະອຽດຈາກຕົວຢ່າງທີ່ສອນໄວ້ແຕ່ໄດ້ບອກຕີໂມທຽວໃຫ້ "ຄຶດຕຶກຕອງຂໍ້ຄວາມທີ່ເຮົາໄດ້ເວົ້ານັ້ນໃຫ້ຖີ່ຖ້ວນ" (2:7) ແລ້ວພຣະເຈົ້າຈະປະທານຄວາມເຂົ້າໃຈ.

## <u>ຈົ່ງລະນຶກເຖິງພຣະເຢຊູຄຣິດ (2:8-13)</u>

ໂປໂລໄດ້ແນະນໍາຕີໂມທຽວໃຫ້ລະນຶກເຖິງພຣະເຢຊູຄຣິດ ແລະໃຫ້ພຣະອົງເປັນຈຸດຮວມຂອງຄວາມເຊື່ອແລະເປັນພື້ນຖານສໍາຄັນໃນຂ່າວປະເສີດ (2:8). ທ່ານໄດ້ທົບທວນເນື້ອໃນໃຈຄວາມຂອງຂ່າວປະເສີດທີ່ໄດ້ສອນມາ ແລະເວົ້າເຖິງການຊົງຄືນພຣະຊົນຂອງພຣະຄຣິດ ແລະການຊົງສືບເຊື້ອສາຍມາຈາກກະສັດດາວິດ. ໂປໂລບໍ່ພຽງແຕ່ໄດ້ປະກາດຂ່າວປະເສີດໃຫ້ກັບຄົນອື່ນໆ ແຕ່ທ່ານໄດ້ທົນທຸກແລະຖືກຜູກມັດເພາະການປະກາດນັ້ນດ້ວຍ. ຂອບຄຸນພຣະເຈົ້າເພາະ "ພຣະທັມຂອງພຣະເຈົ້ານັ້ນບໍ່ມີຜູ້ໃດຜູກມັດໄວ້ໄດ້" (2:9).

ເພາະຂ່າວປະເສີດເຣື່ອງຄວາມພົ້ນໄດ້ເຕີບໃຫຍ່ໄປເລື້ອຍໆ, ໂປໂລຈຶ່ງສາມາດທົນທຸກເພາະເຫັນແກ່ພວກທີ່ພຣະເຈົ້າຊົງເລືອກໄວ້ (2:10). ຄວາມລໍາບາກຂອງໂປໂລເພາະຂ່າວປະເສີດໄດ້ເຮັດໃຫ້ຫລາຍໆຄົນໄດ້ຮັບຄວາມພົ້ນ ແລະຊີວິດນິຣັນໃນອົງພຣະເຢຊູຄຣິດ. ຂໍ້ 11-13 ມີຂໍ້ຄວາມຊຶ່ງຄ້າຍກັບບົດເພງສັຣເສີນຊຶ່ງກ່າວເຖິງພຣະຄຣິດ ແລະໄດ້ເລີ້ມດ້ວຍຄໍາທີ່ວ່າ "ນີ້ເປັນຄໍາສັດຈິງ." ຂໍ້ຄວາມນີ້ແບ່ງເປັນສີ່ພາກ ແລະແຕ່ລະພາກເລີ່ມດ້ວຍຂໍ້ແມ້ "ຖ້າພວກເຮົາ" ແລະຜົນທີ່ຕິດຕາມມາເຊັ່ນ, "ຖ້າພວກເຮົາໄດ້ຕາຍກັບພຣະອົງ ເຮົາກໍຈະມີຊີວິດດ້ວຍກັນກັບພຣະອົງເໝືອນກັນ" ດັ່ງນີ້ເປັນຕົ້ນ.

## <u>ຈົ່ງຣະວັງຄວາມເວົ້າຂອງທ່ານ (2:14-17)</u>

ໂປໂລໄດ້ສັ່ງຕີໂມທຽວໃຫ້ຕັກເຕືອນຄຣິສຕຽນທັງຫລາຍເຣື່ອງຄວາມປາກຄວາມເວົ້າ (2:14). ທ່ານມີຄວາມຫ່ວງໃຍເຣື່ອງຫລັກຄວາມເຊື່ອເຣື່ອງການເປັນຄືນມາຈາກຄວາມຕາຍຂອງຄຣິສຕຽນ ຊຶ່ງເປັນຕົ້ນເຫດໃຫ້ມີການໂຕ້ຖຽງກັນຢູ່ໃນຂະນະນັ້ນ. ໂປໂລເຕືອນຕີໂມທຽວບໍ່ໃຫ້ຫລົງທາງເພາະການຜິດຖຽງກັນທີ່ເປັນເຫດໃຫ້ຫລາຍຄົນໄດ້ປະຖິ້ມຄວາມເຊື່ອເຊັ່ນຮີເມນາໂຢ ແລະຟີເລໂຕ (2:17).

ອັຄສາວົກໄດ້ສອນຕີໂມທຽວວ່າຜູ້ຮັບໃຊ້ຈະຕ້ອງອົດສາພຍາຍາມສະແດງຕົນເໝືອນເປັນຄົນທີ່ພິສູດແລ້ວ ຕໍ່ພຣະພັກຂອງພຣະເຈົ້າ ແລະເປັນຄົນງານ "ທີ່ບໍ່ຕ້ອງອາຍ ແລະໃຊ້ພຣະທັມແຫ່ງຄວາມຈິງຢ່າງຖືກຕ້ອງ" (2:15). ນອກນັ້ນ ໂປໂລຍັງບອກຕີໂມທຽວໃຫ້ຫລີກເວັ້ນ "ຖ້ອຍຄໍາອັນບໍ່ເປັນປໂຍດ" ຊຶ່ງຈະເປັນ " ເໝືອນດັ່ງບາດແຜອັນເປື່ອຍເນົ່າ ທີ່

ກິນລາມໄປ" (2:17).

## ຈົ່ງເປັນພາຊນະທີ່ມີກຽດ ແລະບໍຣິສຸດ (2:20-23)

ມາເຖິງຕອນນີ້ອັຄສາວົກໂປໂລໄດ້ໃຊ້ເຣື່ອງພາຊນະໃນເຮືອນ ເພື່ອເປັນຕົວຢ່າງໃນການແນະນຳຄຳສອນໃນພຣະທັມ. ທ່ານໄດ້ເວົ້າເຖິງພາຊນະທີ່ເຮັດດ້ວຍຄຳ, ເງິນ, ໄມ້, ແລະດິນ ຊຶ່ງອາດຈະມີຢູ່ໃນເຮືອນຫລັງໃຫຍ່ (2:20). ພາຊນະແຕ່ລະຊນິດມີວຽກໃຊ້ຕ່າງໆກັນ ຊຶ່ງກໍແມ່ນເຈົ້າຂອງບ້ານເປັນຜູ້ຈັດຕຽມໄວ້ (2:21). ເໝືອນດັ່ງພາຊນະ, ທຸກຄົນຈະຕ້ອງຊຳຣະຕົວເອງໃຫ້ພົ້ນຈາກສິ່ງຊົ່ວມົວໝອງ ກ່ອນທີ່ພຣະເຈົ້າອົງບໍຣິສຸດຈະຊົງໃຊ້ພວກເຂົາໃນພັນທະກິດຂອງພຣະອົງ ຕາມທີ່ພຣະອົງໄດ້ຊົງຈັດຕຽມໄວ້ລ່ວງໜ້າແລ້ວ (ເບິ່ງ 3:17).

ໂປໂລສັ່ງຕີໂມທຽວໃຫ້ "ຫລີກໜີຈາກຣາຄະຕັນຫາ" ຊຶ່ງເປັນຄວາມຜິດທາງເພດ (2:22). ພວກເຮົາໄດ້ຮຽນຮູ້ເຣື່ອງຂອງ ໂຢເຊບ (ປຖກ 39: 1-23) ແລະ ເຣື່ອງຂອງແຊມຊັນ (ຜປດ 16:1-22) ຊຶ່ງເປັນຕົວຢ່າງທາງຝ່າຍດີ ແລະຝ່າຍຮ້າຍ. ແຕ່ໂປໂລໄດ້ສອນໃຫ້ຕີໂມທຽວ "ຈົ່ງຕິດຕາມຄວາມຊອບທັມ, ຄວາມເຊື່ອ, ຄວາມຮັກ, ແລະສັນຕິສຸກ (2:22). ຫລັກຄວາມເຊື່ອທີ່ຖືກຕ້ອງຈະຕ້ອງຄຽງຄູ່ກັບການປະພຶດທີ່ບໍຣິສຸດ. ພຣະເຢຊູຄຣິດປະກາດວ່າຄວາມສຸກເປັນຂອງຄົນທີ່ມີຈິດໃຈທີ່ບໍຣິສຸດ (ມທ 5:8).

## ຈຸດທີ່ຄວນຈົດຈຳ

ໃນບົດຮຽນນີ້, ແມ່ນວ່າຈະເປັນການສອນສຳລັບຕີໂມທຽວ, ໄດ້ແນໃສ່ເຣື່ອງຂອງພຣະເຢຊູ. ຕີໂມທຽວຈະຕ້ອງ "ເຂັ້ມແຂງຂຶ້ນດ້ວຍພຣະຄຸນຊຶ່ງມີຢູ່ໃນພຣະຄຣິດ," ຈະຕ້ອງທົນທຸກ "ເໝືອນເປັນທະຫານທີ່ດີຂອງພຣະເຢຊູຄຣິດ," ແລະຈະຕ້ອງ "ລະນຶກເຖິງພຣະເຢຊູຄຣິດ." ໂປໂລຍັງເວົ້າເຖິງ "ຄວາມພົ້ນໃນພຣະເຢຊູຄຣິດ" ຜູ້ຊົງເປັນຈຸດສຸມຂອງຄຳສັດຈິງທີ່ບັນທຶກໄວ້ໃນພຣະທັມຂໍ້ 11-13. ພຣະຄຣິດຊົງເປັນຈຸດສູນກາງຂອງພຣະທັມຄັມພີ ແລະພຣະອົງຈະຕ້ອງເປັນຈຸດຮວມໃນຊີວິດຂອງຜູ້ທີ່ເຊື່ອທຸກໆຄົນ.

**ຄຳຖາມ:**

1. ໂປໂລສັ່ງຕີໂມທຽວໃຫ້ "ເຂັ້ມແຂງ" ໃນພຣະຄຣິດ (2:1). ແມ່ນຫຍັງຈະຊ່ວຍພວກເຮົາໃຫ້ເຂັ້ມແຂງໃນພຣະອົງ ແລະໃນຣິດອຳນາດຂອງພຣະອົງ (ເອເຟໂຊ 6:10)? ແມ່ນຫຍັງຄືອຸປສັກ?

2. ໃນ 2 ຕີໂມທຽວ 2:8 ໂປໂລໄດ້ເວົ້າເຖິງການຊົງຄືນພຣະຊົນແລະເຣື່ອງເຊື້ອສາຍຂອງພຣະເຢຊູຊຶ່ງມາຈາກກະສັດດາວິດວ່າເປັນພາກສ່ວນຂອງຂ່າວປະເສີດທີ່ທ່ານໄດ້ປະກາດ. ທ່ານເຫັນວ່າແມ່ນຫຍັງແດ່ທີ່ເປັນພື້ນຖານຂອງຂ່າວປະເສີດ?

3. 2 ຕີໂມທຽວ 2:12 ຂຽນໄວ້ວ່າ "ຖ້າພວກເຮົາປະຕິເສດພຣະອົງ ພຣະອົງກໍຈະຊົງປະຕິເສດເຮົາເໝືອນກັນ." ທ່ານຕີຄວາມໝາຍຂໍ້ຄວາມຕອນນີ້ວ່າແນວໃດ ເມື່ອພວກເຮົາເຊື່ອວ່າ "ຖ້າເຮົາໄດ້ລອດແລ້ວ, ເຮົາກໍຈະລອດຕລອດໄປ"?

4. ໂປໂລສັ່ງເສີມຕີໂມທຽວບໍ່ໃຫ້ "ຜິດຖຽງກັນດ້ວຍຂໍ້ຄວາມຕ່າງໆຊຶ່ງຫາປໂຍດບໍ່ໄດ້" (2 ຕມທ 2:14). ຄຳແນະນຳນີ້ມີຄວາມໝາຍແນວໃດແດ່ ສຳລັບຄຣິສຕະຈັກທ້ອງຖິ່ນ ແລະສຳລັບຄະນະບັບຕິສ?

*ສຈ. ດຣ. ສິດນີ ດານ*

# ບົດຮຽນທີ 9
# ຕໍ່ສູ້ອຸປສັກຂອງຄວາມເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ຕີໂມທຽວ 3:1-5, 10-17
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** 2 ຕີໂມທຽວ 3
**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອພົບອຸປສັກຂອງຄວາມເຊື່ອ, ຈົ່ງມີຄວາມກ້າຫານໂດຍອາສັຍຕົວຢ່າງຂອງຄຣິສຕຽນ ຜູ້ຊື່ສັດ ແລະຈົ່ງດຳເນີນຊີວິດຕໍ່ໄປຕາມບົດຮຽນທີ່ໄດ້ຮຽນຮູ້ຈາກພຣະຄັມພີ.
**ຄຳຖາມເພື່ອການສຳຣວດ:** ພວກເຮົາມີຫຍັງແດ່ເພື່ອຊ່ວຍເຫລືອ ເວລາພວກເຮົາພົບອຸປສັກຂອງຄວາມເຊື່ອ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີທາງຕໍ່ສູ້ກັບອຸປສັກຂອງຄວາມເຊື່ອ.

## ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ຈັດຕຽມຄົນໃຫ້ເປັນຜູ້ນຳແບບຮັບໃຊ້.

## ຄຳນຳ

ໃນຂະນະທີ່ໂປໂລກຳລັງສັ່ງສອນຕີໂມທຽວຕໍ່ໄປກ່ຽວກັບເຣື່ອງຊີວິດຄຣິສຕຽນ ແລະການຮັບໃຊ້, ທ່ານໄດ້ສອນເຖິງຄວາມຊົ່ວທີ່ຈະຕ້ອງຫລີກເວັ້ນ ແລະຄຸນຄວາມດີທີ່ຈະຕ້ອງປູກສ້າງ.

ຄຣິສຕຽນເຄີຍໄດ້ພົບອຸປສັກຫລາຍໆຄັ້ງໃນອະດີດ. ໂປໂລຮູ້ວ່າຕີໂມທຽວຈະຕ້ອງພົບອຸປສັກເຫລົ່ານັ້ນ, ສະນັ້ນທ່ານຈຶ່ງໃຫ້ຄຳແນະນຳຫລາຍຢ່າງເພື່ອຈະໄດ້ຊ່ວຍເຂົາ. ໂປໂລໄດ້ເຕືອນຕີໂມທຽວເຖິງ "ຄວາມລຳບາກໃນຄາວສຸດທ້າຍ" (3: 1) ແລະທ່ານກໍໄດ້ເຕືອນລາວເຣື່ອງບຸກຄົນທີ່ຄວນຫລີກເວັ້ນ. ຫລັງຈາກນັ້ນກໍໄດ້ສອນເຖິງຄຳສອນຂອງຄຣິສຕຽນທີ່ທ່ານໄດ້ຮັບມາ ແລະເວົ້າເຖິງຄວາມເຊື່ອທີ່ໄດ້ສະແດງອອກໃນຊີວິດຕໍ່ໜ້າຕີໂມທຽວ.

**ທາງຊົ່ວຊ້າໃນຄາວສຸດທ້າຍ (3:1-5)**
ຕັ້ງແຕ່ຂໍ້ 1 ເຖິງ 5, ໂປໂລໄດ້ກ່າວເຖິງຄວາມຊົ່ວຊຶ່ງຈະເປັນນິສັຍຂອງຄົນທັງຫລາຍໃນ "ຄາວສຸດທ້າຍ." ເວລາເວົ້າເຖິງຄາວສຸດທ້າຍ, ຫລາຍຄົນຄິດວ່າແມ່ນເວົ້າເຖິງຕົວພວກເຮົາເອງ ຫລືປະສົບການປັດຈຸບັນໃນໂລກນີ້. ທີ່ຈິງແລ້ວແຕ່ລະຍຸກສາມາດເປັນຍຸກສຸດທ້າຍໄດ້, ແລະເວລາສຸດທ້າຍອາດຈະມາເຖິງໄວກວ່າທີ່ພວກເຮົາໄດ້ຄິດໄວ້ກໍໄດ້.

ຄຣິສຕຽນໃນສມັຍແລກຄິດວ່າພວກຕົນດຳເນີນຊີວິດຢູ່ໃນຍຸກສຸດທ້າຍ. ຖ້າພວກເຮົາຈະຖາມວ່າ ເປັນຫຍັງພວກເຂົາເຈົ້າຈຶ່ງຄິດຢ່າງນັ້ນ? ຄຳຕອບຂອງພວກເຮົາຈະຕ້ອງຄິດເຖິງຄວາມໝັ້ນໃຈຂອງພວກເຂົາເຈົ້າກ່ຽວກັບເຣື່ອງຊີວິດ, ການຕາຍ, ແລະການຄືນພຣະຊົນຂອງພຣະເຢຊູ ຮ່ວມທັງການທີ່ພຣະເຈົ້າຊົງປະທານພຣະວິນຍານບໍຣິສຸດຊຶ່ງເປັນການສະຖາປະນານີ້ເລີ້ມຕົ້ນຂອງຄາວສຸດທ້າຍ (ເບິ່ງຕົວຢ່າງໃນ ກິຈການ 2:17; ໂຣມ 13:11; 1 ໂກຣິນໂທ 7:29; 10:11). ໃນກໍຣະນີນີ້ ພວກເຂົາເຈົ້າຖືວ່າວຽກງານຂອງພຣະເຈົ້າສິ່ງຕໍ່ໄປ, ທີ່ໄດ້ຖືກເປີດເຜີຍໂດຍພຣະເຢຊູຄຣິດ, ກໍ

ຈະຕ້ອງແມ່ນການກັບມາຄັ້ງທີສອງຂອງພຣະຄຣິດແນ່ນອນ. ໃນສມັຍຂອງພວກເຮົາກໍມີຄຣິສຕຽນຫລາຍໆຄົນທີ່ໄດ້ ສະແດງຄວາມໝັ້ນໃຈວ່າການກັບມາຂອງພຣະຄຣິດໄດ້ໃກ້ເຂົ້າມາແລ້ວ (ເບິ່ງ 2 ເທຊະໂລນີກ 2:1-2; ພຣະນິມິດ 1:1; 22:6, 10).

ຄຣິສຕຽນໃນສມັຍແລກເຊື່ອວ່າຄວາມຊົ່ວຊ້າໃນສັງຄົມຈະມີຂຶ້ນກ່ອນຄາວສຸດທ້າຍຈະມາເຖິງ. ພຣະທັມ 2 ຕມທ 2: 2-4, ໄດ້ເວົ້າເຖິງຄວາມຊົ່ວຊ້າປະມານສິບແປດຢ່າງ. ໂປໂລບອກວ່າໃນຄາວນັ້ນມະນຸດຈະຮັກຕົວເອງ ແທນທີ່ຈະຮັກ ພຣະເຈົ້າ, ພວກເຂົາຈະຮັກເງິນຄຳແລະຄວາມສນຸກສນານ. ມະນຸດຈະອວດຕົວ, ຈອງຫອງ, ຊອບດ່າວ່າ, ແລະຕໍ່ໆໄປ. ຖ້າເບິ່ງຄັກໆແລ້ວພວກເຮົາຈະເຫັນຮູບພາບທີ່ບໍ່ໜ້າເບິ່ງເລີຍ. ຈຸດປະສົງຂອງໂປໂລກໍຄືບໍ່ຢາກໃຫ້ການປະພຶດຂອງຄົນ ເຫລົ່ານັ້ນມາທຳລາຍຄວາມເຊື່ອຂອງຕີໂມທຽວ. ໃນ 2 ຕີໂມທຽວ 3:6, ໂປໂລໄດ້ເວົ້າເຖິງຄຣູສອນປອມທີ່ຈະສວຍໂອ ກາດກ້ຽວກ່ອມເອົາໃຈຜູ້ຍິງທີ່ເບົາປັນຍາ ເພື່ອໃຫ້ພວກເຂົາ "ຫລົງໄຫລໄປດ້ວຍຕັນຫາຕ່າງໆ" ພວກເຂົາສອນຄວາມ ເຊື່ອປອມ ແລະຕໍ່ຕ້ານຄວາມຈິງ (3:8). ໂປໂລກ່າວວ່າພວກຄຣູສອນປອມຈະຕ້ອງພ່າຍແພ້ ແລະພຶດຕິການຂອງເຂົາ ກໍຈະ "ປາກົດແຈ້ງແກ່ຄົນທັງປວງ" (3:9).

## <u>ຕົວຢ່າງທີ່ຄວນເຮັດຕາມ (3:10-13)</u>

ຫລັງຈາກທີ່ໄດ້ຕັກເຕືອນຕີໂມທຽວໃຫ້ຫລີກເວັ້ນບຸກຄົນທີ່ອ້າງຕົວເອງວ່າມີຄວາມເຊື່ອ ແຕ່ຂາດສິລທັມແລະຫລັກ ຄວາມເຊື່ອທີ່ແທ້, ໂປໂລໄດ້ເຕືອນລູກບຸນທັມຂອງເຂົາເຖິງແນວທາງທີ່ຕີໂມທຽວໄດ້ຮຽນຮູ້ເຣື່ອງພຣະຄຣິດ. ຕີໂມ ທຽວເຄີຍໄດ້ຍິນຄຳສອນຂອງໂປໂລໃນຄວາມເຊື່ອ. ນອກນັ້ນເຂົາຍັງໄດ້ເຫັນການດຳເນີນຊີວິດຂອງໂປໂລຕາມຂ່າວ ປະເສີດທີ່ທ່ານໄດ້ປະກາດໃຫ້ກັບຄົນອື່ນໆ. ຕີໂມທຽວໄດ້ຮຽນຮູ້ວ່າຄວາມມຸ້ງໝາຍຂອງໂປໂລຄືເຮັດໃຫ້ພຣະຄຣິດຊົງ ພໍພຣະທັຍ (3:10). ໂປໂລໄດ້ເວົ້າເຖິງການຖືກຂົ່ມເຫງທີ່ທ່ານໄດ້ສູ້ທົນທີ່ເມືອງອັນຕີໂອເຊັຽ, ເມືອງອີໂກນີອົນ, ແລະ ເມືອງລີຊະທາ. ແຕ່ໂປໂລໄດ້ບອກວ່າ "ອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດດຶງເຮົາອອກຈາກສິ່ງເຫລົ່ານັ້ນທັງໝົດ" (3:11).

ໂປໂລໄດ້ເຕືອນອີກວ່າ "ບັນດາຄົນທີ່ປາຖນາຈະດຳເນີນຊີວິດຄຣິສຕຽນເປັນຄົນທີ່ນັບຖືພຣະເຈົ້າຢ່າງຖືກຕ້ອງ ກໍຈະ ຕ້ອງຖືກກົດຂີ່ຂົ່ມເຫງ" (3:12). ປະສົບການສ່ວນຕົວແລະຫລັກຄວາມເຊື່ອເຮັດໃຫ້ໂປໂລລໍຄອຍ ແລະຍອມຮັບຄວາມ ທຸກລຳບາກວ່າເປັນສ່ວນນຶ່ງຂອງຄວາມເຊື່ອ. ໂປໂລໄດ້ສອນຕີໂມທຽວໃຫ້ຍອມຮັບສະພາບການເຫລົ່ານັ້ນ. ເພາະພຣະ ເຢຊູຊົງຍອມຮັບຄວາມທຸກທໍຣະມານ, ຜູ້ຕິດຕາມພຣະອົງກໍຄວນຍອມຮັບສິ່ງເຫລົ່ານັ້ນເຊັ່ນກັນ.

ນອກນັ້ນໂປໂລຍັງບອກຕໍ່ໄປວ່າ "ຄົນຊົ່ວຮ້າຍແລະຄົນປອມຕົວຈະກຳເລີບທະວີຂຶ້ນໄປ" (3:13). ສະນັ້ນໄພ່ພົນຂອງ ພຣະເຈົ້າຈົ່ງຢ່າເຜີຄິດວ່າຊີວິດໃນຄວາມເຊື່ອຈະມີແຕ່ຄວາມແຈ່ມໃສແລະສຸກສຳຣານ, ແຕ່ໃຫ້ຕຽມພ້ອມ ເພື່ອຈະບໍ່ໄດ້ ແປກໃຈຫລື ຫລົງທາງເມື່ອຄວາມທຸກລຳບາກໄດ້ເກີດຂຶ້ນກັບພວກຕົນ.

## <u>ພຣະທັມທີ່ຖືກຈາລຶກໄວ້ (3:14-17)</u>

ໂປໂລສັ່ງຕີໂມທຽວບໍ່ໃຫ້ມີຄວາມສົງສັຍ ຫລືໂສກເສົ້າ ແຕ່ໃຫ້ຕັ້ງຢູ່ໃນຄວາມເຊື່ອທີ່ໄດ້ຮັບແລະໄດ້ເຊື່ອມາແລ້ວ. ຕີໂມ ທຽວຈະຕ້ອງລະນຶກເຖິງບຸກຄົນທັງຫລາຍທີ່ໄດ້ສັ່ງສອນເຂົາເຣື່ອງຄວາມເຊື່ອຊຶ່ງມີໂປໂລ ຜູ້ເປັນບິດາໃນຄວາມເຊື່ອ, ນາງໂລອີ ແມ່ເຖົ້າຂອງເຂົາ, ແລະນາງຢູນີເກ ແມ່ຂອງເຂົາ (ເບິ່ງ 2 ຕມທ 1:5).

ຕີໂມທຽວໄດ້ຮຽນຮູ້ພຣະສັນຍາເດີມຈາກແມ່ ແລະຈາກແມ່ເຖົ້າຂອງເຂົາ ແລະເຂົາເອງກໍຮູ້ຄວາມຈິງໃນພຣະທັມຂອງ ພຣະເຈົ້າ. ທີ່ຈິງແລ້ວຕີໂມທຽວບໍ່ຈຳເປັນຕ້ອງຮ້ອງໃຫ້ຄົນອື່ນມາຊ່ວຍປ້ອງກັນພຣະທັມ. ພຣະທັມນີ້ໄດ້ໃຫ້ຄວາມເຊື່ອ ແກ່ລາວ (ໂຣມ 10:17), ແລະຄວາມເຊື່ອນີ້ກໍໄດ້ນຳໄປສູ່ຄວາມພົ້ນ.

ພຣະທັມຂອງພຣະເຈົ້າມີຣິດອຳນາດແລະສັກສິດ, ແລະສາມາດໃຫ້ "ມີປັນຍາທີ່ຈະນຳໄປເຖິງຄວາມພົ້ນໄດ້ດ້ວຍທາງຄວາມເຊື່ອໃນພຣະຄຣິດ" (3:15). ພຣະທັມຂໍ້ 16-17 ບອກເຖິງຕົ້ນກຳເນີດແລະລັກສະນະຂອງພຣະທັມວ່າພຣະທັມທຸກຕອນໄດ້ຮັບການຊົງດົນໃຈຈາກພຣະເຈົ້າ. ເວົ້າງ່າຍໆກໍຄືວ່າຜູ້ຂຽນພຣະທັມຄັມພີນັ້ນແມ່ນມະນຸດແຕ່ຜູ້ທີ່ໃຫ້ຄວາມຄິດແລະສະຕິປັນຍາໃນການຂຽນທຸກຂໍ້ຄຳແມ່ນພຣະເຈົ້າ. ຂໍ້ 16 ໄດ້ບອກເຖິງຄຸນປະໂຍດສີ່ຢ່າງຂອງພຣະທັມເຊັ່ນ: ເປັນປະໂຍດໃນການສອນ, ໃນການກ່າວຕັກເຕືອນ, ໃນການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະໃນການອົບຮົມໃນທາງຊອບທັມ. ພຣະທັມຂອງພຣະເຈົ້າສາມາດຊ່ວຍໄພ່ພົນຂອງພຣະອົງໃຫ້ກາຍເປັນບຸກຄົນທີ່ບັນລຸຜົນສຳເຣັດແລະຕຽມພ້ອມເພື່ອຈະເຮັດວຽກງານຂອງພຣະເຈົ້າ (3:17).

ເວລາພວກເຮົາຍອມໃຫ້ພຣະທັມຂອງພຣະເຈົ້າເປັນເຄື່ອງນຳພາຊີວິດ, ພວກເຮົາກໍຈະ "ບັນລຸຜົນສຳເຣັດ." ພວກເຮົາຈະສາມາດຫລີກເວັ້ນການຊົ່ວຊ້າທີ່ໄດ້ເວົ້າກັນມາໃນ 3:2-4 ແລະຈະສາມາດປູກຝັງຄຸນຄວາມດີທີ່ເຫັນຢູ່ໃນ 3:10-11 ຕໍ່ໄປ. ນອກນັ້ນພວກເຮົາຈະສາມາດແຈກແຍກສິ່ງດີແລະສິ່ງຮ້າຍ ແລະຈະບໍ່ຫລົງໄຫລໃນຄຳສອນທີ່ບໍ່ສອດຄ່ອງກັບພຣະທັມ. ພຣະເຈົ້າມີພຣະປະສົງໃຫ້ໄພ່ພົນຂອງພຣະອົງໄດ້ເຕີບໃຫຍ່ ແລະສາມາດມີສ່ວນໃນການປະກອບການດີທີ່ພຣະອົງໄດ້ຊົງຈັດຕຽມໄວ້ສຳລັບພວກເຮົາທຸກໆຄົນ.

<u>ຄຳຖາມ:</u>

1. ທ່ານມີຄວາມຮູ້ສຶກແນວໃດກັບຄວາມຄິດທີ່ວ່າຄຣິສຕຽນໄດ້ຢູ່ໃນ "ຄາວສຸດທ້າຍ" ມາເປັນເວລາກວ່າ 2000 ປີຜ່ານມາແລ້ວ?

2. ຄຣິສຕຽນໃນສມັຍນີ້ໄດ້ພາກັນ "ນັບຖືພຣະເຈົ້າຢ່າງຖືກຕ້ອງ ແຕ່ວ່າຣິດອຳນາດຂອງການນັບຖືນັ້ນ ເຂົາກໍປະຕິເສດ" ແນວໃດແດ່? (2 ຕມທ 3:5)

3. ແມ່ນຫຍັງແດ່ຄືລັກສະນະ ແລະຈຸດປະສົງຂອງພຣະທັມ ອີງຕາມ 2 ຕີໂມທຽວ 3:15-17?

4. ພຣະຄັມພີມີຄວາມໝາຍແນວໃດສຳລັບທ່ານ, ແລະທ່ານຈະອະທິບາຍຄວາມສັມພັນຣະຫວ່າງຕົວທ່ານ ແລະພຣະຄັມພີແນວໃດແດ່?

*ສຈ. ດຣ. ສີດນີ ຄານ*

# <u>ບົດຮຽນທີ 10</u>
# <u>ຜູ້ໃຫ້ ແລະຜູ້ຮັບນໍຣະດົກ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** 2 ຕີໂມທຽວ 4:1-8

**<u>ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:</u>** 2 ຕີໂມທຽວ 4

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ນໍຣະດົກທີ່ຫລາຍຄົນໄດ້ໃຫ້ໄວ້ ແລະທີ່ພວກເຮົາໄດ້ຮຽນຮູ້ຈະສົ່ງເສີມຊີວິດຄຣິສຕຽນ ແລະການຮັບໃຊ້ຂອງພວກເຮົາ.

**<u>ຄໍາຖາມເພື່ອການສໍາຣວດ:</u>** ທ່ານຈະໃຫ້ນໍຣະດົກແນວໃດແດ່? ທ່ານກໍາລັງເຮັດຕາມນໍຣະດົກອັນໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອອະທິບາຍນໍຣະດົກທີ່ຂ້ອຍໄດ້ຮັບຜົນປໂຍດຈາກ ແລະສລຸບນໍຣະດົກທີ່ຂ້ອຍຕ້ອງການ ຖ່າຍທອດໄວ້ໃຫ້ຄົນອື່ນຕໍ່ໄປ?

## <u>ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:</u>

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຫັນຄຸນຄ່າຂອງທຸກຄົນວ່າໄດ້ຖືກສ້າງຕາມພຣະສາຍາຂອງພຣະເຈົ້າ.
- ເຊື່ອຟັງແລະຮັບໃຊ້ພຣະຄຣິດເພື່ອຊ່ອຍຄວາມຕ້ອງການດ້ານຮ່າງກາຍ, ດ້ານຈິດວິນຍານ, ແລະດ້ານຄວາມຮູ້ສຶກ.
- ຈັດຕຽມຄົນໃຫ້ເປັນຜູ້ນໍາແບບຮັບໃຊ້.

## <u>ຄໍານໍາ</u>

ໂປໂລໄດ້ສັ່ງສອນເພື່ອນຮ່ວມງານເປັນຄັ້ງສຸດທ້າຍ ໃນຂະນະທີ່ທ່ານເອງກໍກໍາລັງພິຈາຣະນາເບິ່ງວາຣະສຸດທ້າຍຂອງຊີວິດ ແລະການຮັບໃຊ້ພຣະເຈົ້າຂອງຕົນເອງ.

ມີຄໍາເວົ້າໃນທໍານອງນີ້ວ່າ "*ຄົນທັງຫລາຍບໍ່ຕຽມພ້ອມທີ່ຈະດໍາເນີນຊີວິດ ຈົນກວ່າພວກເຂົາຕຽມພ້ອມທີ່ຈະຕາຍ.*" ມີຄໍາເວົ້ານຶ່ງອີກວ່າ "*ຄົນທີ່ຕາຍຢ່າງດີ ໄດ້ດໍາເນີນຊີວິດມາຢ່າງດີ ແລະຄົນທີ່ຕາຍຢ່າງຊົ່ວຮ້າຍໄດ້ດໍາເນີນຊີວິດມາຢ່າງຊົ່ວຮ້າຍ.*"

ຄວາມເວົ້າຂ້າງເທິງນີ້ຖືກຕ້ອງສໍາລັບອັຄສາວົກໂປໂລ. ໃນຂະນະດຽວກັນໂປໂລກໍຮັບຮູ້ຄວາມບໍ່ໝັ້ນຄົງຂອງຊີວິດ ແລະ ຄວາມຕາຍທີ່ຈະມາເຖິງທຸກໆຄົນ. ຫລັງຈາກທີ່ໂປໂລໄດ້ມາເຊື່ອໃນອົງພຣະເຢຊູຄຣິດ, ທ່ານກໍໄດ້ມອບຊີວິດໃຫ້ກັບພຣະອົງບໍ່ວ່າຈະເປັນຫລືຈະຕາຍ (2 ກຣທ 4:16--5:10). ທ່ານໄດ້ຂຽນໄວ້ໃນພຣະທັມຟີລິບ ປອຍ 1:21 ວ່າ "*ເພາະວ່າຖ້າເຮົາມີຊີວິດພຣະຄຣິດເປັນຊີວິດນີ້ ຖ້າເຮົາຕາຍກໍເປັນປໂຍດແກ່ເຮົາ.*" ໃນຕອນຂຽນພຣະທັມ 2 ຕີໂມທຽວ

ໂປໂລຮູ້ວ່າເວລາຂອງການຈາກໄປຂອງທ່ານໄດ້ໃກ້ເຂົ້າມາແລ້ວ; ແລະທ່ານເອງກໍມີຄວາມໝັ້ນໃຈວ່າພວງມາລັຍ ຫລື ລາງວັນແຫ່ງຄວາມຊອບທັມກຳລັງລໍຖ້າທ່ານຢູ່ໃນສວັນ (2 ຕມທ 4:6-8).

## ສິ່ງສຸດທ້າຍທີ່ໂປໂລສັ່ງໄວ້ກັບຕີໂມທຣວ (4:1-5)

ໂປໂລໄດ້ກ່າວໃນ 2 ຕີໂມທຣວ 3: 16-17 ວ່າພຣະທັມໄດ້ຮັບການດົນໃຈແລະເປັນປໂຍດ; ທ່ານໄດ້ເວົ້າຕໍ່ໄປວ່າພຣະທັມສາມາດຈັດຕຽມຄົນໄວ້ສຳລັບການດີທຸກຢ່າງ. ມາເຖິງບົດທີ 4, ໂປໂລໄດ້ສັ່ງສອນຕີໂມທຣວຕໍ່ໄປເຣື່ອງການຮັບໃຊ້. ການສອນໃນພາກນີ້ມີຄວາມສັກສິດຫລາຍສຳລັບຜູ້ທີ່ຈະຮັບງານໃນຊ່ວງຕໍ່ໄປ. ການທີ່ໂປໂລໄດ້ເອີ້ນໃຫ້ "ພຣະເຈົ້າແລະພຣະເຢຊູຄຣິດ" ຊົງເປັນພຍານໄດ້ເພີ່ມນ້ຳໜັກຂອງຄຳສອນ ແລະເພີ່ມຄວາມຮັບຜິດຊອບສຳລັບຕີໂມທຣວ.

ໂປໂລໄດ້ສັ່ງຕີໂມທຣວໃຫ້ປະກາດພຣະທັມແລະ "ເອົາໃຈໃສ່ເຮັດການທັງໃນເວລາມີໂອກາດແລະບໍ່ມີໂອກາດ" (4:2). ເວົ້າອີກແບບນຶ່ງກໍຄືວ່າ "ບໍ່ມີມື້ພັກທາງຝ່າຍຈິດວິນຍານ" ສຳລັບຄຣິສຕຽນ ແລະຜູ້ຮັບໃຊ້ພຣະເຈົ້າ. ການເປັນຄຣິສຕຽນບໍ່ແມ່ນຈະເປັນແຕ່ພຽງບາງຄັ້ງບາງຄາວ, ແຕ່ການເປັນຄຣິສຕຽນຈະຕ້ອງເປັນ 24 ຊົ່ວໂມງ ແລະ 7 ມື້.

ຕີໂມທຣວ ມີໜ້າທີ່ໃນການຊັກຊວນດ້ວຍເຫດຜົນ, ເຕືອນສະຕິ, ແລະຕັກເຕືອນ ດ້ວຍຄວາມພາກພຽນແລະອົດທົນ (4: 2). ມີຫລາຍຄັ້ງພວກເຮົາເກີດມີຄວາມອິດເມື່ອຍໃນການເຮັດການດີ; ແຕ່ຈົ່ງລະນຶກສເມີວ່າຄວາມອົດທົນຄືສັນຍາລັກຂອງການເປັນຜູ້ຮັບໃຊ້. ຄວາມອົດທົນຄືຜົນຂອງພຣະວິນຍານ. ໂປໂລຮູ້ຄວາມສຳຄັນຂອງຄວາມອົດທົນ; ທ່ານໄດ້ເຕືອນຕໍ່ໄປວ່າຈະມີເວລານຶ່ງທີ່ຄົນທັງຫລາຍຈະບໍ່ຍອມຟັງຄຳສອນທີ່ມີຫລັກ ແຕ່ພວກເຂົາຈະຫັນໄປຟັງຄຣູສອນທີ່ເວົ້າຖືກຫູຂອງພວກເຂົາ (4:3, 5). ທ້າຍສຸດໂປໂລໄດ້ສັ່ງຕີໂມທຣວໃຫ້ "ອົດທົນຕໍ່ການຍາກລຳບາກ, ຈົ່ງເຮັດໜ້າທີ່ຂອງຜູ້ປະກາດຂ່າວປະເສີດ, ແລະຈົ່ງປະຕິບັດໜ້າທີ່ໃຫ້ສຳເຣັດ (4:5).

## ເວລາທີ່ໂປໂລຈະຕ້ອງຈາກຕີໂມທຣວໄປ (4:6-8)

ໃນຄຳສັ່ງເທື່ອສຸດທ້າຍສຳລັບຕີໂມທຣວ, ໂປໂລໄດ້ເວົ້າເຖິງອຸປສັກຫລາຍຢ່າງທີ່ທ່ານໄດ້ປະສົບມາ (ເບິ່ງ 2 ຕມທ 4: 10,14,16). ພວກເຮົາບໍ່ໄດ້ເຫັນຄວາມພ່າຍແພ້ແລະຄວາມເພີ້ຝັນໃນຈົດໝາຍຂອງໂປໂລ; ແຕ່ພວກເຮົາໄດ້ເຫັນຄວາມຕຽມພ້ອມທີ່ຈະໄດ້ຈາກໄປໃນບໍ່ຊ້າ (ໂປໂລຮູ້ວ່າຄວາມຕາຍໄດ້ໃກ້ເຂົ້າມາເຖິງທ່ານແລ້ວ). ທ່ານໄດ້ເວົ້າວ່າ "ເຮົາກຳລັງຈະຕົກເປັນເຄື່ອງບູຊາຢູ່ແລ້ວ ແລະເຖິງເວລາແລ້ວທີ່ເຮົາຈະຈາກໄປ" (4:6). ໃນການເວົ້າເຖິງຄວາມຕາຍຂອງຕົນວ່າເປັນ ເຄື່ອງຖວາຍບູຊາ, ໂປໂລເຊື່ອວ່າການຖວາຍຊີວິດຄືການນະມັສການພຣະເຈົ້າ (ເບິ່ງ ໂຣມ 12:1-2; ຟີລິບປອຍ 2:17).

ໃນຂະນະທີ່ຄວາມຕາຍໃກ້ຈະມາເຖິງແລ້ວ, ໂປໂລໄດ້ລະນຶກເຖິງຊີວິດຂອງທ່ານໃນພຣະຄຣິດ (4:7). ທ່ານໄດ້ໃຊ້ເຣື່ອງກິລາມາເປັນຕົວຢ່າງ; ທ່ານໄດ້ປະກາດວ່າຕົວເອງໄດ້ແຂ່ງຂັນຈົນເຖິງທີ່ສຸດແລະໄດ້ຮັກສາຄວາມເຊື່ອໄວ້. ພວກເຮົາໄດ້ຮຽນຮູ້ວ່າໂປໂລໄດ້ອົດທົນຕໍ່ສູ້ ແລະບໍ່ເຄີຍຍອມແພ້ (1 ກຣທ 9: 24-27). ຕອນນີ້ ທ່ານກໍໄດ້ມາເຖິງຫລັກຫຸງຊັຍ ແລະທ່ານຮູ້ວ່າ "ພວງມາລັຍຄືຣາງວັນແຫ່ງຄວາມຊອບທັມ" ກຳລັງລໍຄອຍທ່ານຢູ່ເບື້ອງໜ້າ (4:8).
ໂປໂລໄດ້ສາຣະພາບກ່ອນແລ້ວວ່າທ່ານເອງກໍຍັງບໍ່ໄດ້ສຳເຣັດເທື່ອໃນຊີວິດນີ້ (ຟລປ 3:12). ທ່ານເຄີຍໄດ້ສະແດງຄວາມເສັຽໃຈ ເພາະທ່ານໄດ້ຂົ່ມເຫງຄຣິສຕຽນຕອນທີ່ຍັງບໍ່ຮູ້ຈັກພຣະເຢຊູຄຣິດ (1ກຣທ 15:9-10; 1 ຕມທ 1:15 -16). ເຖິງຢ່າງໃດກໍຕາມ, ໃນຂະນະທີ່ທ່ານໄດ້ທົບທວນເບິ່ງຊີວິດ ທ່ານກໍສາມາດເວົ້າໄດ້ຢ່າງມີກຽດວ່າທ່ານໄດ້ອົດສາສູ້ໃນການແຂ່ງຂັນ ແລະໄດ້ຮັກສາຄວາມເຊື່ອໄວ້ແລ້ວ.

ໂປໂລມີຄວາມໝັ້ນໃຈທີ່ໄດ້ຮູ້ວ່າທ່ານໄດ້ດຳເນີນຊີວິດ ເພື່ອພຣະເຈົ້າພຣະເຢຊູ; ແລະບັດນີ້ທ່ານກໍຕຽມພ້ອມທີ່ຈະມອບພາຣະໜ້າທີ່ໃຫ້ກັບຕີໂມທຽວ. ພວກເຮົາໄດ້ເຫັນຕົວຢ່າງໃນພຣະຄັມພີເຣື່ອງການມອບໜ້າທີ່ເຊັ່ນໂມເຊແລະໂຢຊວຍ, ເອລີຢາແລະເອລີຊາ, ແລະໃນຕອນນີ້ກໍແມ່ນໂປໂລແລະຕີໂມທຽວ. ອັຄສາວົກໂປໂລໄດ້ມອບມໍຣະດົກຝ່າຍຈິດວິນຍານໃຫ້ກັບຜູ້ທີ່ທ່ານໄດ້ຮັກທີ່ສຸດຄືຕີໂມທຽວ.

ທ່ານບໍ່ຕ້ອງສົງສັຍເລີຍວ່າພວກເຮົາແຕ່ລະຄົນຕ່າງກໍຈະປະມໍຣະດົກໄວ້ເບື້ອງຫລັງດ້ວຍກັນທັງນັ້ນ. ຄຳຖາມກໍຄືວ່າທ່ານຈະປະມໍຣະດົກແນວໃດ? ສິ່ງເຫລົ່ານັ້ນຄຸ້ມຄ່າສຳລັບການມີຊີວິດຢູ່ບໍ່? ເວລາທ່ານຈາກໂລກນີ້ໄປ, ສິ່ງນັ້ນຈະປ່ຽນແປງຫຍັງແດ່ໃນໂລກ ເພາະທ່ານໄດ້ມີຊີວິດ? ພວກເຮົາມີໂອກາດພຽງຄັ້ງດຽວ, ຊີວິດຂອງທ່ານເປັນແນວໃດ? ມີຫຍັງແດ່ທີ່ທ່ານຈະຕ້ອງປ່ຽນແປງ ເພື່ອທ່ານຈະໄດ້ເບິ່ງອະນາຄົດດ້ວຍຄວາມຊື່ນບານ ແລະໝັ້ນໃຈ ເໝືອນດັ່ງໂປໂລ?

<u>ຄຳຖາມ</u>:

1. ແມ່ນຫຍັງເປັນສິ່ງດຶງດູດພວກເຮົາໃຫ້ໄປຫາຄຣູສອນທີ່ສອນແຕ່ເຣື່ອງທີ່ພວກເຮົາຕ້ອງການຟັງ?

2. ໃຜມີໜ້າທີ່ໃນການ "ເຮັດວຽກຂອງຜູ້ປະກາດ"? ເຮົາຄວນຈະເບິ່ງວຽກອັນສັກສິດນີ້ຢ່າງໃດ?

3. ທ່ານຕ້ອງການໃຫ້ຄົນເວົ້າເຖິງທ່ານແນວໃດໃນງານສົບຂອງທ່ານ, ໂດຍບໍ່ໃຫ້ໃສ່ສີເພີ້ມ?

4. ແມ່ນໃຜເປັນຜູ້ປະມໍຣະດົກທີ່ທ່ານກຳລັງດຳເນີນຊີວິດຕາມຮູບແບບຢູ່ໃນປັດຈຸບັນນີ້? ມໍຣະດົກນີ້ມີລັກສນະແນວໃດ?

5. ຕີໂມທຽວສະບັບທີສອງ 4:8 ວາດພາບວ່າພຣະຜູ້ເປັນເຈົ້າ "ເປັນເຈົ້າຜູ້ພິພາກສາອັນຍຸດຕິທັມ." ທ່ານມີປະຕິກິຣິຍາແນວໃດເມື່ອໄດ້ເຫັນຮູບພາບນັ້ນ?

*ສຈ. ດຣ. ສິດນີ ຄານ*

# ບົດຮຽນທີ 11
# ການຢູ່ກິນໂດຍຄວາມເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຕີໂຕ 2:1-14
**ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:** ຕີໂຕ 2:1-15; 1 ຕີໂມທຽວ 5:1--6:2
**ຈຸດສຳຄັນຂອງບົດຮຽນນີ້:** ການມີຊີວິດໃນຄວາມເຊື່ອໃນທຸກສະຖານະການ
**ຄຳຖາມເພື່ອການສຳຣວດ:** ທ່ານຈະມີຊີວິດໃນຄວາມເຊື່ອຢ່າງໃດເມື່ອມີສະຖານະການ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາທາງທີ່ຈະຢູ່ຢ່າງໝັ້ນຄົງໃນເມື່ອມີສະຖານະການ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸສທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ເຣື່ອງຄວາມອົດນີ້ໃຜໆກໍພໍມີກັນທຸກຄົນ ແຕ່ຄວາມທົນນັ້ນຍັງຂາດເຂີນຢູ່, ສລຸບແລ້ວເຮົາທັງຫລາຍມີຄວາມອົດແລະຍັງຕ້ອງຝຶກຫັດຄວາມອົດນັ້ນໃຫ້ກາຍເປັນຄວາມທົນເພື່ອຈະສາມາດເຊື່ອພຣະເຈົ້າໄດ້ໃນທຸກສະຖານະການ. ຄວາມຈິງແລ້ວຄຳວ່າອົດເນີ, ທົນເນີ....ມັນເວົ້າກັນງ່າຍຢູ່ດອກຄັນຫາກສະຖານະການນັ້ນບໍ່ຖືກຕົນເອງ, ແຕ່ປາກົດວ່າທຸກຄັ້ງທີ່ມັນຖືກກັບຕົນເອງແລ້ວກໍເກືອບບໍ່ລອດ. ຂ້າພະເຈົ້າກໍບໍ່ຮູ້ຈັກຈະແນະນຳທ່ານແນວໃດເພື່ອບໍ່ໃຫ້ສະຖານະການນັ້ນຖືກຕົນເອງ ນອກຈະແນະນຳທ່ານໃຫ້ເອົາພຣະເຢຊູເປັນທີ່ກຳບັງ ຄືເຮົາຈະຕ້ອງເຂົ້າຢູ່ໃນພຣະເຢຊູ. ເມື່ອເຮົາຢູ່ໃນເພິ່ນແລ້ວເຮົາກໍຈະບໍ່ສັມຜັດກັບສະຖານະການນັ້ນ ເພາະມັນຈະຖືກພຣະເຢຊູໝົດ, ຄ້າຍຄືເຮົາຢູ່ໃນເຮືອນນັ້ນແລ້ວ ເມື່ອອາກາດຮ້ອນຫລືໜາວກໍແມ່ນອາກາດຂ້າງນອກ ເພາະວ່າທາງໃນເຮືອນເຮົາມີອາຍອຸ່ນ ແລະອາຍເຢັນ. ນີ້ແມ່ນສິ່ງດຽວທີ່ຄິດໄດ້ວ່າຈະຊ່ອຍທ່ານບໍ່ໃຫ້ສຳຜັດກັບສະພາບການຕ່າງໆ, ໂປໂລສັ່ງຕີໂຕໃຫ້ສອນຫລັກຄຳສອນຕໍ່ໄປນີ້;

### ຄຸນຄ່າຂອງຫລັກຄຳສອນ 2:1

ໂປໂລຂຽນຈົດໝາຍເຖິງເປໂຕໃນບົດທີ 2 ນີ້ແມ່ນເພິ່ນເນັ້ນໜັກສັ່ງເປໂຕໃຫ້ສອນຄຣິສຕຽນພາຍໃຕ້ການນຳພາຂອງເປໂຕໃຫ້ໃຊ້ຊີວິດການເປັນຢູ່ຢ່າງຄຣິສຕຽນທີ່ແທ້ຈິງ. ໂລໂລຂຽນວ່າ *"ແຕ່ຝ່າຍເຈົ້າ, ຈົ່ງສັ່ງສອນໃຫ້ເໝາະສົມກັບຄຳສອນອັນມີຫລັກ"* (ຂໍ້ 1). ຫາກເຮົາອ່ານພໍພາງໆໄປຄຳເວົ້ານີ້ກໍບໍ່ມີນ້ຳໜັກອັນໃດ ແຕ່ຫາກເຮົາອ່ານແລະພິຈາຣະນາເນື້ອໃນຂອງຄຳວ່າ *ແຕ່ຝ່າຍເຈົ້າ, ຈົ່ງສັ່ງສອນໃຫ້ເໝາະສົມກັບຄຳສອນອັນມີຫລັກ* ເຮົາກໍຈະເຫັນວ່າຄຳນີ້ມີນ້ຳໜັກຫລາຍ, ແຕ່ຝ່າຍເຈົ້າທີ່ໂປໂລກ່າວມີຄວາມໝາຍວ່າ ເຈົ້າເອງຕີໂຕເປັນຜູ້ທີ່ພຣະເຈົ້າຊົງເລືອກໃຫ້ກາຍ ເປັນຜູ້ຮັບໃຊ້ຂອງພຣະເຈົ້າມີໜ້າທີ່ສອນພຣະທັມຢ່າງມີຫລັກການ, ມີຣະບຽບໃນການສອນ, ມີໜ້າທີ່ສະແດງຕົນເປັນ ຕົວຢ່າງ, ຢູ່ໃນພຣະທັມຂອງພຣະເຈົ້າທຸກປະການ ສິ່ງເຫລົ່ານີ້ແມ່ນຄວາມໝາຍທີ່ໂປໂລກ່າວກັບຕີໂຕວ່າ ຝ່າຍເຈົ້າ. ໂປໂລກ່າວມາແລ້ວຄັ້ງນຶ່ງໃນບົດ 1 ວ່າ *"ເປັນຄົນໝັ້ນໃນຫລັກອັນທ່ຽງທັມທີ່ ຖືກຕ້ອງຕາມໂອວາດຄຳສອນເພື່ອຈະສາມາດ*

*ເຕືອນສະຕິດ້ວຍຄຳສອນອັນມີຫລັກ ແລະຊີ້ແຈງແກ່ຄົນທີ່ຄັດຄ້ານຄຳສອນນັ້ນ* "(ບົດ 1: 9). ຈົດໝາຍສະບັບນີ້ ຂຽນ ໂດຍໂປໂລເຖິງຕີໂຕນ້ອງຮັກຂອງເພິ່ນ ແລະຈົດໝາຍສະບັບດຽວກັນນີ້ເຮົາກໍມາເຖິງມືເຮົາດ້ວຍ ດັ່ງນັ້ນຄຳວ່າ *ແຕ່ຝ່າຍເຈົ້າ* ກໍແມ່ນເຮົາທຸກຄົນທີ່ອ່ານຈົດໝາຍນີ້ດ້ວຍ.

*ຈົ່ງສັ່ງສອນໃຫ້ເໝາະສົມກັບຄຳສອນອັນມີຫລັກ* ໝາຍຄວາມວ່າໃຫ້ສອນຕາມພຣະທັມຂອງພຣະເຈົ້າໂດຍບໍ່ມີການເພີ້ມຫລືຕັດປະການໃດ, ການທີ່ໂປກ່າວເຊັ່ນນີ້ກໍເພາະວ່າມີພວກຄຣູສອນປອມໃນສມັຍນັ້ນຄື ເຂົາເອງບໍ່ຢູ່ກິນຕາມຄຳສອນ." *ເຂົາປະກາດຕົວວ່າຮູ້ຈັກພຣະເຈົ້າ ແຕ່ວ່າໃນການເຮັດຂອງເຂົາ ເຂົາກໍປະຕິເສດພຣະອົງ ເຂົາເປັນຄົນໜ້າກຽດຊັງບໍ່ຍອມເຊື່ອຟັງໃຜ ແລະສຳລັບການດີອັນໃດກໍໃຊ້ການບໍ່ໄດ້ຈັກຢ່າງ* "(ຕີໂຕ 1:16). ດ້ວຍເຫດນີ້ໂປໂລສັ່ງເປໂຕສອນຄຣິສຕຽນວ່າ "*ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າແລະ ເປັນປໂຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນ ທາງຊອບທັມ, <u>ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດ ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ</u>* (2ຕີໂມທຽວ 3:16-17). ນີ້ຄືໝາກຜົນຂອງຄຳສອນອັນມີຫລັກທີ່ໂປໂລກ່າວເຖິງ.

**<u>ຫລັກຄຳສອນແຕ່ລະເພດວັຍ 2:2-10</u>**

ໃນເນື້ອໃນຈົດໝາຍຂອງໂປໂລແມ່ນໃຫ້ຕີໂຕສອນຄຣິສຕຽນແຕ່ລະເພດວັຍດັ່ງຕໍ່ໄປນີ້;

1. "*ຈົ່ງສອນພວກຊາຍທີ່ມີອາຍຸສູງໃຫ້ຮູ້ຈັກບັງຄັບຕົນ, ໃຫ້ເປັນຄົນສະງ່າຜ່າເຜີຍ, ເປັນຄົນມີສະຕິຮອບຄອບ, ເປັນຄົນມີຄວາມເຊື່ອ, ມີຄວາມຮັກ, ມີຄວາມອົດທົນຕາມສົມຄວນ*" (ຂໍ້ 2). ອາຍຸສູງໝາຍຄວາມວ່າຄົນແກ່ແລ້ວສົມຄວນຈະຕ້ອງມີສະຕິຮອບຄອບ, ວາງຕົວເປັນຕົວຢ່າງໃຫ້ພວກໜຸ່ມນ້ອຍໜ້ານັບຖືຢຳເກງ, ຢູ່ດ້ວຍຄວາມເຊື່ອ, ເອົາໃຈໃສ່ຄອບຄົວແລະວຽກງານຂອງໂບດ, ມີຄວາມອົດທົນດົນນານຫລາຍກວ່າພວກໜຸ່ມນ້ອຍ. ຫລາຍເທື່ອເຮົາໄດ້ຍິນຜູ້ເຖົ້າເວົ້າວ່າເຖົ້າມາແລ້ວຄວາມອົດທົນກໍລົດນ້ອຍຖອຍລົງຊຶ່ງກົງກັນຂ້າມກັບຄຳສອນຂອງໂປໂລ.

2. "*ຝ່າຍພວກຜູ້ຍິງທີ່ມີອາຍຸສູງນັ້ນກໍເໝືອນກັນ ຈົ່ງໃຫ້ເຂົາມີກິຣິຍາສົມກັບເປັນຄົນຂອງພຣະເຈົ້າຢ່າໃຫ້ເປັນຄົນໃຊ້ຄຳນິນທາປມາດ ຫລືເປັນຄົນຕິດເຫລົ້າແວງຫລາຍ ແຕ່ໃຫ້ເປັນຜູ້ສອນຄຸນງາມຄວາມດີ ເພື່ອເປັນການແອບສອນພວກຍິງໜຸ່ມໃຫ້ຮັກຜົວແລະລູກຂອງຕົນ ໃຫ້ເປັນຄົນມີສະຕິອັນດີຮອບຄອບ, ເປັນຄົນບໍຣິສຸດ, ເປັນຄົນເອົາໃຈໃສ່ໃນວຽກບ້ານການເຮືອນ, ເປັນຄົນມີໃຈເມດຕາ, ແລະເປັນຄົນນ້ອມເຊື່ອຟັງຜົວຂອງຕົນ <u>ເພື່ອພຣະທັມຂອງພຣະເຈົ້າຈະບໍ່ຖືກປມາດ</u>* "(ຂໍ້ 3-5). ທຸກຂໍ້ຄວາມທີ່ໂປໂລກ່າວມານັ້ນເປັນທີ່ເຂົ້າໃຈດີດັ່ງນັ້ນຂ້າພະເຈົ້າຈະບໍ່ຂໍກ່າວຊ້ຳອີກນອກຈາກຄຳວ່າ *ເພື່ອເປັນການແອບສອນພວກຍິງໜຸ່ມ* ດ້ວຍວ່າບາງຄັ້ງເຮົາລືມຄິດວ່າພວກໜຸ່ມນ້ອຍຈອບເບິ່ງການປະພຶດຂອງເຮົາຢູ່ທຸກວັນ, ເຮົາສັງເກດເຫັນລູກຂອງເຮົາເອງທີ່ເບິ່ງເຮົາເປັນຕົວຢ່າງໃນເຮືອນຢູ່ທຸກວັນ. ຕົວຢ່າງເຮົາອ້ອນວອນກ່ອນກິນເຂົ້າພວກລູກກໍຈະເຮັດຄືເຮົາ. ດັ່ງນັ້ນພວກຜູ້ຍິງອາວຸໂສສົມຄວນຈະວາງຕົວຕາມຄຳສອນຂອງໂປໂລບໍ່ວ່າຈະຢູ່ໃນໂບດລືໃນບ້ານ ເພື່ອພຣະທັມຂອງພຣະເຈົ້າຈະບໍ່ຖືກປມາດດັ່ງທີ່ໂປໂລກ່າວ.

3. "*ຝ່າຍພວກຊາຍໜຸ່ມກໍເໝືອນກັນ ຈົ່ງຕັກເຕື່ອນໃຫ້ເຂົາມີສະຕິຮອບຄອບ ຄືເຈົ້າເອງຈົ່ງສະແດງຕົນເປັນແບບຢ່າງໃນການດີທຸກສິ່ງໃນການສອນ, ຈົ່ງສແດງຄວາມສຸຈຣິດໃຈແລະມີໃຈສູງສົ່ງ ແລະໃຊ້ຄຳເວົ້າອັນມີຫລັກຊຶ່ງບໍ່ມີຜູ້ໃດຈະຕິໄດ້ <u>ເພື່ອຝ່າຍຜູ້ຂັດຂວາງຈະໄດ້ຮັບຄວາມອັບອາຍ</u>* "(ຂໍ້ 6-8). ເຮົາສັງເກດເຫັນວ່າວິທີການສອນພວກຊາຍໜຸ່ມຈຳເປັນຈະຕ້ອງວາງຕົວເປັນແບບຢ່າງດັ່ງທີ່ໂປໂລບອກໃຫ້ຕີໂຕໃຫ້ສະແດງຕົນເປັນແບບຢ່າງ, ໃນເວລານັ້ນຕີໂຕ ມີອາຍຸເກືອບ 40 ປີແລ້ວ ແຕ່ຍັງຖືວ່າເປັນໜຸ່ມຢູ່. ຄວາມຈິງແລ້ວການເປັນແບບຢ່າງນີ້ບໍ່ແມ່ນແຕ່ຈະເປັນແບບຢ່າງໃຫ້ພວກໜຸ່ມນ້ອຍເບິ່ງເທົ່ານັ້ນ, ຄົນໜຸ່ມຄືຕີໂຕພວກຜູ້ເຖົ້າກໍເບິ່ງຄືກັນ.

4. "*ຈົ່ງຕັກເຕືອນພວກຂ້ອຍຂ້າໃຫ້ເຂົານ້ອມຟັງນາຍຂອງຕົນ ໃຫ້ເຂົາເຮັດໃຫ້ຖືກໃຈນາຍທຸກສິ່ງ ແລະຢ່າໃຫ້ເປັນຄົນຖຽງຄວາມ, ຢ່າໃຫ້ເປັນຄົນລັກໂລບເຊື່ອງບັງສິ່ງໃດ ແຕ່ໃຫ້ສັດຊື່ສຸຈຣິດໃນທຸກສິ່ງ <u>ເພື່ອວ່າການທັງປວງນັ້ນ</u>*

*ເຂົາຈະໄດ້ເທີດທູນພຣະກຣຸນາແລະຄຳສອນ ເຣື່ອງພຣະເຈົ້າຜູ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ* "(ຂໍ້ 9-10). ໂປໂລກຳລັງເວົ້າເຖິງພວກຂ້ອຍຂ້າໃນສມັຍນັ້ນ ສ່ວນສມັຍນີ້ຫລາຍປະເທດກໍບໍ່ມີຣະບົບຂ້ອຍຂ້າແລ້ວ. ເຣື່ອງຂອງຂ້ອຍຂ້າເປັນດັ່ງນີ້; ຂ້ອຍຂ້າໃນສມັຍນັ້ນຄ້າຍຄືສິນຄ້າທົ່ວໄປໃນທ້ອງຕລາດ ພວກຂ້ອຍຂ້າສາມາດຊື້ຂາຍກັນຄ້າຍຄືກັບວ່າຜູ້ເປັນເຈົ້ານາຍເປັນເຈົ້າຂອງຂ້ອຍຂ້າຜູ້ນັ້ນ, ການຊື້ຂາຍແມ່ນຕົກລົງຕາມຣາຄາສຸຂະພາບແລະຮ່າງກາຍຂອງຂ້ອຍຂ້າ. ໂປໂລສັ່ງໃຫ້ເປໂຕສອນພວກຂ້ອຍຂ້າໃຫ້ຟັງຄວາມນາຍຂອງຕົນ, ຢ່າໃຫ້ເຂົາຖຽງຄວາມ, ຢ່າໃຫ້ເຂົາເປັນຄົນລັກໂລບ, ແຕ່ໃຫ້ເຮັດທຸກຢ່າງດ້ວຍໃຈສຸຈຣິດ ເມື່ອໃດເຂົາຫາກຍັງເຮັດສິ່ງນີ້ຢູ່ໂປໂລກ່າວວ່າ *ເພື່ອວ່າການທັງປວງນັ້ນ ເຂົາຈະໄດ້ເທີດທູນພຣະກຣຸນາແລະຄຳສອນ ເຣື່ອງພຣະເຈົ້າຜູ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ* ". ສຳລັບເຮົາທັງຫລາຍເຖິງແມ່ນວ່າບໍ່ໄດ້ເປັນຂ້ອຍຂ້າໃນໂຮງຈັກໂຮງງານທີ່ເຮັດງານຢູ່ກໍຕາມ ຫາກເຮົາເອົາຄຳສອນນີ້ມາໃຊ້ໃນຊີວິດຂອງເຮົາ ບາງທີ່ເຈົ້ານາຍຫລືເພື່ອນຝູງໃນໂຮງງານນັ້ນອາດຈະເຊື່ອພຣະເຈົ້າຍ້ອນການກະທຳຂອງເຮົາຄືກັນ.

## ເຫດຜົນໃນການປະຕິບັດ 2:11-14

ເຮົາທັງຫລາຍເຂົ້າໃຈວ່າການໃຊ້ຊີວິດຕາມພຣະທັມຂອງພຣະເຈົ້ານັ້ນເປັນການສະແດງເຖິງຄວາມເຊື່ອທີ່ມີການປະຕິບັດຕາມຫລັກພຣະທັມແຫ່ງຄວາມເຊື່ອຂອງບຸກຄົນ ການປະຕິບັດຂອງເຮົາມັນກາຍ ເປັນໂຄມໄຟອັນຮຸ່ງແຈ້ງໃຫ້ຄົນທັງປວງໃຫ້ເຫັນຮຸ່ງທາງຂອງຄວາມລອດພົ້ນອີກດ້ວຍ, ທຸກຄົນທີ່ປະຕິບັດຕາມຫລັກຄຳສອນແຕ່ລະມື້ລະວັນກໍຈະພົ້ນຈາກຄວາມຊົ່ວອະທັມແລະກິເລດຕັນຫາຝ່າຍໂລກນີ້, ຍິ່ງໄປກວ່ານັ້ນລາວຍັງຈະພົ້ນຈາກບຶງໄຟນະຮົກທີ່ພຣະເຈົ້າໄດ້ສ້າງໄວ້ສຳລັບພະຍາມານກັບບໍຣິວານຂອງມັນອີກດ້ວຍ.

ໂປໂລຂຽນຈົດໝາຍບອກຕີໂຕສອນຄຣິສຕຽນທັງຫລາຍວ່າ "*ໃຫ້ດຳເນີນຊີວິດໃນສມັຍນີ້ຢ່າງມີສະຕິອັນດີຮອບຄອບດ້ວຍຄວາມຍຸຕິທັມແລະນັບຖືພຣະເຈົ້າຢ່າງຖືກຕ້ອງ* "(ຂໍ້ 12). ໝາຍຄວາມວ່າໃຫ້ຄຣິສຕຽນດຳເນີນຊີວິດຕາມຫລັກທັມຂອງຂ່າວປະເສີດ, ໃຫ້ວາງຕົວໃຫ້ເໝາະສົມກັບເປັນຜູ້ທີ່ພຣະເຈົ້າຊົງໄຖ່ດ້ວຍຣາຄາແພງ ຄືເອົາພຣະບຸດອົງດຽວຂອງພຣະອົງມາເປັນຄ່າໄຖ່ຄວາມຜິດບາບຂອງທຸກຄົນທີ່ຍອມຮັບເອົາພຣະເຢຊູມາເປັນພຣະຜູ້ຊ່ອຍໃຫ້ລອດຂອງລາວ. ຄຣິສຕຽນເຮົາບໍ່ວ່າໃນສມັຍໃດກໍມີຄົນຫລົງທາງຢ່າງຫລວງຫລາຍຍ້ອນຂາດສະຕິຣະວັງຕົວ ຈຶ່ງຫລົງກົນຂອງມານຊາຕານ. ໃຫ້ຄຣິສຕຽນທັງຫລາຍສຳນຶກສເມີວ່າພຣະເຈົ້າຊົງຮັກແລະເມຕາສົງສານເຮົາສເມີ ແຕ່ມານຊາຕານພະຍາຍາມປິດຫູບັງຕາບໍ່ໃຫ້ເຮົາເຫັນຄວາມຮັກຂອງພຣະເຈົ້າຢ່າງແທ້ຈິງ.

ຕົວຢ່າງຄຳຫລອກລວງຂອງມານໃນຕົ້ນເດີມດັ່ງນີ້; "*ໝາກໄມ້ທຸກໆກົກໃນສວນນີ້ເຈົ້າກິນໄດ້ໝົດ ເວັ້ນໄວ້ແຕ່ກົກໄມ້ທີ່ໃຫ້ຄວາມຮູ້ຈັກຄວາມດີແລະຄວາມຊົ່ວ ເຈົ້າຢ່າກິນ ຖ້າເຈົ້າຂືນກິນໝາກໄມ້ໃນກົກນີ້ ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ*" (ປະຖົມມະການ 2: 16-17). ຕໍ່ມາຊາຕານໄດ້ຖາມຜູ້ຍິງວ່າ "*ຈິງຫລືທີ່ພຣະເຈົ້າຊົງຫ້າມບໍ່ໃຫ້ກິນໝາກໄມ້ໃນສວນນີ້* "(ປະຖົມມະການ 3:1). ຊາຕານໄດ້ພິກຄຳເວົ້ານ້ອຍນຶ່ງຈາກຄຳເວົ້າຂອງພຣະເຈົ້າ, ຈຶ່ງສັງເກດຄຳສັ່ງພຣະເຈົ້າແລະຄຳຖາມຫລອກລວງຂອງມານ. ຄຳຖາມຂອງມັນແມ່ນກິນບໍ່ໄດ້ຈັກກົກ ແຕ່ພຣະເຈົ້າຊົງຫ້າມບໍ່ໃຫ້ກິນແຕ່ກົກດຽວ. ຄັ້ງທຳອິດນີ້ຜູ້ຍິງຍັງບໍ່ທັນຫລົງກົນມານພ້ອມທັງບໍ່ເຂົ້າໃຈເຈຕະນາຂອງຊາຕານ ຜູ້ຍິງນັ້ນຈຶ່ງໂອ້ລົມໄຂຄວາມລັບ ໃຫ້ຊາຕານຟັງຕໍ່ໄປວ່າ "*ໝາກໄມ້ທຸກໆກົກໃນສວນນີ້ພວກເຮົາ ກິນໄດ້ ເວັ້ນໄວ້ແຕ່ໝາກໄມ້ໃນກົກທີ່ຢູ່ກາງສວນນັ້ນ ເພາະພຣະເຈົ້າຊົງບອກບໍ່ໃຫ້ພວກເຮົາກິນ ຫລືກະທັ້ງແຕະຕ້ອງເປັນເດັດຂາດ ຖ້າພວກເຮົາຂືນກິນພວກເຮົາຕ້ອງຕາຍ ງູຈຶ່ງຕອບນາງວ່າ ບໍ່ເປັນຄວາມຈິງດອກ* "(ປະຖົມມະການ 3:2-3).

ຄັ້ງທຳອິດມານປີ້ນຄຳເວົ້າຂອງພຣະເຈົ້າ, ຄັ້ງທີສອງບອກຜູ້ຍິງວ່າພຣະເຈົ້າເວົ້ານັ້ນບໍ່ເປັນຄວາມຈິງຈຶ່ງເຮັດໃຫ້ຜູ້ຍິງເຮັດຕາມຄຳຂອງມານ ແລະຜູ້ຍິງຍັງເພີ້ມຄຳເວົ້າຂອງພຣະເຈົ້າອີກວ່າ *ຫລືກະທັ້ງແຕະຕ້ອງເປັນເດັດຂາດ* ທີ່ບໍ່ໄດ້ຢູ່

ໃນຄຳເວົ້າຂອງພຣະເຈົ້າ. ຜູ້ຍິງຂາດສະຕິຣະວັງຕົວໂດຍບໍ່ຄິດພິຈະຣະນາວ່າງູທີ່ເວົ້ານຳນາງນັ້ນເປັນໃຜ? ມາແຕ່ໃສ? ມີຈຸດປະສົງອັນໃດຈຶ່ງເວົ້າແນວນັ້ນ? ສິ່ງສຳຄັນຄືຜູ້ຍິງເປີດໂອກາດພົບປະໂອ້ລົມກັບ (ງູ) ຄົນແປກໜ້າ, ຫາກຜູ້ຍິງນັ້ນປະຕິບັດຕາມຫລັກຄຳສອນຂອງພຣະເຈົ້ານາງກໍຈະບໍ່ຕົກໃນຄວາມບາບ. ດ້ວຍເຫດນີ້ແຫລະຄຣິສຕຽນໃນສມັຍນີ້ຄວນມີສະຕິອັນດີຮອບຄອບພິຈະຣະນາເບິ່ງເຫດການຕ່າງໆທີ່ເກີດຂຶ້ນກັບຕົນເອງນັ້ນບໍ່ມາຈາກພຣະເຈົ້າຫລືມາຈາກຊາຕານ. ມານຊາຕານມັນຢາກຈະຂ້າທ່ານໃຫ້ຕາຍຈາກພຣະເຈົ້າ ຫລືເຮັດໃຫ້ທ່ານເຊົາເຊື່ອພຣະເຈົ້າ ແຕ່ມັນກໍເຮັດບໍ່ໄດ້ເພາະພຣະເຈົ້າຄຸ້ມຄອງທ່ານຢູ່ ດັ່ງນັ້ນມານຈຶ່ງຄອຍຈອບເຮັດອັນນັ້ນອັນນີ້ເພື່ອໃຫ້ທ່ານເປັນທຸກໃຈແລ້ວກໍ ໜີຈາກພຣະເຈົ້າ. ຊາຕານມັນໃຊ້ລູກໄມ້ເກົ່າທີ່ມັນໃຊ້ກັບທ່ານໂຢບມາແລ້ວໃນພຣະຄັມພີເດີມເພື່ອໃຫ້ທ່ານໂຢບໝົດຄວາມອົດທົນແລ້ວກໍໜີຈາກພຣະເຈົ້າ.

<u>**ຄຳຖາມ:**</u>

1: ຄຳສອນທີ່ມີຫລັກໝາຍຄວາມວ່າແນວໃດ?

2. ເປັນຫຍັງໂປໂລຈຶ່ງຂຽນຈົດຫມາຍນີ້ເຖິງຕີໂຕ?

3. ໂປໂລສັ່ງໃຫ້ຕີໂຕເຮັດຫຍັງແດ່?

4. ໃຫ້ຕີໂຕເປັນຕົວຢ່າງແນວໃດ? ເຮົາເດສິນຄວນເປັນຕົວຢ່າງແນວໃດ?

5. ໃຫ້ດຳເນີນຊີວິດຢ່າງມີສະຕິດີຮອບຄອບໝາຍວ່າແນວໃດ?

6. ເຣື່ອງຂອງນາງເອວາ ແລະເຣື່ອງຂອງທ່ານໂຢບສອນຫຍັງເຮົາແດ່?

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*

# <u>ບົດຮຽນທີ 12</u>
# <u>ເຮັດດີເປັນໜ້າທີ່ຂອງເຮົາ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ຕີໂຕ 3:1-9
**<u>ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:</u>** ຕີໂຕ 3
**<u>ຈຸດສຳຄັນຂອງບົດຮຽນນີ້</u>:** ຄຣິສຕຽນແທ້ນັ້ນແມ່ນແນໃສ່ເຣື່ອງຊີວິດນີຣັນເປັນສ່ວນໃຫຍ່
**<u>ຄຳຖາມເພື່ອການສຳຣວດ:</u>** ຄຳວ່າຄຣິສຕຽນມີຄວາມໝາຍອັນໃດສຳລັບທ່ານ?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອນຳພາຄຣິສຕຽນຝຶກຫັດເອົາຊີວິດນີຣັນເປັນສິ່ງສຳຄັນທີ່ສຸດ.

**<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸສທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## <u>ບົດນຳ</u>

ໂປໂລຂຽນຈົດໝາຍເພື່ອບອກໃຫ້ຕີໂຕສອນຄຣິສຕຽນຊາວກຣີກທັງຫລາຍ ໃຫ້ມີຄວາມສັມພັນກັບຄົນພາຍນອກພ້ອມທັງນັບຖືກົດໝາຍດ້ວຍການຍອມຢູ່ໃຕ້ບັງຄັບບັນຊາເຈົ້າໜ້າທີ່ບ້ານເມືອງທຸກປະການ, ທັງນີ້ກໍເພື່ອສະແດງຕົນເປັນພະຍານຝ່າຍພຣະເຢຊູວ່າເປັນຜູ້ສ້າງສັນຕິສຸກແລະຢູ່ດ້ວຍຄວາມສງົບສຸກເໝາະສົມກັບເປັນຄົນຂອງພຣະຄຣິດ.

## <u>ເຮັດດີຕໍ່ຄົນພາຍນອກ 3:1-2</u>

ການເຮັດດີເປັນຂອງທັມມະດາທີ່ຄຣິສຕຽນຈະຕ້ອງເຮັດເປັນກິຈການປະຈຳວັນ *"ເຫດສັນນັ້ນຕາມທີ່ມີໂອກາດ ໃຫ້ພວກເຮົາເຮັດການດີຕໍ່ຄົນທັງປວງ ແລະເປັນຕົ້ນວ່າຄອບຄົວທີ່ຮ່ວມຢູ່ໃນຄວາມເຊື່ອ "*(ຄາລາເຕັຽ 6:10). ເຖິງແມ່ນວ່າເຮົາຈະເຮັດຫລືບໍ່ເຮັດມັນກໍເປັນຄຳສັ່ງຢູ່ດີ. ຄວາມດີຂອງຄຣິສຕຽນນັ້ນບໍ່ແມ່ນເຮັດດີຕໍ່ພັກພວກເພື່ອນຝູງຂອງຕົນເທົ່ານັ້ນ ພຣະຄັມພີຍັງສອນໃຫ້ເຮັດດີຕໍ່ຄົນພາຍນອກອີກດ້ວຍ ຍິ່ງໄປກວ່ານັ້ນຍັງສອນອີກວ່າໃຫ້ເຮັດດີແມ່ນກະທັງສັດຕຣູ *"ແຕ່ຈົ່ງຮັກສັດຕຣູຂອງທ່ານທັງຫລາຍແລະຈົ່ງເຮັດດີຕໍ່ເຂົາ "*(ລູກາ 6:35ກ). ເຮົາຮູ້ຢູ່ແກ່ໃຈແລ້ວວ່າບໍ່ມີຜູ້ໃດໃນໂລກນີ້ຈະຮັກສັດຕຣູຂອງຕົນດອກ ນອກຈາກພວກຄຣິສຕຽນທີ່ຖືກສອນມາແນວນັ້ນ ທັງນີ້ກໍເພື່ອສ້າງສັດຕຣູມາເປັນມິດດີກວ່າການສ້າງມິດເປັນສັດຕຣູ.

ໂປໂລສັ່ງຕີໂຕໃຫ້ສັ່ງສອນຄຣິສຕຽນໃຫ້ເປັນຄົນໂຄຣົບພວກເຈົ້ານາຍ ແລະພວກຜູ້ປົກຄອງບ້ານເມືອງໂດຍບໍ່ຄິດໝິ່ນປມາດຜູ້ໃດ *"ຈົ່ງເຕືອນສະຕິເຂົາໃຫ້ຢູ່ໃຕ້ບັງຄັບຜູ້ປົກຄອງແລະຜູ້ມີອຳນາດຄືໃຫ້ນ້ອມຟັງແລະມີໃຈພ້ອມທີ່ຈະເຮັດການດີທຸກຢ່າງ ຢ່າໃຫ້ເຂົາໝິ່ນປມາດໃຜຈັກຄົນ "*(ຂໍ້ 1-2ກ). ຂ້າພະເຈົ້າຄິດເຖິງອະດີດຜູ້ແທນຣາສດອນຄົນນຶ່ງ ກ່າວວ່າ " ຫລາຍຄົນມີຄວາມຮູ້ ແຕ່ບໍ່ແມ່ນໝົດທຸກຄົນທີ່ມີຄວາມຮູ້ນັ້ນຮູ້ຄວາມ," ຄຳເວົ້າຄຳນີ້ເຮັດໃຫ້ຂ້າພະເຈົ້າສົນໃຈເປັນພິເສດເພາະເປັນຄຳເວົ້າຂອງຄົນມີປັນຍາ. ເພິ່ນອະທິບາຍວ່າ<u>ຄວາມຮູ້</u>ແມ່ນຮຽນມາຈາກໂຮງຮຽນ ສ່ວນ<u>ຮູ້ຄວາມ</u>

ນັ້ນແມ່ນຮຽນມາຈາກພໍ່ແມ່ສັ່ງສອນໃຫ້ລູກເປັນຄົນຮູ້ຄວາມ ເຊັ່ນຮູ້ຈັກຮັກແພງຊົນຊັ້ນ, ແລະນັບຖືຄົນຊັ້ນສູງ ເຊັ່ນພວກເຈົ້ານາຍ, ພວກຜູ້ເຖົ້າຜູ້ແກ່. ຫາກຜູ້ໃດຮູ້ຈັກຕ່ຳຮູ້ຈັກສູງຄືແນວນີ້ກໍເປັນທີ່ຮັກແພງແກ່ຄົນທົ່ວໄປ. ດ້ວຍເຫດນີ້ແຫລະອາຈານໂປໂລຈຶ່ງສັ່ງໃຫ້ຕີໂຕສອນຄຣິສຕຽນໃຫ້ຢູ່ໃຕ້ການປົກຄອງຂອງຜູ້ມີອຳນາດທຸກຢ່າງ ທັງພ້ອມທີ່ຈະເຮັດການດີທີ່ເຫັນວ່າຊອບ ແລະຄຣິສຕຽນຈະບໍ່ໝິ່ນປມາດຜູ້ໃດ. *"ຖ້າທ່ານຢາກໃຫ້ເຂົາເຮັດຢ່າງໃດ ແກ່ທ່ານຈົ່ງເຮັດຢ່າງນັ້ນແກ່ເຂົາເໝືອນກັນ"* (ລູກາ 6:31). ໃນພຣະທັມ ໂຣມ 13:1-7 ສອນເຣື່ອງການນັບຖືກົດໝາຍ ເພາະວ່າຜູ້ມີອຳນາດນັ້ນມາຈາກພຣະເຈົ້າ,

<u>ຄິດເຖິງຕົນເອງ 3:3-7</u>

ໃນຈົດໝາຍໂປໂລກ່າວເຕືອນວ່າ *"ເພາະວ່າເມື່ອຄາວກ່ອນນັ້ນພວກເຮົາເອງກໍເປັນຄົນໂງ່, ບໍ່ຍອມເຊື່ອຟັງ, ຖືກເຂົາຫລອກລວງໃຫ້ຫລົງ, ເປັນຂ້ອຍຂ້າຂອງກິເລດຕັນຫາ ແລະການສນຸກສນານຫລາຍປະການ, ເຄີຍໃຊ້ເວລາໃນການຄິດຮ້າຍແລະການເຫິງສາ ເປັນຄົນໜ້າຊັງແລະກຽດຊັງກັນ"* (ຂໍ້ 3). ສິ່ງເຫລົ່ານີ້ເຮົາທັງຫລາຍເຄີຍເປັນຄົນຢ່າງນີ້ມາກ່ອນ ດັ່ງນັ້ນໂປໂລຈຶ່ງກ່າວເຕືອນວ່າຢ່າໄດ້ໝິ່ນປມາດຜູ້ໃດຜູ້ນຶ່ງ ເພາະວ່າເຮົາທັງຫລາຍເຄີຍເປັນແນວນີ້ມາກ່ອນຄືກັນ ຫາກເຮົາຄິດປມາດຜູ້ໃດຜູ້ນຶ່ງ 1. ເຮົາກໍປມາດຕົນເອງ 2. ເຮົາລືມຄິດວ່າເຮົາເປັນແນວນັ້ນມາກ່ອນ 3. ຫາກເຮົາປມາດເພິ່ນໆກໍຈະປມາດເຮົາ 4. ເຮົາໝົດໂອກາດຮູ້ຈັກຮັກແພງກັບຜູ້ນັ້ນ ແລະໝົດໂອກາດປະກາດເຣື່ອງຣາຊອານາຈັກສວັນກັບລາວອີກ.

*"ເປັນຂ້ອຍຂ້າຂອງກິເລດຕັນຫາ"* ພຣະຄັມພີບອກເຮົາວ່າເຮົາເຄີຍເປັນຂ້ອຍຂ້າຂອງກິເລດຕັນຫາຫລືເວົ້າໄດ້ວ່າ ເຮົາທັງຫລາຍເຄີຍເປັນຂ້ອຍຂ້າຂອງຄວາມຜິດບາບ ແຕ່ເຮົາເອງບໍ່ເຄີຍຮູ້ສຶກວ່າເຮົາເປັນຈົນຮອດເວລາທີ່ເຮົາມາເຊື່ອພຣະເຈົ້າຈຶ່ງຮູ້ເມື່ອຄິງວ່າເປັນແນວນັ້ນແທ້ ມັນຄ້າຍຄືຂີ້ມິ້ນໝໍ້ທາໜ້ານັ້ນແລ້ວຫາກຜູ້ອື່ນບໍ່ທ້ວງເຮົາກໍບໍ່ຮູ້. ຄຳວ່າເປັນຂ້ອຍຂ້າທີ່ໂປໂລກ່າວນີ້ໝາຍຄວາມວ່າ ມີໃຈປາຖນາເຮັດຕາມກິເລດຕັນຫາຂອງຕົນເອງແຕ່ລະວັນໆບໍ່ມີເມືອງພໍ ລາວບໍ່ມີຄວາມຮູ້ສຶກວ່າລາວເປັນຂ້ອຍຂ້າຂອງກິເລດຕັນຫາແຕ່ຢ່າງໃດ ເພາະລາວຕາຍແລ້ວໃນຄວາມບາບ. ຄົນຕາຍຍ່ອມຈະບໍ່ມີຄວາມຮູ້ສຶກອັນໃດ ແຕ່ເມື່ອໃດລາວຫາກຄືນມີຊີວິດອີກໃນອົງພຣະເຢຊູລາວກໍຈະຮູ້ທັນທີວ່າລາວເຄີຍເປັນຂ້ອຍຂ້າຂອງກິເລດຕັນຫາ. ດ້ວຍເຫດນີ້ໂປໂລຈຶ່ງເຊີນໃຫ້ທຸກຄົນຢູ່ໃນຊີວິດໃໝ່ຄວນຄິດເຫັນຕົນເອງກ່ອນຈະໄປເວົ້າໃຫ້ຜູ້ອື່ນ, ພຣະເຢຊູກ່າວວ່າ *"ເປັນສັນໃດທ່ານຈຶ່ງເວົ້າກັບພີ່ນ້ອງຂອງຕົນວ່າ ພີ່ນ້ອງເອີຍ, ໃຫ້ຂ້ອຍເຂັ່ຽຂີ້ເຫຍື້ອອອກຈາກຕາຂອງເຈົ້າ ແຕ່ທ່ານເອງໄມ້ທັງທ່ອນທີ່ຢູ່ໃນຕາຂອງຕົນ ຍັງບໍ່ເຫັນ"* (ລູກາ 6:42).

ໂປໂລກ່າວເຕືອນອີກວ່າ ເຫດທີ່ເຮົາພົ້ນຈາກການເປັນຂ້ອຍຂ້າຂອງກິເລດຕັນຫານັ້ນກໍຍ້ອນພຣະເມດຕາກະຣຸນາຂອງພຣະເຈົ້າທີ່ຊົງໂຜດໃຫ້ເຮົາພົ້ນ *"ພຣະເມດຕາຂອງພຣະເຈົ້າຜູ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ* ຂໍ້ 4ກ *ພຣະອົງຊົງໂຜດເຮົາທັງຫລາຍໃຫ້ພົ້ນບໍ່ແມ່ນຍ້ອນກິຈການອັນຊອບທັມທີ່ພວກເຮົາເອງໄດ້ເຮັດ ແຕ່ພຣະອົງໄດ້ຊົງພຣະກະຣຸນາຊຳຣະໃຫ້ພວກເຮົາມີໃຈບັງເກີດໃໝ່ ແລະຊົງສ້າງພວກເຮົາຂຶ້ນໃໝ່ໂດຍພຣະວິນຍານບໍຣິສຸດ" (ຂໍ້ 5). ເມື່ອຊົງປະກາດໄວ້ວ່າພວກເຮົາເປັນຄົນຊອບທັມດ້ວຍພຣະຄຸນຂອງພຣະອົງນັ້ນ ພວກເຮົາກໍຈະໄດ້ຮັບມໍຣະດົກ ຄືຊີວິດອັນຕລອດໄປເປັນນິດຕາມຄວາມຫວັງ" ( ຂໍ້ 7).* ພຣະເຈົ້າຊົງເມດຕາໂຜດປະທານໃຫ້ເຮົາພົ້ນຈາກການເປັນຂ້ອຍຂ້າຂອງກິເລດຕັນຫາ ເມື່ອເຮົາພົ້ນຈາກສິ່ງນັ້ນແລ້ວເຮົາຈຶ່ງໄດ້ຮັບການປ່ຽນແປງພາຍໃນຈິດໃຈສຳນຶກຜິດແລະຊອບ ຈຶ່ງສາມາດເບິ່ງເຫັນຄວາມເປັນທາດຂອງສິ່ງຊົ່ວຮ້າຍໃນອະດີດ. ໂປໂລບອກອີກວ່າທີ່ເຮົາພົ້ນນັ້ນບໍ່ແມ່ນຍ້ອນ ຄຸນງາມຄວາມດີຫລືບຸນເຮົາສ້າງມາແຕ່ປາງໃດ ແຕ່ເປັນຍ້ອນພຣະເມດຕາຂອງພຣະເຈົ້າເພິ່ນຈຶ່ງຊຳຣະເຮົາໃຫ້ກາຍເປັນຄົນບໍຣິສຸດດ້ວຍເຫດນີ້ ໂປໂລຈຶ່ງສັ່ງຫ້າມບໍ່ໃຫ້ໝິ່ນປມາດຜູ້ໃດ. ຄຣິສຕຽນທີ່ຢູ່ໃຕ້ການນຳພາຂອງຕີໂຕໄດ້ຮັບການຊຳຣະລ້າງຈາກພຣະເຈົ້າ ດັ່ງນັ້ນພວກເຂົາເຈົ້າຈຶ່ງກາຍເປັນຄົນບໍຣິສຸດແລະຕຽມຮັບມໍຣະດົກອັນຕລອດໄປເປັນນິດໃນຟ້າສວັນ.

**<u>ຄໍາແນະນໍາທີ່ສໍາຄັນ 3:8-9</u>**

*"ຄໍານີ້ເປັນຄໍາສັດຈິງ"* (ຂໍ້ 8ກ) ໝາຍຄວາມວ່າເປັນຄໍາແນະນໍາໃຫ້ປະຕິບັດຢ່າງເຄັ່ງຄັດໂດຍບໍ່ມີຂໍ້ຫລີກລ້ຽງຢ່າງໃດຢ່າງນຶ່ງ ເຮົາຈະເຫັນໃນຄໍາເວົ້າຕໍ່ໄປວ່າ *"ເຮົາປາຖນາໃຫ້ເຈົ້າເນັ້ນໃນເຣື່ອງເຫລົ່ານີ້ ເພື່ອຄົນທີ່ເຊື່ອໃນພຣະເຈົ້າແລ້ວຈະເອົາໃຈໃສ່ໃນການເຮັດດີ"* (ຂໍ້ 8ຂ).ເຣື່ອງເຫລົ່ານີ້ທີ່ໂປໂລກ່າວແມ່ນເຣື່ອງການເຮັດດີມັນເປັນໜ້າທີ່ຂອງຄຣິສຕຽນຈະຕ້ອງເຮັດເພາະການເຮັດດີເປັນຫລັກທັມອັນນຶ່ງຂອງຄົນທີ່ເຊື່ອພຣະເຈົ້າ, ການເຮັດດີທີ່ໂປໂລກ່າວນີ້ບໍ່ແມ່ນເຮັດດີແກ່ຍາດພີ່ນ້ອງຂອງຕົນເທົ່ານັ້ນ ແຕ່ແມ່ນໃຫ້ເຮັດດີແກ່ຄົນທັງປວງໂດຍການເລີ້ມຕົ້ນດ້ວຍການເຮັດດີຕໍ່ຍາດພີ່ນ້ອງຮ່ວມຄວາມເຊື່ອເປັນຕົ້ນແມ່ນຄົນຢູ່ໃນໂບດດຽວກັນ *"ເຫດສັນນັ້ນຕາມທີ່ມີໂອກາດ ໃຫ້ພວກເຮົາເຮັດດີຕໍ່ຄົນທັງປວງແລະເປັນຕົ້ນວ່າຕໍ່ຄອບຄົວຮ່ວມຢູ່ໃນຄວາມເຊື່ອ"* (ຄາລາເຕັຽ 6:10). ຄໍາວ່າໂອກາດທີ່ພຣະຄັມພີກ່າວນັ້ນໝາຍເຖິງເວລາເຮົາຍັງມີຊີວິດຢູ່ ເພາະວ່າເວລາທີ່ເຮົາມີຊີວິດຢູ່ເຮົາກໍມີໂອກາດເຮັດຫລາຍຢ່າງ ແຕ່ເມື່ອໝົດຊີວິດແລ້ວໂອກາດກໍບໍ່ມີອີກຕໍ່ໄປ.

*"ເຈົ້າຈົ່ງເວັ້ນເສັຽຈາກການໂຈດຖຽງກັນຢ່າງໂງ່, ຈາກເຣື່ອງ* ~~ສໍາລັບ~~ *(ລໍາດັບ)ວົງກະກູນ, ຈາກການຜິດຖຽງກັນ, ແລະຈາກການວິວາດຕໍ່ສູ້ກັນດ້ວຍເຣື່ອງພຣະບັນຍັດ ເພາະເປັນການບໍ່ມີປະໂຫຍດທັງເປັນເຣື່ອງເປົ່າໆ"* (ຂໍ້ 10). <u>ໝາຍເຫດ:</u> ຂ້າພະເຈົ້າປ່ຽນຄໍາວ່າ *<u>ສໍາລັບ</u>* ມາເປັນ *<u>ລໍາດັບ</u>* ເພື່ອໃຫ້ສອດຄ່ອງກັບພຣະຄັມພີພາສາອື່ນໆ. ຄໍາເວົ້າໃນຂໍ້ 9 ນີ້ໂປໂລເຫັນຄຣິສຕຽນໃນເກາະຄຣີດທີ່ຢູ່ຜິດຖຽງກັນສອງປະການໃຫຍ່ຄື 1. ເຣື່ອງເຊື້ອສາຍຂອງບຸກຄົນໃນພຣະຄັມພີ ໂດຍສະເພາະຢ່າງຍິ່ງແມ່ນເຣື່ອງຂອງພຣະເຢຊູ. 2. ເຣື່ອງພຣະບັນຍັດຂອງໂມເຊໃນສມັຍບູຮານ. ຄວາມຈິງແລ້ວທັງສອງຢ່າງນີ້ຍັງມີການຖົກຖຽງກັນຈົນເຖິງເທົ່າທຸກວັນນີ້ ແຕ່ໂປໂລບອກວ່າເປັນການໄຮ້ປໂຍດ. ເຣື່ອງຂອງພຣະເຈົ້າບໍ່ມີໃຜເຂົ້າໃຈທັງໝົດດອກ ສິ່ງສໍາຄັນຄືເຮົາຕ້ອງປະຕິບັດໃນສິ່ງທີ່ຮູ້ແລ້ວ ແລະຮຽນຮູ້ໃນສິ່ງທີ່ບໍ່ຮູ້ເພື່ອຕຽມຕົວປະຕິບັດກໍຍັງດີກວ່າມາຖຽງກັນຈົນຜິດຖຽງແລ້ວເກີດແຕກແຍກກັນ.

<u>ຄໍາຖາມ:</u>

1. ເປັນຫຍັງຄຣິສຕຽນຈຶ່ງຕ້ອງເຮັດດີ ແລະຍັງຕ້ອງເຮັດດີກວ່າຄົນພາຍນອກ ແລະເຮັດດີຕໍ່ຄົນພາຍນອກ?

2. ການເຮັດດີ ມີຫຍັງແດ່?

3. ການນັບຖືກົດໝາຍບ້ານເມືອງຊ່ອຍຫຍັງແດ່ໃນການເປັນພະຍານຝ່າຍພຣະເຢຊູ?

4. ໂປໂລເວົ້າວ່າ ເມື່ອກ່ອນເຮົາທັງຫລາຍກໍເປັນຄົນໂງ່ ໝາຍຄວາມວ່າແນວໃດ?

5. ເປັນຂ້ອຍຂ້າຂອງກິເລດຕັນຫາແປວ່າຫຍັງ?

6. ເຮັດແນວໃດເຮົາຈຶ່ງພົ້ນຈາກການເປັນຂ້ອຍຂ້າຂອງກິເລດຕັນຫາ?

7. ທີ່ເຮົາທັງຫລາຍພົ້ນນັ້ນແມ່ນຍ້ອນອັນໃດ?

*ສຈ. ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນທີ 13
# ຂ່າວປະເສີດປ່ຽນໄດ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຟີເລໂມນ

**ຂໍ້ພຣະຄັມພີທັງໝົດສຳລັບບົດຮຽນນີ້:** ຟີເລໂມນ

**ຈຸດສຳຄັນຂອງບົດຮຽນນີ້:** ຂ່າວປະເສີດເປັນພື້ນທາງຄວາມສັມພັນທີ່ຫ່າງຫາຍໃຫ້ຄືນມາ

**ຄຳຖາມເພື່ອການສຳຣວດ:** ເຮົາຈະເຮັດແນວໃດເພື່ອຈະເອົາພຣະເຢຊູເປັນສາຍສັມພັນ

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຕັດສິນໃຈເອົາພຣະເຢຊູເປັນພື້ນທາງແຫ່ງຄວາມສັມພັນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ໂປໂລຂຽນຈົດໝາຍສັ້ນເຖິງຟີເລໂມນເພື່ອຊ່ອຍ ໂອເນຊີໂມ (Onesimus) ແລະຟີເລໂມນໃຫ້ຍອມຮັບຊຶ່ງກັນແລະກັນ ຈົດໝາຍນີ້ເຖິງມັນຈະສັ້ນໄປແດ່ແຕ່ກໍມີເນື້ອໃນທີ່ໜັກແໜ້ນ ໃນເຣື່ອງຂ່າວປະເສີດ ເຣື່ອງເປັນສາຍສັມພັນກັບຜູ້ອື່ນ ແລະຍັງເປັນສາຍສັມພັນປົວແປງຄວາມສັມພັນທີ່ແຕກຫັກໃຫ້ດີເປັນປົກກະຕິອີກ. ເຣື່ອງມີດັ່ງນີ້; ຄາວກ່ອນໂອເນຊິເມ ເປັນຂ້າທາດຮັບໃຊ້ຟີເລໂມນ, ຕໍ່ມາໂອເນຊີເມໄດ້ລັກເຄື່ອງຂອງໃນເຮືອນເຈົ້ານາຍແລະໂຕນໜີໄປເມືອງໄກ ຕໍ່ມາໂອເນຊີເມກາຍເປັນຄຣິສຕຽນຍ້ອນການປະກາດຂອງໂປໂລ ແລ້ວໂອເນຊີເມຈຶ່ງກາຍເປັນຜູ້ສົ່ງຈົດໝາຍຂອງໂປໂລໃນຂະນະທີ່ເພິ່ນຢູ່ໃນຄຸກທີ່ກຸງໂຣມ. ຫລັງຈາກໂປໂລຮູ້ຊີວະປະຫວັດຄວາມເປັນມາຂອງໂອເນຊີເມແລ້ວຈຶ່ງຂຽນຈົດໝາຍໄປຫາທ່ານຟີເລໂມນ ໂດຍແມ່ນໂອເນຊີເມເປັນຜູ້ຖືຈົດໝາຍໄປ ເພື່ອຂໍຮ້ອງໃຫ້ ຟີເລໂມນໃຫ້ອະພັຍໂອເນຊີເມ ຂ້າທາດໂຕນໜີ. ໂປໂລເຫັນແກ່ຂ່າວປະເສີດເຣື່ອງພຣະເຢຊູຄຣິດຈຶ່ງວາງແຜນໃຫ້ທັງສອງຄືນດີກັນ

## ໂປໂລແນະນຳຕົວເອງ ຂໍ້ 1-3

ໃນສມັຍບູຮານຈະເລີ່ມຕົ້ນຈົດໝາຍວ່າມາຈາກໃຜ ແລະເຖິງຜູ້ໃດ ຊຶ່ງມີຄວາມແຕກຕ່າງກັບສມັຍນີ້ທີ່ບໍ່ໄດ້ບອກວ່າມາຈາກໃຜ ແຕ່ບອກວ່າເຖິງຜູ້ນັ້ນຜູ້ນີ້ ແລະຈະລົງທ້າຍດ້ວຍຄຳວ່າ ຈາກຜູ້ນັ້ນຜູ້ນີ້. ໂປໂລໄດ້ເລີ່ມຕົ້ນຈົດໝາຍວ່າ *"ໂປໂລ ຜູ້ຖືກຈຳຈອງຢູ່ໃນພຣະຄຣິດ ແລະຕີໂມທຽວນ້ອງຊາຍຂອງເຮົາ ເຖິງຟີເລໂມນເພື່ອນຮ່ວມງານທີ່ຮັກຂອງເຮົາ ກັບຄຣິສຕະຈັກຢູ່ໃນເຮືອນຂອງເຈົ້າ" (ຂໍ້ 1-2).* ສັງເກດຄຳເວົ້າຂອງໂປໂລທີ່ເວົ້າວ່າ *ໂປໂລ ຜູ້ຖືກຈຳຈອງຢູ່ໃນພຣະຄຣິດ* ຄ້າຍຄືວ່າເປັນຈຳເລີຍໃນພຣະເຢຊູຄຣິດ ແຕ່ເພິ່ນຢາກບອກວ່າເປັນຂ້ອຍໃຊ້ຂອງພຣະເຢຊູຄຣິດຕລອດຊີວິດ, ເພິ່ນຂຽນຈົດໝາຍສະບັບນີ້ໃນຂະນະທີ່ເພິ່ນຕິດຄຸກໃນກຸງໂຣມ ເພິ່ນຂຽນເຖິງຟີເລໂມນ ຜູ້ຮັບເຊື່ອພຣະເຈົ້າໃນເວລາເພິ່ນມາປະກາດທີ່ເມືອງເອເຟໂຊ (ກິຈການ 19:10) ຫລັງຈາກທ່ານຟີເລໂມນຮັບເຊື່ອ ພຣະເຈົ້າກໍກາຍເປັນເພື່ອນຮ່ວມ

ງານກັບໂປໂລ ດ້ວຍເຫດນີ້ໂປໂລຈຶ່ງໃຊ້ຄຳວ່າ *ເຖິງຟີເລໂມນເພື່ອນຮ່ວມງານ ທີ່ຮັກຂອງເຮົາ.* ຈົດໝາຍທີ່ຂຽນນັ້ນຍັງອອກຊື່ຄຣິສຕະຈັກໃນເຮືອນຂອງຟີເລໂມນອີກຊຶ່ງເປັນເຄື່ອງບອກໃຫ້ເຮົາຮູ້ວ່າ ຟີເລໂມນ ເປັນອາຈານ ແລະເພິ່ນເອົາເຮືອນເພິ່ນເອງເປັນໂບດ. ໃນເວລານັ້ນໂບດສ່ວນຫລາຍແມ່ນເລີ່ມຕົ້ນທີ່ເຮືອນແລ້ວກໍກາຍເປັນໂບດໃຫຍ່

ໃນຂໍ້ 3 ພໍຈະສລູບຄວາມໄດ້ວ່າ ໂປໂລຂຽນຈົດໝາຍເຖິງຟີເລໂມນເປັນການສ່ວນຕົວກໍຈິງ ແຕ່ຍັງເປັນປໂຍດແກ່ຄຣິສຕະຈັກໃນເຮືອນຂອງອາຈານຟີເລໂມນຄືກັນເພາະຈົດໝາຍເວົ້າວ່າ *"ຂໍພຣະຄຸນແລະສັນຕິສຸກຈາກພຣະບິດາເຈົ້າຂອງເຮົາທັງຫລາຍແລະຈາກພຣະເຢຊູຄຣິດເຈົ້າ ຈົ່ງຢູ່ກັບເຈົ້າທັງຫລາຍເທີ້ນ"* (ຂໍ້ 3). ໃນສມັຍໂປໂລຍັງບໍ່ທັນເຊື່ອພຣະເຈົ້າໂປໂລເອງໄດ້ໃຊ້ອຳນາດທາງປົກຄອງກົດຂີ່ຂົ່ມເຫງຈັບກຸມພວກຄຣິສຕຽນ ຕາມຄຣິສຕະຈັກໃນເຮືອນໄປຂັງຄຸກ (ກິຈການ 8:3) ເພື່ອປາບຄຣິສຕຽນໃຫ້ດັບສູນ, ຕົກມາໃນເວລານີ້ໂປໂລເອງໄດ້ຂໍພຣະຄຸນແລະສັນຕິສຸກຊຶ່ງມາຈາດພຣະແຈ້າໄດ້ໂປຣດຄຸ້ມຄອງຄຣິສຕຽນຕາມຄຣິສຕະຈັກບ້ານເຮືອນຕ່າງໆອີກດ້ວຍ, ຫລັງຈາກເພິ່ນມາຮູ້ຈັກກັບພຣະເຈົ້າແລ້ວຊີວິດຂອງເພິ່ນກໍປ່ຽນແປງ. ເຣື່ອງຊີວິດທີ່ປ່ຽນແປງນີ້ ບໍ່ແມ່ນຈະເກີດຂື້ນກັບໂປໂລຄົນດຽວແຕ່ຈະເກີດຂື້ນກັບທຸກຄົນທີ່ຍອມເຊື່ອໃນພຣະເຢຊູຄຣິດ.

## <u>ໂປໂລພໍໃຈຟີເລໂມນ ຂໍ້ 4-10</u>

ໂປໂລຂອບພຣະຄຸນພຣະເຈົ້າສຳລັບຄວາມຮັກແລະຄວາມເຊື່ອທີ່ຟີເລໂມນມີຕໍ່ອົງພຣະຜູ້ເປັນເຈົ້າ, ຍ້ອນຄວາມເຊື່ອຂອງຟີເລໂມນນັ້ນຈຶ່ງເກີດມີຜົນໃຫ້ລາວຮູ້ຈັກຄວາມດີທຸກຢ່າງໃນອົງພຣະເຢຊູຄຣິດ, ສິ່ງເຫລົ່ານີ້ເຮັດໃຫ້ໂປໂລພໍໃຈໃນຕົວຂອງຟີເລໂມນໂດຍກ່າວວ່າ *"ນ້ອງເອີຍເຮົາມີຄວາມດີໃຈຫລາຍ ແລະໄດ້ຮັບຊູໃຈເພາະຄວາມຮັກຂອງເຈົ້າຈິດໃຈຂອງໄພ່ພົນຂອງພຣະເຈົ້າໄດ້ຊຸ່ມເຢັນຂື້ນເພາະເຈົ້າ"* (ຂໍ້ 7). ຟີເລໂມນເອງໄດ້ຮັບເຊື່ອພະເຈົ້າໂດຍການປະກາດຂອງໂປໂລທີ່ເມືອງເອເຟໂຊໃນຄາວກ່ອນ ຈຶ່ງເປັນເຫດຜົນອັນນຶ່ງທີ່ໂປໂລມີຄວາມພູມໃຈທີ່ເຫັນຄົນຂອງເພິ່ນຈະເຣີນຂື້ນທາງຄວາມຮັກແລະຄວາມເຊື່ອ, ການກະທຳຂອງຟີເລໂມນເປັນກຳລັງໃຈໃຫ້ໂປໂລບໍ່ແມ່ນຂອງນ້ອຍ. ຊຶ່ງມັນບໍ່ແຕກຕ່າງຫຍັງເມື່ອເຮົາເຫັນລູກຂອງເຮົາໄດ້ດີໃນຊີວິດຂອງເຂົາເຈົ້າເຮົາກໍພູມໃຈ, ໂປໂລເຫັນຟີເລໂມນເປັນຄືເພື່ອນຮ່ວມງານແລະເປັນຄືນ້ອງຊາຍ (ຂໍ້ 7).

ໂປໂລເປັນສາວົກທີ່ມີອຳນາດພຽງພໍທີ່ຈະສັ່ງການ ແຕ່ເພິ່ນບໍ່ໃຊ້ອຳນາດນັ້ນ ແຕ່ກັບໃຊ້ຖ້ອຍຄຳອັນອ່ອນຫວານຂໍຮ້ອງຟີເລໂມນແທນໂອເນຊິມ *"ເຫດສັນນັ້ນ, ເຖິງແມ່ນວ່າຍ້ອນເຮົາເປັນພີ່ນ້ອງກັນໃນພຣະຄຣິດ ເຮົາມີໃຈກ້າພໍທີ່ຈະສັ່ງເຈົ້າໃຫ້ເຮັດສິ່ງທີ່ຄວນເຮັດ ແຕ່ເພາະເຫັນແກ່ຄວາມຮັກເຮົາຈຶ່ງຂໍຮ້ອງເຈົ້າກໍດີກວ່າ ເຮົາ, ຄືໂປໂລຜູ້ເປັນຣາຊທູດຂອງພຣະຄຣິດ ແລະບັດນີ້ໄດ້ຖືກຈຳຈອງເພາະເຫັນແກ່ພຣະອົງດ້ວຍ ເຮົາຂໍຮ້ອງເຈົ້າ ເຣື່ອງໂອເນຊິມ"* (ຂໍ້ 10). ໂປໂລໄດ້ຂໍຮ້ອງຟີເລໂມນຕາງໜ້າຂອງໂອເນຊິມມ ຂ້າທາດໂຕນໜີຈາກຟີເລໂມນ.

## <u>ຈຸດປະສົງຂອງຈົດໝາຍ 11-21</u>

*"ລາວບໍ່ເປັນປໂຍດແກ່ເຈົ້າ ແຕ່ບັດນີ້ກໍເປັນປໂຍດແກ່ເຈົ້າແລະເຮົາເໝືອນກັນ ບັດນີ້ເຮົາໃຊ້ລາວຄືນມາຫາເຈົ້າ"* (ຂໍ້ 12) ສມັຍໂອເນຊິມເປັນຂ້າທາດຢູ່ໃນເຮືອນຂອງຟີເລໂມນັ້ນ ລາວກໍເປັນປໂຍດແທ້ ແຕ່ເມື່ອລາວກາຍເປັນຂະໂມຍລັກຂອງໃນເຮືອນແລ້ວໂຕນໜີໄປເມືອງໄກ ລາວກໍກາຍເປັນຄົນຊົ່ວທີ່ໃຊ້ການບໍ່ໄດ້, ພາຍລຸນມາລາວໄດ້ເຊື່ອພຣະເຈົ້າໂດຍການປະກາດຂອງໂປໂລງຈຶ່ງກ່າວວ່າ *ແຕ່ບັດນີ້ກໍເປັນປໂຍດແກ່ເຈົ້າແລະເຮົາເໝືອນກັນ <u>ບັດນີ້ເຮົາໃຊ້ລາວຄືນມາຫາເຈົ້າ</u>* ນີ້ເປັນການຂໍຮ້ອງຢ່າງຍິ່ງໃຫຍ່ສຳລັບໂປໂລ ແລະກໍເປັນການຍອມຮັບຢ່າງຍິ່ງໃຫຍ່ຂອງຟີເລໂມນຄືກັນ ດ້ວຍວ່າຂ້າທາດຜູ້ນີ້ໄດ້ສ້າງຄວາມຕຶງຄຽດອັນໃຫຍ່ຫລວງຕໍ່ເຈົ້ານາຍ ລັກໜີແລ້ວຍັງລັກເຄື່ອງເຮືອນອີກ ແຕ່ໂປໂລຜູ້ເປັນອາຈານຂອງຟີເລໂມນກັບໃຊ້ຂ້າທາດຜູ້ນີ້ກັບມາຫາເຈົ້ານາຍເດີມ ດັ່ງນັ້ນຈຶ່ງເປັນການລຳບາກພາຍໃຈຈິດໃຈທັງສາມຄົນຄື; 1.ໂປໂລຂໍຮ້ອງຟີເລໂມນໃນເຣື່ອງບໍ່ໜ້າອະພັຍ. ໒. ຟີເລໂມນລຳບາກໃນການຕັດສິນໃຈ.

3. ຂ້າທາດໂອເນຊີມສ່ຽງຊີວິດກັບຄືນຫາເຈົ້ານາຍຜູ້ຕົນເອງເຮັດຊົ່ວຕໍ່ເພິ່ນ. 4. ແຕ່ກ່ອນໂອເນຊີມເປັນຂ້າທາດ ແຕ່ເມື່ອມາເປັນຄຣິສຕຽນແລ້ວກໍສເມີກັນໃນຖານະຄຣິສຕຽນ.

ຄວາມຈິງແລ້ວໂປໂລຢາກເອົາໂອເນຊີມເປັນຜູ້ຊ່ອຍໃນວຽກງານການປະກາດ ໃນຂະນະທີ່ເພິ່ນຢູ່ໃນຄຸກທີ່ກຸງໂຣມ (ກິຈການ 28:30-31) ເພາະເພິ່ນເອງອອກໄປປະກາດບໍ່ໄດ້ຈຳເປັນຕ້ອງອາສັຍຄົນຂ້າງນອກເປັນຜູ້ສົ່ງຈົດໝາຍໄປຫາຄຣິສຕະຈັກຕ່າງໆ ແຕ່ໂປໂລບໍ່ກ້າທີ່ຈະເອົາໂອເນຊີມມາເປັນຜູ້ຊ່ອຍສົ່ງຈົດໝາຍຈົນກວ່າຟີເລໂມນເຫັນພ້ອມ ທັງນີ້ກໍເພາະວ່າຕາມກົດໝາຍແລ້ວ ໂອເນຊີມຍັງເປັນຂ້າທາດຂອງເຝລີໂມນຢູ່ (ຂໍ້ 15). *"ເຫດສັນນັ້ນຖ້າເຈົ້າຖືວ່າເຮົາເປັນເພື່ອນຮ່ວມງານຂອງເຈົ້າກໍຈົ່ງຮັບລາວໄວ້ເໝືອນຮັບຕົວເຮົາເອງ ແລະຖ້າລາວໄດ້ເຮັດຜິດພາດຕໍ່ເຈົ້າປະການໃດ ຫລືເປັນໜີ້ເຈົ້າກໍຂໍໃຫ້ເຈົ້າຄິດເອົານຳເຮົາ"* (ຂໍ້ 17). ຄຳເວົ້າໃນຕອນນີ້ມີນ້ຳໜັກຢູ່ສອງປະການຄື; 1. *ເຫດສັນນັ້ນຖ້າເຈົ້າຖືວ່າເຮົາເປັນ ເພື່ອນຮ່ວມງານຂອງເຈົ້າກໍຈົ່ງຮັບລາວໄວ້ເໝືອນຮັບຕົວເຮົາເອງ.* ຫລືເວົ້າອີກຄວາມນຶ່ງວ່າຫາກເຈົ້າຖືວ່າເຮົາຍັງເພື່ອນຢູ່ກໍໃຫ້ເຈົ້າຮັບ ໂອເນຊີມຄືກັນ. 2. *ຖ້າລາວໄດ້ເຮັດຜິດພາດຕໍ່ເຈົ້າປະການໃດຫລືເປັນໜີ້ເຈົ້າກໍຂໍໃຫ້ເຈົ້າຄິດເອົານຳເຮົາ.* ແປວ່າຫາກໂອເນຊີມໄດ້ຕິດໜີ້ເຈົ້າຫລືລັກເຄື່ອງເຈົ້າເມື່ອຄາວກ່ອນເຮົາຂໍເປັນຄົນໃຊ້ໜີ້ໃຫ້ລາວທັງໝົດ ຊຶ່ງເປັນການຄ້ຳປະກັນດ້ວຍຕົວເພິ່ນເອງ.

*"ຝ່າຍເຮົາໄດ້ລົງມືຂຽນໄວ້ວ່າ ເຮົາ, ໂປໂລ ຈະໃຊ້ແທນໃຫ້ ແຕ່ສ່ວນເຈົ້າທີ່ເປັນໜີ້ເຮົານັ້ນ ຄືຊີວິດຂອງເຈົ້າເອງ ເຮົາຈະບໍ່ອ້າງເຖິງ ດັ່ງນີ້ແຫລະນ້ອງເອີຍ, ຂໍໃຫ້ເຮົາໄດ້ຮັບປ ໂຍດຈາກເຈົ້າເພາະເຫັນແກ່ອົງພຣະຜູ້ເປັນເຈົ້າ ໃຫ້ໃຈຂອງເຮົາຊຸ່ມເຢັນຂຶ້ນຖານະທີ່ເປັນຄຣິສຕຽນຮ່ວມກັນ"* (ຂໍ້ 20) . ໂປໂລເວົ້າໝັກວ່າຟີເລໂມນເປັນໜີ້ຊີວິດ ຈະບໍ່ອ້າງເຖິງມີຄຳໝາຍວ່າ ເຈົ້າເອງເປັນຄຣິສຕຽນກໍຍ້ອນການປະກາດຂອງເຮົາ ແຕ່ເຮົາຈະບໍ່ເວົ້າເຖິງ ດັ່ງນັ້ນຫາກເຈົ້າບໍ່ຍອມຮັບໂອເນຊີມາກໍໃຫ້ຄິດເຖິງວ່າເຈົ້າເປັນໜີ້ເຮົາ.

ໂປໂລຍັງຢ້ຳອີກວ່າ *"ເຮົາມີຄວາມໝັ້ນໃຈວ່າເຈົ້າຈະເຊື່ອຟັງເຮົາ ຈຶ່ງຂຽນຈົດໝາຍນີ້ມາເຖິງເຈົ້າ ເພາະເຮົາຮູ້ດີວ່າເຈົ້າຈະເຮັດລື່ນກວ່າສິ່ງທີ່ເຮົາເວົ້າອີກ"* (ຂໍ້ 21). ແປວ່າເຈົ້າຄົງບໍ່ປະຕິເສດຄຳສັ່ງຂອງເຮົາ ຈົນຍອມຮັບໂອເນຊີມໃນຖານະເປັນຄຣິສຕຽນດ້ວຍກັນ ແລະຍັງຫວັງໃຈວ່າເຈົ້າຈະຄົງຈະກັບເຮັດກັບໂນເອຊີມຫລາຍກວ່າເຮົາສັ່ງເຈົ້າອີກ. ໂປໂລຂຽນຈົດໝາຍນີ້ດ້ວຍຄວາມແນ່ໃຈວ່າ ຟີເລໂມນຈະຕ້ອງປະຕິບັດຕາມຄວາມເພິ່ນທຸກປະການ ຫລືບາງທີ່ໂອເນຊີມອາຈບອກໂປໂລວ່າລາວບໍ່ກ້າຈະກັບໄປຫາຟີເລໂມນອີກ ແຕ່ໂປໂລອາຈບອກລາວວ່າບໍ່ຕ້ອງຢ້ານຟີເລໂມນຈະບໍ່ເຮັດອັນຕະລາຍໃດໆແກ່ເຈົ້າ. ດ້ວຍເຫດນີ້ໃນຈົດໝາຍຈຶ່ງເວົ້າວ່າ *ເຮົາມີຄວາມໝັ້ນໃຈວ່າເຈົ້າຈະເຊື່ອຟັງເຮົາຈຶ່ງຂຽນຈົດໝາຍນີ້ມາເຖິງເຈົ້າ ເພາະເຮົາຮູ້ດີວ່າເຈົ້າຈະເຮັດລື່ນກວ່າສິ່ງທີ່ເຮົາເວົ້າອີກ"* (ຂໍ້ 21)

**<u>ຄຳມ້ອນທ້າຍ ຂໍ້ 22-25</u>**

ໂປໂລລົງທ້າຍຈົດໝາຍໂດຍບອກວ່າຈະມາຫາຕາມຄວາມອ້ອນວອນຂອງຟີເລໂມນ *"ແຕ່ຢ່າງໃດກໍດີຈົ່ງຈັດແຈງທີ່ພັກໄວ້ຖ້າເຮົາ ເພາະເຮົາຫວັງໃຈວ່າພຣະເຈົ້າຈະຊົງໂຜດໃຫ້ເຮົາມາຫາເຈົ້າອີກ ຕາມຄຳອ້ອນວອນຂອງພວກເຈົ້າ"* (ຂໍ້ 22). ໂປໂລຫວັງໃຈວ່າຫລັງຈາກຖືກປ່ອຍຈາກຄຸກໃນກຸງໂຣມແລ້ວຈະມາຫາຟີເລໂມນ ແຕ່ເຮົາບໍ່ເຫັນພຣະຄັມພີບ່ອນໃດບອກວ່າໂປໂລກັບຄືນໄປຢາມຟີເລໂມນອີກ. ການທີ່ໂປໂລບອກວ່າຈະມາຫາຟີເລໂມນເປັນອີກຄຳເວົ້ານຶ່ງທີ່ຊັກຈູງຈິດໃຈຟີເລໂມນໃຫ້ຍອມຮັບໂອເນຊີມ. ທ້າຍສຸດຂອງຈົດໝາຍໂປໂລໄດ້ຝາກຄວາມຄິດຮອດຄິດເຖິງບັນດາພວກເຖົ້າແກ່ແລະຜູ້ປົກຄອງອີກຫລາຍຄົນ.

<u>ຄຳຖາມ:</u>

1. ຟີເລໂມນ ແລະໂອເນຊີມ ແມ່ນໃຜ?

2. ເປັນຫຍັງໂປໂລຈຶ່ງຂຽນຈົດໝາຍເຖິງຟີເລໂມນ?

3. ແມ່ນໃຜເປັນຜູ້ຖືຈົດໝາຍສະບັບນັ້ນສົ່ງໃຫ້ ຟີເລໂມນ?

4. ເປັນຫຍັງໂປໂລຈຶ່ງມີຄວາມແນ່ໃຈວ່າຟີເລໂມນຈະຟັງຄວາມເພິ່ນ?

5. ຟີເລໂມນ ແລະໂອເນຊີເມຄືນດີກັນກັດ້ວຍເຣື່ອງອັນໃດ?

6. ບົດຮຽນນີ້ສອນຫຍັງທ່ານແດ່?

*ສຈ. ດຣ. ຄຸນພັນ ວົງສຸຣິດທ໌*